## ບົດທີ 1

## ພຣະຄຳພີ

1. **ພຣະຄຳພີແມ່ນຫຍັງ?**

ກ. ຄຳວ່າ ພຣະຄຳພີໝາຍເຖິງ ໜັງສືທີ່ເປັນການສຳແດງ ຫລືເປີດເຜີຍເລື່ອງຂອງພະເຈົ້າ ເພື່ອ ໃຫ້ມະນຸດໄດ້ຮູ້ຈັກກັບພະເຈົ້າ

ຂ. ພະຄຳພີໄດ້ແບ່ງເປັນ 2 ຄື:

1. ພະຄຳພີເດີມ: ມີ 39 ເຫຼັ້ມ ແລະ ໃນ 39 ເຫຼັ້ມນີ້ແບ່ງອອກເປັນໝວດຄື: ໝວດພະບັນຍັດ, ໝວດບົດກະວີ ແລະ ໝວດຜູ້ເຜີຍພະວັດຈະນະ.
2. ພະຄຳພີໃໝ່: ມີ 27 ເຫຼັ້ມ ແລະ ໃນ 27 ເຫຼັ້ມແບ່ງອອກເປັນ 4 ໝວດຄື: ໝວດພຣະກິດຕິຄຸນ, ໝວດປະຫວັດສາດ, ໝວດຈົດໝາຍຝາກ ແລະ ພະນິມິດ

ງ. ການຂຽນພະຄຳພີເດີມ ໃຊ້ເວລາປະມານ 1000 ກ່ວາປີ ແລະ ພະຄຳພີໃໝ່ ໃຊ້ເວລາຂຽນປະມານ 100 ກ່ວາປີ.

2. **ໃຜເປັນຜູ້ຂຽນປະພັນພະຄຳພີ?**

ພະຄຳພີຂຽນຂຶ້ນໂດຍໄດ້ຮັບການດົນໃຈຈາກພະເຈົ້າ
"ເພາະວ່າຄຳຂອງຜູ້ເຜີຍພະວັດຈະນະນັ້ນ ບໍ່ໄດ້ມາຈາກ
ຄວາມຄິດໃນຈິດໃຈຂອງມະນຸດ ແຕ່ມະນຸດໄດ້ກ່າວຄຳ
ຊຶ່ງລົງມາຈາກພະເຈົ້າຕາມທີ່ພະວິນຍານບໍລິສຸດໄດ້ຊົງດົນ
ໃຈເຂົາ. (2 ເປໂຕ 1:21)
ພະເຈົ້າໄດ້ຊົງເລືອກຄົນທີ່ຂຽນພະຄຳພີ ຄົນເຫຼົ່ານີ້ເປັນຄົນທີ່ມີຄວາມສາມາດ
ແລະມີຊີວິດທີ່ບໍລິສຸດ ແລະ ເຂົາໄດ້ຮັບ"ການດົນໃຈ" ຫຼື ການຊົງນຳຈາກພະເຈົ້າໃນ
ສິ່ງທີ່ຈະຂຽນ. 2ຕີໂມທີ 3:16.

3. **ພະຄຳພີຖືກຂຽນກ່ຽວກັບໃຜ**

"ທ່ານທັງຫຼາຍຄົ້ນເບິ່ງໃນພະຄຳພີ ເພາະທ່ານຄິດວ່າມີຊີວິດນິລັນດອນ ແລະ ພະຄຳພີ ນັ້ນເປັນພະຍານແກ່ເຮົາ" ໂຢຮັນ 5:39; ລູກາ 24:25-27

4. **ພະຄຳພີຕ້ອງການໃຫ້ເຮົາຮູ້ຫຍັງກ່ຽວກັບພະເຢຊູຄຣິດ**

"ແຕ່ການທີ່ໄດ້ບັນທຶກເຫດການເຫຼົ່ານີ້ໄວ້ກໍເພື່ອທ່ານທັງຫຼາຍຈະໄດ້ເຊື່ອວ່າ ພະເຢຊູຊົງ ເປັນພຣະຄຣິດ ພຣະບຸດຂອງພະເຈົ້າ ແລະ ເມື່ອມີຄວາມເຊື່ອແລ້ວ ທ່ານຈະມີຊີວິດໂດຍ ພຣະນາມຂອງພະອົງ" ໂຢຮັນ 20:31

**5. ເປັນຫຍັງຄຣິດສຽນຕ້ອງຮູ້ພະຄໍາພີ**

"ເຊັ່ນດຽວກັບເດັກນ້ອຍເກີດໃໝ່ ຈົ່ງປາຖະໜານໍ້ານົມຝ່າຍວິນຍານອັນບໍລິສຸດ ເພື່ອໂດຍນໍ້ານົມນັ້ນຈະທໍາໃຫ້ທ່ານທັງຫຼາຍຈະເລີນຂຶ້ນສູ່ຄວາມລອດ" 1 ເປໂຕ 2:2

**6. ພະຄໍາພີມີປະໂຫຍດ 4 ຢ່າງຕໍ່ຊີວິດຄຣິດສຽນ**

"ພະຄໍາພີທຸກຕອນໄດ້ຮັບການດົນໃຈຈາກພະເຈົ້າ ແລະ ເປັນປະໂຫຍດໃນການສອນຕັກເຕືອນວ່າບອກ ການປັບປຸງແກ້ໄຂຄົນໃຫ້ດີ ແລະ ການອົບຮົມໃນທາງດີ" 2 ຕີໂມທີ 3:16

**7. ຫລັງຈາກເຮົາອ່ານພະຄໍາພີເຮົາຄວນທໍາແນວໃດ**

"...ຄົນທັງຫຼາຍທີ່ໄດ້ຖືຮັກສາພະວັດຈະນະນັ້ນໄວ້ກໍເປັນສຸກ" ລູກາ 11:28

"ແຕ່ທ່ານທັງຫຼາຍຈົ່ງເປັນຄົນທີ່ປະພຶດຕາມພະວັດຈະນະນັ້ນ ບໍ່ແມ່ນເປັນແຕ່ພຽງຜູ້ຟັງເທົ່ານັ້ນ ຊຶ່ງເປັນການລວງຕົນເອງ" ຢາໂກໂບ 1:22

**8. ໃນການເຊື່ອຟັງພຣະວັດຈະນະຂອງພະເຈົ້າ ມີຜົນຕໍ່ຊີວິດຂອງຄົນເຮົາຢ່າງໃດ**

ກ. ຊ່ວຍໃຫ້ເຮົາເປັນສາວົກທີ່ແທ້ຈິງ ໂຢຮັນ 8:31

ຂ. ປ້ອງກັນເຮົາຈາກຄວາມບາບ ເພັງສັນລະເສີນ 119:11

ຄ. ໄດ້ຮັບພະພອນຈາກພະເຈົ້າ ກິດຈະກໍາ 20:32

**9. ເປັນຫຍັງພະຄໍາພີຈຶ່ງມີປະໂຫຍດ**

"ເພາະວ່າພະວັດຈະນະຂອງພະເຈົ້ານັ້ນ ບໍ່ຕາຍ ແລະ ຊົງພະລານຸພາບສະເໝີ ຄົມຍິ່ງກ່ວາດາບສອງຄົມໃດໆ ແທງທະລຸຈິດແລະວິນຍານ ຕະຫຼອດຂໍ້ກະດູກ ແລະ ໄຂໃນກະດູກແລະສາມາດວິນິໄສຄວາມຄິດ ແລະ ຄວາມມຸ່ງໝາຍໃນໃຈດ້ວຍ"

**10. ເມື່ອພະເຢຊູຖືກທົດລອງພຣະອົງຊົງຊະນະການທົດລອງດ້ວຍວິທີໃດ**

ພຣະອົງຊົງໃຊ້ພຣະວັດຈະນະຂອງພະເຈົ້າ ມາກທາຍ 4:1-11

ສະຫຼຸບດັ່ງນີ້

(1) ພະຄໍາພີທັງໝົດເປັນອັນໜຶ່ງອັນດຽວກັນ ມີຜູ້ທີ່ຂຽນພະຄໍາພີປະມານ 40 ຄົນ ແລະ ໃຊ້ເວລາຫຼາຍກ່ວາ 1000 ປີ ແຕ່ເລື່ອງລາວທັງໝົດສອດຄ່ອງເປັນອັນໜຶ່ງອັນດຽວກັນຢ່າງສົມບຸນ.

(2) ໃຈຄວາມສໍາຄັນຂອງພະຄໍາພີ ໃນພະຄໍາພີທັງ 66 ເຫຼັ້ມມີໃຈຄວາມສໍາຄັນພຽງຢ່າງດຽວເທົ່ານັ້ນຄື ແຜນການແຫ່ງການໄຖ່ຂອງພະເຈົ້າທາງພະເຢຊູຄຣິດ

(3) ພະຄໍາພີເປັນໜັງສືເຫຼັ້ມດຽວທີ່ບໍ່ສາມາດທໍາລາຍໄດ້ ມີຄົນທີ່ພະຍາຍາມຈະທໍາລາຍພະຄໍາພີຫຼາຍຄັ້ງ ພະຄໍາພີເຄີຍຖືກລວບລວມມາເຜົາເມື່ອຖືກ

ສົງຄາມ ເຄີຍຖືກທຳລາຍໂດຍກຸ່ມຄົນທີ່ບໍ່ເຊື່ອ ແຕ່ເຖິງຢ່າງນັ້ນກໍຕາມ ໃນທຸກວັນນີ້ພະຄຳພີເປັນພຽງໜັງສືເຫຼັ້ມດຽວທີ່ຂາຍຫຼາຍທີ່ສຸດໃນໂລກ.

(4) ພະຄຳພີເປັນເລື່ອງສາກົນ ເລື່ອງໃນພະຄຳພີບໍ່ເຄີຍເກົ່າ ຫຼື ຫລ້າສະໄໝ ໃນພະຄຳພີຍັງຄົງສາມາດນຳມາປັບປຸງໃຊ້ໄດ້ໃນທຸກວັນນີ້.

(5) ພະຄຳພີເປັນສິ່ງທີ່ບໍ່ມີສິ້ນສຸດ ບໍ່ວ່າຈະອ່ານຫຼືສຶກສາເປັນຈັກຄັ້ງກໍຕາມ ຈະຄົ້ນພົບຄວາມຈິງໃໝ່ໆສະເໝີ.

## ບົດທີ່ 2

## ພະເຈົ້າ

### 1. ພະເຈົ້າເປັນໃຜ?

ພະເຈົ້າເປັນພະວິນຍານ ເຮົາບໍ່ອາດເຫັນພະອົງດ້ວຍຕາຂອງເຮົາພະອົງມອງເຫັນເຮົາໄດ້

"ພະເຈົ້າຊົງເປັນວິນຍານ ແລະ ຜູ້ທີ່ນະມັດສະການພະອົງຕ້ອງນະມັດສະການດ້ວຍຈິດວິນຍານແລະຄວາມຈິງ" (ໂຢຮັນ 4:24)

### 2. ມີພະເຈົ້າຈັກອົງ?

ມີພະເຈົ້າທ່ຽງແທ້ແຕ່ພຽງອົງດຽວ ພະອົງເປັນພະເຈົ້າທີ່ມີຄວາມຮັກແລະຊົງພະຊົນຢູ່

"ດ້ວຍເຫດວ່າມີພະເຈົ້າອົງດຽວ ແລະ ມີຄົນກາງແຕ່ຜູ້ດຽວ ລະຫວ່າງພະເຈົ້າ ກັບມະນຸດຄື ພະເຢຊູ ຜູ້ຊົງສະພາບເປັນມະນຸດ" (1 ຕີໂມທີ 2:5)

ນອກຈາກນີ້ຍັງມີຂໍ້ພະທຳໃນ ມັດທາຍ 22:23; ອີຊາຢາ 44:6, ລູກາ 20:38

### 3. ພະເຈົ້າສາມາດສອດສ່ອງດູແລໂລກທັງໂລກໄດ້ຢ່າງໃດ?

ພະອົງທຳໄດ້ເພາະພະອົງຊົງມີລິດອຳນາດຫຼວງຫຼາຍ ມີດວງອາທິດໃນທ້ອງຟ້າແຕ່ພຽງດວງດຽວສັນໃດ ພະເຈົ້າຊື່ງປົກຄອງໂລກທັງໂລກກໍມີພະອົງດຽວສັນນັ້ນ ດວງອາທິດໃນທ້ອງຟ້າບໍ່ໄດ້ເປັນຂອງປະເທດໜຶ່ງປະເທດໃດ ພະເຈົ້າກໍບໍ່ໄດ້ເປັນສິດຂອງປະເທດໜຶ່ງປະເທດໃດ ພະອົງເປັນພະເຈົ້າຂອງສັບພະສິ່ງທັງປວງ ແຕ່ເຖິງຢ່າງນັ້ນ ຫຼາຍໆຄົນບໍ່ໄດ້ຍອມຮັບພະອົງ

"ພະເຈົ້າຜູ້ຊົງສ້າງໂລກກັບສິ່ງທັງປວງທີ່ມີຢູ່ໃນນັ້ນ ພະອົງຊົງເປັນເຈົ້າແຫ່ງຟ້າ ແລະ ແຜນດິນ ໂລກ ບໍ່ໄດ້ຊົງສະຖິດຢູ່ໃນປູຊະນີຍະສະຖານຊຶ່ງມີມະນຸດໄດ້ກະທຳໄວ້" (ກິດຈະການ 17:24)

### 4. ພະເຈົ້າມາຈາກໃສ?

ພະເຈົ້າຊົງພະຊົນຢູ່ແລະສືບໆໄປເປັນນິດ ພະອົງບໍ່ມີທີ່ເລີ່ມຕົ້ນ ແລະ ທີ່ສິ້ນສຸດ ນີ້ເປັນຄວາມຈິງທີ່ເຮົາບໍ່ອາດເຂົ້າໃຈໄດ້ ແຕ່ພະຄຳພີບອກເຮົາວ່າ ເປັນຄວາມຈິງ

"ໃນປະຖົມມະການພະເຈົ້າ..." (ປະຖົມມະການ 1:1)

"ພະເຈົ້າພະບໍຣິມມະຫາກະສັດແຫ່ງອິສລາເອນ ແລະ ຜູ້ໄຖ່ຂອງເຂົາຄື ພະເຈົ້າຈອມລາຊາກ່າວດັ່ງນີ້ວ່າ
ເຮົາເປັນຜູ້ຕົ້ນເຮົາເປັນຜູ້ປາຍນອກຈາກເຮົາແລ້ວບໍ່ມີພະເຈົ້າອື່ນ"
(ອິຊາຢາ 44:16) ໂລມ11:36; 22:13

**5. ພະເຈົ້າເຫັນຂ້າພະເຈົ້າແລະຮູ້ສິ່ງທີ່ຂ້າພະເຈົ້າທຳໄດ້ຢ່າງໃດ ແລະພະອົງຊົງດູແລ ເອົາໃຈໃສ່ຂ້າພະເຈົ້າໄດ້ຢ່າງໃດ?**

ພະອົງເປັນພະເຈົ້າຜູ້ຊົງພະຊົນຢູ່ ແລະມີສິດທິອຳນາດມາກມາຍແລະຮອບຮູ້ທົ່ວໄປທັງໝົດ
"ບໍ່ມີສິ່ງໜຶ່ງສິ່ງໃດຊ່ອນໄວ້ພົ້ນພະເນດພະອົງ ແຕ່ກົງກັນຂ້າມທຸກສິ່ງປາກົດແຈ້ງຕໍ່ພະອົງຜູ້ຊຶ່ງເຮົາຕ້ອງສຳພັນ
ດ້ວຍ" (ເຮັບເລີ 4:13)

**6. ພະເຈົ້າມີພະລັກສະນະເປັນຢ່າງໃດ?**

ພະອົງເປັນພະເຈົ້າຜູ້ຊົງບໍລິສຸດ ຊອບທຳແລະຊົງໄວ້ຊຶ່ງຄວາມຍຸດຕິທຳພະອົງກຽດຊັງຄວາມບາບ
ແຕ່ຮັກຄົນບາບທຸກຄົນ

"ແຕ່ພະເຈົ້າຊົງສຳແດງຄວາມຮັກຂອງພະອົງແກ່ເຮົາທັງຫຼາຍຄື ຂະນະທີ່ເຮົາຍັງເປັນຄົນບາບ
ຢູ່ນັ້ນພະຄຣິດຊົງສິ້ນພະຊົນເພື່ອເຮົາ" (ໂລມ 5:8)

ໂຢຮັນ 3:16; ເອເຟໂຊ 2:4-5; 1 ໂຢຮັນ 3:1; ອິຊາຢາ 6:3; ໂລມ 11:22; 1ໂຢຮັນ 1:9, 4:8

**7. ຂ້າພະເຈົ້າຈະຮູ້ຈັກ ລິດອຳນາດພະເຈົ້າໄດ້ຢ່າງໃດ?**

"ພະອົງຊົງເນລະມິດໂລກແລະສັບພະສິ່ງທັງປວງໃນໂລກ ພະອົງຊົງສ້າງມະນຸດໂດຍສິ່ງທີ່ພະອົງຊົງສ້າງ ເຮົາກໍ
ຈະຮູ້ຈັກພະອົງແລະ ລິດທານຸພາບຂອງພະອົງໄດ້" "ຕັ້ງແຕ່ມື້ສ້າງໂລກມາແລ້ວ ສະພາບທີ່ບໍ່ປາກົດຂອງພະເຈົ້າ
ນັ້ນຄື ທະລານຸພາບອັນຖາວອນຂອງພະອົງກໍໄດ້ປະກົດໃນແຈ້ງຊັບພະສິ່ງທີ່ພະອົງໄດ້ຊົງສ້າງ ສະນັ້ນ ເຂົາທັງຫຼາຍ
ຈຶ່ງບໍ່ມີຂໍ້ແກ້ຕົວເລີຍ"ໂລມ 1:18-20)

**8. ຄຳວ່າ ພະເຈົ້າໃນສາມໝາຍຄວາມວ່າແນວໃດ?**

ເຖິງແມ່ນວ່າມີພະເຈົ້າອົງດຽວ ສິ່ງນີ້ເປັນສິ່ງທີ່ຍາກທີ່ເຮົາຈະເຂົ້າໃຈໄດ້ ເຖິງຢ່າງນັ້ນພະຄຳພີກໍໄດ້
ບອກເຮົາຮູ້ວ່າສິ່ງນີ້ເປັນຄວາມຈິງ

ຖ້າຈະໃຊ້ຕົວຢ່າງຂອງດວງອາທິດໃນທ້ອງຟ້າ ຄົງຈະຊ່ວຍໃຫ້ເຮົາເຂົ້າໃຈໄດ້ດວງອາທິດເປັນດວງ
ອາທິດດວງດຽວ ແຕ່ມັນໃຫ້ແສງສະຫວ່າງ ຄວາມຮ້ອນ ແລະ ພະລັງງານເຄມີ ພະເຢຊູຄຣິດເປັນ
ແສງສະຫວ່າງ ພະວິນຍານບໍລິສຸດເປັນໄຟຫຼືຄວາມຮ້ອນ ພະບິດາພະບຸດ ແລະ ພະວິນຍານ
ບໍລິສຸດເປັນພະທັງສາມເຈົ້າອົງດຽວ.

**9. ຊື່ ຂອງພະເຈົ້າໃນສາມຄືແນວໃດ?**

ພະເຈົ້າພະບິດາ
ພະເຈົ້າພະບຸດ
ພະເຈົ້າພະວິນຍານບໍລິສຸດ
ມາກທາຍ 28:19-20; 2ໂກລິນໂທ 13:14; ເອເຟໂຊ 4:4-6; 1 ຕີໂມທີ 2:5

**10. ເຮົາຮູ້ໄດ້ຢ່າງໃດວ່າພະເຈົ້າເປັນຜູ້ບໍລິສຸດ?**

ເຮົາຮູ້ໄດ້ເພາະພະຄໍາພີບອກແກ່ເຮົາເຊັ່ນນັ້ນ ແລະຍັງບອກເຮົາອີກວ່າພະອົງກຽດຊັງຄວາມບາບແລະຈະຕ້ອງຈັດການລົງໂທດກັບບາບ

"ພະເຈົ້າຊົງຊອບທໍາ ຕາມທາງທັງສິ້ນຂອງພະອົງແລະ ຊົງເອັນດູໃນການກະທໍາທັງສິ້ນຂອງພະອົງ" ໂລມ 2:4-6; ໂລມ 2:11; 1ໂຢຮັນ 3:5

**11. ເຮົາຮູ້ໄດ້ຢ່າງໃດວ່າພຣະເຈົ້າຮັກເຮົາ?**

ເພາະວ່າພະອົງສົ່ງພະບຸດອົງດຽວຂອງພະອົງ ຄືພຣະເຢຊູຄຣິດເຂົ້າມາໃນໂລກ ເພື່ອດໍາລົງຊີວິດ ແລະສິ້ນພະຊົນເທິງໄມ້ກາງເຂນເພື່ອຄວາມຜິດບາບຂອງເຮົາ ຖ້າເຮົາຕ້ອນຮັບພະເຢຊູຄຣິດເປັນພະຜູ້ຊ່ວຍໃຫ້ລອດແລະໄວ້ວາງໃຈພະອົງຈົນໝົດສິ້ນ ພຣະເຈົ້າຈະອະໄພຄວາມຜິດບາບຂອງເຮົາແລະໃຫ້ເຮົາເປັນພະບຸດຂອງພະອົງ

"ຄວາມຮັກທີ່ຂ້າພະເຈົ້າເວົ້າເຖິງນີ້ ທີ່ເຮົາຮັກພະອົງ ແຕ່ພະອົງຊົງຮັກເຮົາ ແລະຊົງໃຊ້ພະບຸດຂອງພະອົງມາຫຣົງເປັນຜູ້ລົບລ້າງພຣະອາຊະຍາທີ່ຕົກກັບເຮົາທັງຫຼາຍ ເພາະບາບຂອງເຮົາ" 1ໂຢຮັນ 4:10

ໂຢຮັນ 3:16; 1:12; 1ໂຢຮັນ 4:14,16,19

**12. ຄົນເຮົາຄວນຈະຢໍາເກງພຣະເຈົ້າຫຼືບໍ່?**

ແມ່ນແລ້ວ ພວກເຮົາຄວນຢໍາເກງພະເຈົ້າແລະຢ້ານພະເຈົ້າ ພະເຈົ້າເປັນໄຟເຜົາຜານທຸກສິ່ງໃຫ້ວອດວາຍໄປ ຄົນເຮົາທຸກຄົນຈຶ່ງຄວນຢໍາເກງແລະເຄົາລົບພະອົງ ນອກຈາກນັ້ນພະອົງຍັງເປັນພະເຈົ້າທີ່ຮັກມະນຸດຜູ້ເປັນຄົນບາບ ພະອົງຈຶ່ງປະທານຄວາມລອດໃຫ້ຄົນບາບທັງຫຼາຍ ພຽງແຕ່ເຂົາຕ້ອງຍອມຮັບສິ່ງທີ່ພະອົງປະທານໃຫ້ເທົ່ານັ້ນເອງ ,ຖ້າເຂົາປະຕິເສດທີ່ຈະຍອມຮັບເອົາພະບຸດຂອງພະເຈົ້າຊຶ່ງຕາຍເທິງໄມ້ກາງເຂນເພື່ອເຂົາ ແລ້ວເຂົາຈະບໍ່ໄດ້ຮັບຄວາມລອດພົ້ນ

"ຜູ້ທີ່ວາງໃຈ ໃນພະບຸດກໍມີຊີວິດນິລັນດອນ ຜູ້ທີ່ບໍ່ເຊື່ອພະບຸດຈະບໍ່ໄດ້ຊີວິດ ແຕ່ຈະຍັງຢູ່ໃຕ້ການລົງໂທດຂອງພະເຈົ້າ "(ໂຢຮັນ 3:36)

ປັນຍາຈານ 12:13; ເຮັບເລີ 10:31; ເຮັບເລີ 12:28-29

**13. ຄວາມສໍາພັນລະຫວ່າງພະເຈົ້າກັບມະນຸດເປັນແນວໃດ**

ພະເຈົ້າສ້າງມະນຸດຕາມແບບຢ່າງຂອງພະອົງ (ປະຖົມມະການ 1:27) ແຕ່ເພາະວ່າມະນຸດທໍາບາບ ມະນຸດຈຶ່ງຖືກຕັດຂາດຈາກພະເຈົ້າ ດັ່ງນັ້ນ ພະເຈົ້າຊຶ່ງເປັນຜູ້ຊົງສ້າງ ແລະ ເປັນພະເຈົ້າຂອງຄົນທຸກຄົນ ແຕ່ໃນແງ່ຄວາມສໍາພັນສ່ວນບຸກຄົນ ພະອົງມິໄດ້ເປັນພະບິດາຂອງຄົນທຸກຄົນ (ໂຢຮັນ 8:44; ໂລມ 9:8) ພະເຈົ້າເປັນພະບິດາຂອງທຸກຄົນທີ່ຍອມຮັບພະເຢຊູຄຣິດ ພະບຸດຂອງພະອົງເປັນພະຜູ້ຊ່ວຍໃຫ້ລອດຂອງເຂົາ.

"ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພະອົງ ຜູ້ທີ່ໃນພະນາມຂອງພະອົງ ພະອົງຊົງປະທານສິດທິໃຫ້ເປັນພະເຈົ້າ" ( ໂຢຮັນ 1:12 )

**14. ເນື່ອງດ້ວຍພະເຈົ້າຮັກມະນຸດ ເປັນຫຍັງພະອົງຈຶ່ງຍອມໃຫ້ມະນຸດທໍາບາບ**

ມະນຸດຍ່ອມມີອໍານາດທີ່ຈະເລືອກທາງເດີນຂອງຕົນເອງ ຖ້າບໍ່ດັ່ງນັ້ນແລ້ວມະນຸດກໍຈະເປັນພຽງ

ເຄື່ອງຈັກລົດເທົ່ານັ້ນ ຊຶ່ງໃນສະພາບເຊັ່ນນີ້ຍ່ອມບໍ່ເປັນທີ່ເພິ່ງປະສົງຂອງພະເຈົ້າ ພະອົງຊົງສ້າງມະນຸດຕາມພຣະສັນຍາຂອງພະອົງ ໂດຍມະນຸດມີເສລີພາບທີ່ຈະຄິດຮັກແລະເລືອກທາງເດີນຂອງຕົນເອງ ແຕ່ມະນຸດເລືອກທຳບາບເອງ

"ຈົ່ງດຳເນີນຊີວິດຢ່າງຄົນມີເສລີພາບ ແຕ່ຢ່າໃຊ້ເສລີພາບນັ້ນເປັນຂໍ້ອ້າງເພື່ອຈະທຳຊົ່ວ ແຕ່ດຳເນີນຊີວິດຢ່າງຜູ້ຮັບໃຊ້ຂອງພະເຈົ້າ" (1 ເປໂຕ 2:16; ກາລາເທຍ 5:13 )

**15. ພະເຈົ້າຍັງຊົງຄອບຄອງຈັກກະວານຫຼືບໍ?**

ຖືກແລ້ວ ເຖິງແມ່ນພະເຈົ້າຊົງອະນຸຍາດໃຫ້ວິນຍານຊົ່ວຍັງຄົງທຳງານຂອງມັນ ເຖິງຢ່າງນັ້ນພະເຈົ້າຍັງຊົງຄວບຄຸມທຸກສິ່ງຢູ່ ແລະວິນຍານຊົ່ວບໍ່ສາມາດທຳແນວໃດເກີນໄປກວ່າທີ່ພະເຈົ້າອະນຸຍາດໃຫ້.

"ພຣະເຈົ້າຊົງຄອບຄອງ ພະອົງຊົງສວມຄວາມຍິ່ງໃຫຍ່ ພະເຈົ້າຊົງສວມສະຫຼອງພະອົງ ພະອົງຊົງເອົາພຣະກຳລັງຄາດພະອົງ ໂລກໄດ້ສະຖາປະນາໄວ້ແລ້ວ ມັນຈະບໍ່ຫວັ່ນໄຫວ" (ເພັງສັນລະເສີນ 93:1 )

"ແລະພະເຈົ້າເວົ້າກັບຊາຕານວ່າ ເບິ່ງເຖີດ ເຂົາຢູ່ໃນອຳນາດເຈົ້າ ຈົ່ງໄວ້ຊີວິດຂອງເຂົາເທົ່ານັ້ນ" (ໂຢບ 2:6)

1ໂກລິນໂທ 15:27-28

**16. ເນື່ອງຈາກພະເຈົ້າຊົງມີອຳນາດ ແຕ່ເປັນຫຍັງພະອົງປ່ອຍໃຫ້ວິນຍານຊົ່ວກະທຳການຊົ່ວຮ້າຍໃນໂລກນີ້**

ເຮົາບໍ່ອາດເຂົ້າໃຈໄດ້ຖ່ອງແທ້ກ່ຽວກັບເຫດຜົນໃນເລື່ອງນີ້ ແຕ່ເຮົາຮູ້ວ່າການທີ່ພະອົງຍອມໃຫ້ທຳເຊັ່ນນັ້ນກໍເພື່ອສິ່ງທີ່ດີທີ່ສຸດ ຖ້າບໍ່ມີຄວາມຊົ່ວຊ້າໃນໂລກມະນຸດກໍອາດບໍ່ເຂົ້າໃຈ ຄວາມດີພະເມດຕາ ແລະ ຄວາມຮັກຂອງພະເຈົ້າໄດ້ ຖ້າບໍ່ມີຄວາມມືດ ເຮົາຈະເຂົ້າໃຈແສງສະຫວ່າງໄດ້ຢ່າງໃດ ຖ້າບໍ່ມີຄວາມເຈັບໄຂ້ໄດ້ປ່ວຍ ບໍ່ມີຄວາມທຸກໂສກ ເຮົາຈະເຂົ້າໃຈພະພອນແຫ່ງການຍຸດພັກ ການປະໂລມໃຈ ແລະຮັກສາໃຫ້ຫາຍໄດ້ຢ່າງໃດ ແລະຖ້າບໍ່ມີຄວາມຊົ່ວຮ້າຍໃຫ້ເຮົາຄຽດຊັງ ເຮົາຈະຮັກຄວາມດີໄດ້ຢ່າງໃດ

"ເພາະຄວາມຄິດຂອງເຮົາບໍ່ເປັນຄວາມຄິດຂອງເຈົ້າ ທາງຂອງເຈົ້າບໍ່ເປັນວິຖີທາງຂອງເຮົາ ພະເຈົ້າດັ່ງນີ້" ( ອິຊາຢາ 55:8 )

"ເພາະຟ້າສະຫັວນສູງກວ່າແຜ່ນດິນໂລກສັນໃດ ວິຖີທາງຂອງເຮົາສູງທາງຂອງເຈົ້າ ແລະຄວາມຄິດຂອງເຮົາສູງຄວາມຄິດຂອງເຈົ້າສັນນັ້ນ" (ອິຊາຢາ 55:9 )

**17. ພະເຈົ້າມີພະລັກສະນະຢ່າງໃດ**

(1) ພະເຈົ້າຊົງຍິ່ງໃຫຍ່ສູງສຸດ

"ພະອົງຊົງຍິ່ງໃຫຍ່ ແລະຊົງລິດອຳນາດ ເງື່ອງຊື່ລືນາມ, ງົດງາມແລະເຕັມປ່ຽມດ້ວຍສະຫງ່າລາສີ ທຸກໆສິ່ງໃນສະຫວັນຊັ້ນຟ້າ ແລະທີ່ເທິງແຜ່ນດິນໂລກກໍເປັນຂອງພະອົງ ແລະພະຊົງເປັນຈອມກະສັດປົກຄອງເໜືອສັບພະສິ່ງ (1ຂ່າວຄາວ 29:11 )

(2) ພະເຈົ້າຊົງຮອບຮູ້ທຸກສິ່ງທຸກຢ່າງ

"ໂອພະປັນຍາແລະຄວາມຮອບຮູ້ຂອງພະເຈົ້ານັ້ນລ້ຳລຶກເທົ່າໃດ
ຂໍ້ຕັດສິນຂອງພະອົງ ນັ້ນຍາກທີ່ຈະຫຍັ່ງຮູ້ໄດ້ແລະທາງຂອງພະອົງກໍ
ເຫຼືອທີ່ຈະສືບເສາະໄດ້" ( ໂລມ 11:33)

(3) ພະເຈົ້າເປັນເບື້ອງຕົ້ນແລະເປັນເບື້ອງປາຍ ຈາກນິລັນດອນ ສູ່ນິລັນດອນ ເປັນຜູ້ຊົງສ້າງ ແລະຜູ້ຄອງຈັກກະວານ

"ກ່ອນທີ່ພູເຂົາທັງຫຼາຍເກີດຂຶ້ນມາ ກ່ອນທີ່ພະອົງຊົງກຳເນີດແຜ່ນດິນໂລກ ພະອົງຊົງເປັນ
ພະເຈົ້າຕັ້ງແຕ່ນິລັນດອນເຖິງນິລັນດອນ" (ເພັງສັນລະເສີນ 90:20)
1:18; 21:6; 22:13

(4) ພະເຈົ້າຊົງມີເດດລິດອຳນາດ

"ເພາະວ່າບໍ່ມີສິ່ງໜຶ່ງສິ່ງໃດຊຶ່ງພະເຈົ້າຊົງກະທຳບໍ່ດີ" (ລູກາ 1:37 )
"ພຣະເນດຢູ່ໃນທຸກແຫ່ງຫົນ ຊົງເຝົ້າເບິ່ງຄົນຊົ່ວແລະຄົນດີ" (ສຸພາສິດ 15:3 )
ອິຊາຢາ 43:13

(5) ພະເຈົ້າຊົງຍຸດຕິທຳ ແລະຊອບທຳ

"ຂ້າແຕ່ພະເຈົ້າ ພະອົງຊົງຊອບທຳ ແລະຄຳພິພາກສາຂອງພະອົງຖືກຕ້ອງ"
(ເພງສັນລະເສີນ 119:137)

(6) ພະເຈົ້າຊົງບໍລິສຸດ

"ຈົ່ງຍ້ອງຍໍພະກຽດພະເຈົ້າຂອງເຮົາ ແລະນະມັດສະການທີ່ພູເຂົາສັກສິດຂອງພະອົງເພາະພະເຈົ້າ
ຂອງເຮົາບໍລິສຸດ" (ເພງສັນລະເສີນ 99:9)

(7) ພະເຈົ້າຊົງເປັນຄວາມຮັກ

"ແຕ່ພະເຈົ້າຊົງສຳແດງຄວາມຮັກຂອງພະອົງແກ່ເຮົາທັງຫຼາຍຄື ຂະນະທີ່ເຮົາຍັງເປັນຄົນບາບຢູ່ນັ້ນ
ພະຄຣິດໄດ້ຊົງສິ້ນພະຊົນເພື່ອເຮົາ" (ໂລມ 5:8 )
ໂຢຮັນ 3:16; ເອເຟໂຊ 2:4-5; 1 ໂຢຮັນ 4:8,16

## ບົດທີ່ 3

## ພະເຢຊູຄຣິດ

### 1. ພະເຢຊູຄຣິດຄືໃຜ?

ພະເຢຄຣິດຄືພະບຸດຂອງພະເຈົ້າ ແລະຊົງເປັນອັນໜຶ່ງອັນດຽວກັນກັບພະເຈົ້າ
"ເຮົາ(ພະເຢຊູ) ກັບພະບິດາເປັນອັນໜຶ່ງອັນດຽວກັນ" (ໂຢຮັນ 10:30 )
ລູກາ 22:69, 70; ໂຢຮັນ 10:38

**2. ກ່ອນທີ່ພະເຢຊູຄຣິດຈະສະເດັດມາຮັບສະພາບເປັນມະນຸດໃນໂລກ ພະອົງໄດ້ຢູ່ໃສມາກ່ອນ**

ພະອົງຢູ່ໃນສະຫວັນ ເປັນອັນໜຶ່ງອັນດຽວກັບພະບິດາພະອົງຊົງສ້າງໂລກ ແລະສັບພະສິ່ງທັງປວງໃນໂລກ

"ບັດນີ້ພະບິດາເຈົ້າຂ້າ ຂໍຊົງໂປຣດໃຫ້ຂ້າພະອົງໄດ້ຮັບກຽດຕໍ່ພະພັກຂອງພະອົງ ຄືກຽດຊຶ່ງຂ້າພະອົງໄດ້ມີຮ່ວມກັບພະອົງກ່ອນທີ່ໂລກນີ້ມີມາ" (ໂຢຮັນ 17:5 )

ເພງສັນລະເສີນ 90:2; ໂຢຮັນ 1:3, 10; ກິດຈະການ 17:24; ເຮັບເລີ 1:2; 11:3

**3. ເຮົາໄດ້ຮູ້ຢ່າງໃດວ່າ ພະອົງຢູ່ໃນຟ້າສະຫວັນແລະເປັນຜູ້ສ້າງໂລກ?**

ພະຄຳພີບອກກັບເຮົາເຊັ່ນນັ້ນ

> ເມື່ອຕົ້ນເດີມພະຄຳໄດ້ເປັນຢູ່ແລ້ວ ພະຄຳໄດ້ຢູ່ກັບພະເຈົ້າ ແລະພະຄຳນັ້ນແຫລະເປັນພະເຈົ້າ ໂດຍທາງພະຄຳພະອົງໄດ້ເຮັດໃຫ້ທຸກສິ່ງເກີດຂຶ້ນ ບໍ່ມີສິ່ງໃດໃນການເນລະມິດສ້າງທັງໝົດນັ້ນໄດ້ຖືກເຮັດໃຫ້ເກີດຂຶ້ນໂດຍປາສະຈາກພະອົງ " (ໂຢຮັນ 1:1, 3 )

ໂຢຮັນ 17:5-8

**4. ພະເຢຊູຄຣິດຜູ້ເປັນພະບຸດຂອງພະເຈົ້າສະເດັດເຂົ້າມາໃນໂລກເມື່ອໃດ?**

ພະອົງປະສູດ ເປັນພະກຸມມານນ້ອຍເມື່ອ 2,000 ກວ່າ ປີມາແລ້ວ ພະອົງສະເດັດມາຈາກສະຫວັນ

"ທູດສະຫວັນຈຶ່ງຕອບນາງ(ມາລີອາ) ວ່າພະວິນຍານບໍລິສຸດຈະສະເດັດລົງມາເທິງເຈົ້າແລະລິດເດດຜູ້ສູງສຸດຈະປົກນາງ ເຫດສັນນັ້ນບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າ ພະບຸດຂອງພະເຈົ້າ" (ລູກາ 1:35 )

ລູກາ 3:5

**5. ພະເຢຊູປະສູດຢູ່ໃສ?**

ພະອົງປະສູດທີ່ເບເລເຮມໃນແຄ້ວນຢູດາຍ

> "ພະເຢຊູໄດ້ຊົງບັງເກີດທີ່ບ້ານເບເລເຮມແຄ້ວນຢູດາຍ ໃນລາຊະການຂອງກະສັດເຮໂລດພາຍຫຼັງມີພວກໂຫຣາຈານຈາກທິດຕາເວັນອອກມາຍັງກຸງເຢລູຊາເລມ" (ມັດທາຍ 2:1)
>
> ລູກາ 2:4-7

**6. ບິດາ ແລະມານດາຂອງພະອົງຄືໃຜ?**

ມານດາຂອງພະອົງເປັນຍິງສາວຊາວຢິວຊື່ ມາຣີ ພະເຈົ້າເປັນພະບິດາຂອງພະອົງ ພະເຢຊູຖືກກຳເນີດໃນພະວິນຍານບໍລິສຸດໃນທ້ອງມາຣີເຊິ່ງເປັນສາວຊາວຢິວ

"ແຕ່ເມື່ອໂຢເຊບຍັງຄຶດເລື່ອງນັ້ນຢູ່ ກໍມີທູດສະຫວັນຄົນໜຶ່ງຂອງພະຜູ້ເປັນເຈົ້າ ມາປະກົດແກ່ໂຢເຊບ ໃນຄວາມຝັນວ່າໂຢເຊບບຸດດາວິດ ຢ່າຢ້ານທີ່ຈະຮັບມາຣີມາເປັນພັນລະຍາຂອງເຈົ້າເລີຍເພາະວ່າຜູ້ຊຶ່ງປະຕິສົນທິໃນ ທ້ອງຂອງນາງເປັນໂດຍ ລິດເດດຂອງ ພະວິນຍານບໍລິສຸດ" (ມັດທາຍ 1:20 )

ມັດທາຍ 1:24-25; ລູກາ 1:35

**7. ພະເຢຊູມີອ້າຍນ້ອງຊາຍ ແລະເອື້ອຍນ້ອງສາວຫຼືບໍ?**

ຖ້າຖືເອົາພະເຈົ້າເປັນພະບິດາແລ້ວ ພະອົງກໍບໍ່ມີພີ່ນ້ອງ ແຕ່ມານດາແລະບິດາໂຢເຊບບຸດ ຂອງ ພະອົງນັ້ນມີບຸດອີກຫຼາຍຄົນ ນ້ອງທັງ 4 ຂອງພະອົງຄື ຢາກອບ, ໂຢເສສ, ຢູດາ ແລະຊີໂມນ ສ່ວນນ້ອງຂອງພະອົງກໍໄດ້ຖືກກ່າວເຖິງໃນພະຄຳພີເຊັ່ນກັນ

"ຄົນນີ້ເປັນລູກຊ່າງໄມ້ມີໃຊ່ຫຼື ແລະນ້ອງຊາຍຂອງເຂົາຊື່ ຢາກອບ, ໂຢເສສ, ຊີໂມນແລະຢູດາ ແລະນ້ອງສາວມີຢູ່ໃຊ່ຫຼື" (ມັດທາຍ 13:55-56)

ມາລາໂກ 6:3, ລູກາ 8:19, ໂຢຮັນ 2:12

**9. ເຮົາຮູ້ໄດ້ຢ່າງໃດວ່າພະເຢຊູນັ້ນແຕກຕ່າງຈາກທາລົກຄົນອື່ນໆຢ່າງໃດ?**

(1) ໄດ້ມີຜູ້ທຳນາຍການປະສູດຂອງພະອົງມາລ່ວງໜ້າແລ້ວ ນອກຈາກນັ້ນທູດສະຫວັນຍັງໄດ້ບອກນາງ ມາຣີ ວ່າ ເຈົ້າຈະມີບຸດຊາຍທີ່ຖືກກຳເນີດໃນພະວິນຍານບໍລິສຸດ ແລະ ໃຫ້ຮຽກພະອົງວ່າ"ເຢຊູ" ເພາະວ່າພະອົງຈະຊ່ວຍໃຫ້ປະຊາຊົນຂອງພະອົງລອດພົ້ນຈາກຄວາມຜິດບາບ

"ເຂົາຈຶ່ງໃຫ້ນາມວ່າ ເຢຊູ ຕາມຊື່ງທູດສະຫວັນໄດ້ກ່າວໄວ້ກ່ອນ ເມື່ອຍັງມີໄດ້ປະຕິສົນທິໃນຄັນ" (ລູກາ 2:21 ຂ)

ມັດທາຍ 1:18-24

(2) ເມື່ອພະອົງປະສູດນັ້ນ ທັງສະຖານທີ່ແລະສະຖານນະການຕ່າງໆ ກໍເປັນໄປຕາມຜູ້ທີ່ໄດ້ພະຍາກອນໄວ້ໃນພະຄຳພີເດີມກ່ຽວກັບພຣະເມຊີຢາ

"ເພາະສະນັ້ນອົງພະຜູ້ເປັນເຈົ້າຈະປະທານໝາຍສຳຄັນ ເບິ່ງເຖີດຍິງສາວຄົນໜຶ່ງຈະຕັ້ງຄັນແລະຄອດບຸດຊາຍຄົນໜຶ່ງ ແລະເຂົາຈະຮຽກນາມຂອງທ່ານວ່າ ອິມມານູເອນ" (ອີຊາຢາ 7:14)

ມີຄາ 5:2

(3) ເມື່ອພະອົງປະສູດນັ້ນໄດ້ມີທູດສະຫວັນ ປະກົດແກ່ຄົນລ້ຽງແກ້ໃນທົ່ງຫຍ້າໃກ້ໆ ແລະຮ້ອງເພັງສັນລະເສີນພະເຈົ້າ ແລະບອກແກ່ຄົນລ້ຽງແກະເຖິງຂ່າວດີທີ່ວ່າພະຜູ້ຊ່ວຍໃຫ້ລອດໄດ້ປະສູດແລ້ວ ເຫຼົ່າທູດສະຫວັນໄດ້ບອກໃຫ້ຄົນລ້ຽງແກະໄປເບິ່ງພະກຸມມານນັ້ນ ເຫຼົ່າຄົນລ້ຽງແກະຈຶ່ງໄດ້ໄປ ແລະພົບພະອົງແລະໄດ້ນະມັດສະການພະອົງ (ລູກາ 2: 8-16 )

(4) ເຫຼົ່າພວກໂຫຣາຈານ ໄດ້ເດີນທາງມາຈາກຕາເວັນອອກ ເພາະເຂົາໄດ້ເຫັນດາວປະຫຼາດໃນທ້ອງຟ້າຂະນະທີ່ເຂົາເດີນທາງ ດວງດາວນີ້ໄດ້ເຄື່ອນທີ່ນຳໜ້າເຂົາແລະມາຢຸດຢູ່ທີ່ພະກຸນມານນ້ອຍ ພວກໂຫຣາຈາໄດ້ນຳຂອງມາຖວາຍ ແລະນະມັດສະການພະອົງ ( ມັດທາຍ 2:1-10 )

**10. ເຮົາຮູ້ຫຍັງແດ່ກ່ຽວກັບຊີວິດຂອງພະເຢຊູ ເມື່ອຍັງຊົງເປັນເດັກນ້ອຍ?**

(1) ຄອບຄົວຂອງພະອົງຍາກຈົນ ການຖວາຍພະອົງໃນວິຫານຫຼັງຈາກທີ່ພະອົງໄດ້ປະສູດ ສະແດງໃຫ້ເຫັນວ່າ ຄອບຄົວນີ້ເປັນຄອບຄົວຍາກຈົນ

"ນົກເຂົາຄູ່ໜຶ່ງ ຫຼື ນົກກາງແກໜຸ່ມສອງໂຕ" (ລູກາ 2:24 )

(2) ມາດາຂອງພະອົງຫຼືບິດາລ້ຽງຂອງພະອົງເປັນຄົນທີ່ອຸທິດຕົວໃຫ້ແກ່ພະເຈົ້າ ຮັກພະເຈົ້າ ແລະນົບລະບັດພະເຈົ້າ

"ຄັນໂຢເຊບກັບມາຣີອາໄດ້ເຮັດຕາມພະບັນຍັດຂອງພະຜູ້ເປັນເຈົ້າແລ້ວ ກໍໄດ້ເມືອຍັງເມືອງຂອງຕົນຄື ນາຊາເລັດແຂວງຄາລິເລ

ຝ່າຍບິດາມານດາເຄີຍຂຶ້ນໄປຍັງກຸງເຢລູຊາເລັມ ໃນເທສການປັສຄາທຸກໆປີ" (2:39, 41 )

ມັດທາຍ1:19; ລູກາ 1:27-28; 2:22, 39-43

(3) ໂຢເຊບບິດາບຸນທຳຂອງພະອົງເປັນຊ່າງໄມ້ ແລະພະເຢຊູຈຶ່ງເປັນຊ່າງໄມ້ໄປດ້ວຍ

"ຄົນນີ້ເປັນຊ່າງໄມ້ບຸດ ມາຣີອາບໍ່ແມ່ນຫຼື" (ມາລະໂກ 6:3)

ມັດທາຍ 13:55

(4) ພະອົງເຂົ້າຮ່ວມນະມັດສະການໃນພະວິຫານທຸກໆວັນສະບາໂຕ

"ແລ້ວພະອົງໄດ້ສະເດັດມາເຖິງເມືອງນາຊາເລັດເປັນທີ່ຊຶ່ງພະອົງຈະເລີນໄວຂຶ້ນ ພະອົງສະເດັດໄປໃນພະວິຫານໃນວັນສະບາໂຕຕາມເຄີຍ ຊົງຢືນຂຶ້ນເພື່ອອ່ານພະທຳ" (ລູກາ 4:16 )

(5) ເມື່ອພະອົງມີອາຍຸໄດ້ 12 ປີ ພະອົງຖືກນຳໄປທີ່ກຸງເຢລູຊາເລັມ (ລູກາ 2:41-ຖ43)

(6) ພະເຢຊູຈະເລີນໄວຂຶ້ນເປັນທີ່ຮັບໃຊ້ພະເຈົ້າ ແລະຕໍ່ໜ້າຄົນທັງປວງ

"ພະເຢຊູໄດ້ຈະເລີນຂຶ້ນໃນດ້ານສະຕິປັນຍາ ໃນດ້ານຮ່າງກາຍ ແລະມັກສະເພາະພະເຈົ້າແລະ ຕໍ່ໜ້າຄົນທັງ ປວງດ້ວຍ" (ລູກາ 2:52)

**11. ເມື່ອພະເຢຊູເລີ່ມເທດສະໜານັ້ນພະອົງມີອາຍຸເທົ່າໃດ**

ພະອົງມີອາຍຸປະມານ 30 ປີ (ລູກາ 3:23 )

**12. ພະອົງທຳການເທດສະໜາໄດ້ດົນເທົ່າໃດ?**

ພະອົງຊົງບອກໃຫ້ຄົນກັບໃຈ ຫັນຫຼັງໃຫ້ກັບຄວາມບາບ ເພາະແຜ່ນດິນສະຫວັນໄດ້ເຂົ້າມາໃກ້ແລ້ວ ແລະໄດ້ຊົງສັ່ງສອນໃຫ້ຄົນເຫຼົ່ານັ້ນຕິດຕາມພະອົງໄປ ແລະພະອົງຈະປະທານຊີວິດນິລັນດອນໃຫ້

"ຕັ້ງແຕ່ນັ້ນມາພະເຢຊູໄດ້ຕັ້ງຕົ້ນປະກາດວ່າ ຈົ່ງກັບໃຈເສຍໃໝ່ເພາະວ່າແຜ່ນດິນສະຫວັນເຂົ້າມາໃກ້ແລ້ວ" (ມັດທາຍ 4:17 )

ລູກາ 4:17-21; 5:32; 7:22; 13:3; 24:47

**14. ນອກຈາກນີ້ແລ້ວພະເຢຊູໄດ້ເຮັດຫຍັງອີກ?**

ພະອົງຮັກສາຄົນປ່ວຍ ແລະໄດ້ທຳໃຫ້ຄົນຕາຍແລ້ວບາງຄົນຟື້ນຂຶ້ນ ພະອົງຍັງສອນໃຫ້ຄົນຮັກ ແລະນົບລະບັດພະເຈົ້າແລະຮັກເພື່ອນມະນຸດແລະພະອົງຊົງປະກອບການດີສະເໝີ

"ແລ້ວພະອົງຕອບສິບສອງຄົນນັ້ນວ່າ ຈົ່ງໄປແຈ້ງແກ່ໂຢຮັນຕາມທີ່ທ່ານໄດ້ເຫັນ ແລະໄດ້ຍິນຄືວ່າ ຄົນຕາບອດກໍຫາຍບອດ ຄົນງ່ອຍເດີນໄດ້ ຄົນໂລກເຮື້ອນຫາຍສະອາດ ຄົນຫູໜວກໄດ້ຍິນ ຄົນຕາຍແລ້ວ

ເປັນຂຶ້ນມາ ແລະຂ່າວປະເສີດປະກາດແກ່ຄົນອະນາຖາ“ (ລູກາ 7:22)
ກິດຈະການ 10:38; ມາລາໂກ 12:30-31; ໂຢຮັນ 13:34; ມັດທາຍ 4:23

**15. ເປັນຫຍັງພະເຢຊູຈຶ່ງສາມາດຮັກສາຄົນປ່ວຍ ແລະເຮັດໃຫ້ຄົນຕາຍຟື້ນຂຶ້ນໄດ້ ?**

ເພາະພະອົງເປັນພະເຈົ້າ ແລະມີອຳນາດເໜືອຄວາມຕາຍ
“ພະເຢຊູຊົງກ່າວກັບນາງວ່າ ເຮົານີ້ແຫຼະ, ເປັນເຫດໃຫ້ຄົນທັງປວງ ເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງມີຊີວິດຢູ່“ (ໂຢຮັນ 11:25)
ໂຢຮັນ 10:17-18; 2 ທີໂມທີ 1:10

**16. ພະເຢຊູຄຣິດເປັນພະເຈົ້າ ແຕ່ເປັນຫຍັງພະອົງຈຶ່ງຕ້ອງສະເດັດຈາກສະຫວັນມາເປັນຄົນຍາກຈົນເທິງໂລກນີ້ແລະຍອມຕາຍເພື່ອເຮົາ**

ເພາະວ່າພະອົງຊົງຮັກເຮົາເຖິງແມ່ນເຮົາຈະບໍ່ຮູ້ຈັກພະອົງຫຼືບໍ່ຮັກພະອົງ ແລະບໍ່ມີຫົນທາງອື່ນໃດທີ່ມະນຸດຈະໄດ້ລອດພົ້ນຈາກຄວາມຜິດບາບຂອງເຂົາເພາະໂທດເຖິງຕາຍຈະຕ້ອງໄດ້ຮັບການຊຳລະໂດຍບຸດຄົນທີ່ບໍ່ມີບາບເລີຍ ພະເຢຊູທຳໜ້າທີ່ເປັນຜູ້ຮັບໂທດແທ່ງຄວາມຜິດບາບແທນຄົນບາບເສຍເອງ
“ບຸດທັງຫຼາຍຮ່ວມໂລຫິດກັນສັນໃດ ພະອົງຊົງເປັນສັນນັ້ນດ້ວຍ ເພື່ອໂດຍທາງຄວາມຕາຍນັ້ນເອງ ພະອົງຈະໄດ້ຊົງທຳລາຍຜູ້ມີອຳນາດແຫ່ງຄວາມຕາຍຄື ມານເສຍໄດ້ ແລະຈະຊົງຊ່ວຍເຂົາເຫຼົ່ານັ້ນໃຫ້ພົ້ນຈາກການເປັນທາສຊົ່ວຊີວິດ ເພາະເຫດຢ້ານຄວາມຕາຍ“ (ເຮັບເລີ 2:14-15)
ໂຢຮັນ 3:16; ໂລມ 5:7-8

**17. ເຮົາຮູ້ໄດ້ຢ່າງໃດວ່າ ພະເຢຊູເປັນພະເຈົ້າ?**

(1) ພະອົງເອງກ່າວວ່າ ພະອົງເປັນພະເຈົ້າ “ເຮົາກັບພະບິດາເປັນອັນໜຶ່ງອັນດຽວກັນ“(ໂຢຮັນ10:30)
(2) ພະເຈົ້າພະບິດາໄດ້ກ່າວຢືນຢັນວ່າ ພະອົງຄືພະບຸດຂອງພະເຈົ້າ
ກ. ເມື່ອພະເຢຄຣິດຮັບບາຕິສມາ
(ມັດທາຍ 3:17) “ແລະນີ້ແນະ ມີພຣະສຸສຽງກ່າວຈາກຟ້າສະຫວັນວ່າ ທ່ານຜູ້ນີ້ເປັນບຸດທີ່ຂອງເຮົາ ເຮົາຂອບໃຈທ່ານຫຼາຍ“
ຂ. ເມື່ອພະອົງຊົງຈຳແລງພະກາຍ (ມັດທາຍ 17:5)
(3) ສາວົກຂອງພະອົງຢືນຢັນວ່າ ພະອົງຄືພະບຸດຂອງພະເຈົ້າ (ມັດທາຍ 16:16; ໂຢຮັນ 1:49; 20:28)
(4) ຄຳທຳນາຍຂອງພະຄຳພີເດີມກ່ຽວກັບພະເມຊີຢາສຳເລັດໃນພະອົງ
ກ. ການປະສູດຈາກຍິງ ອີຊາຢາ7:1, ມັດທາຍ 1:22-23
ຂ. ສະຖານທີ່ປະສູດຂອງພະອົງ ມີຄາ5:2, ມັດທາຍ 2:1
ຄ. ການສະເດັດເຂົ້າກຸງເຢລູຊາເລມຢ່າງຜູ້ມີໄຊຊະນະ

ງ. ຖືກເພື່ອນທໍລະຍົດ   ເພງສັນລະເສີນ 41:9, ມາລາໂກ 14:10

ຈ. ຖືກຂາຍໃນລາຄາ 30 ຫຼຽນເງິນ  ມັດທາຍ 26:15

ສ. ເມື່ອຖືກກ່າວຫາ          ອິຊາຍາ 53:7, ມັດທາຍ 26:62-63

ຊ. ທົນທຸກເພື່ອຄວາມຜິດບາບຂອງເຮົາ  ອິຊາຍາ 53:4-5; ມັດທາຍ 27; ແລະໂຢຮັນ19 (1 ເປໂຕ 2:24)

ຍ. ອະທິຖານເພື່ອສັດຕູຂອງພະອົງ  ເພງສັນລະເສີນ 109:4-5, ລູກາ 23:34

ດ. ຖືກຝັງໄວ້ກັບ      ອິຊາຢາ 53:9, ມັດທາຍ 25:57-60

ຕ. ການຟື້ນຄືນພະຊົນ ເພງສັນລະເສີນ 16:10, ລູກາ 24:50-51

ແລະ ຢ່າງຫຼວງຫຼາຍ.

**18. ຫຼັງຈາກທີ່ໄດ້ເທດສະໜາສັ່ງສອນໄດ້ 3 ປີເຄິ່ງ ເກີດຫຍັງຂື້ນກັບພະອົງ?**

ພະອົງຖືກປະຫານໂດຍຄົນຊົ່ວ ໂດຍຖືກຄຶ່ງເທິງໄມ້ກາງເຂນ

"…ແລະເມື່ອໃຫ້ໂບຍຕີພະເຢຊູແລ້ວ ກໍມອບຄຶ່ງໄວ້ທີ່ໄມ້ກາງເຂນ" (ມັດທາຍ 27:26)

ມາລາໂກ 15:10-28; ລູກາ 23:4, 14, 21-22, 33

**19. ເຖິງແມ່ນວ່າພະເຢຊູຊົງເປັນພະເຈົ້າ ແຕ່ພະອົງກໍບໍ່ໄດ້ຊ່ວຍພະອົງຈາກຄວາມຕາຍ**

ຖ້າພະເຢຊູບໍ່ຕາຍ ກໍຈະບໍ່ມີໃຜໄດ້ຮັບຄວາມລອດເລີຍ ເຮົາທຸກໄດ້ທຳບາບແລະຄ່າຈ້າງຂອງຄວາມບາບຄືຄວາມຕາຍ ແລະພະອົງຊົງຕາຍແທນເຮົາ ແລະນີ້ເປັນສາເຫດທີ່ພະອົງຊົງສະເດັດມາໃນໂລກນີ້.

ໂຢຮັນ 12:27; ໂລມ 3:23, 6:23, 5:11, 12, 15, 21

**20. ຫຼັງຈາກທີ່ພະອົງສິ້ນພະຊົນແລ້ວ ມີຫຍັງເກີດຂື້ນ**

ພະອົງຖືກຝັງໃນຫລຸມຝັ່ງສົບອັນໃໝ່ ແຕ່ມາອີກ 3 ວັນພະອົງຊົງເປັນຂື້ນມາຈາກຄວາມຕາຍ

"ອັນໜຶ່ງໃນບ່ອນພະອົງຖືກຄຶ່ງໄວ້ເທິງໄມ້ກາງເຂນນັ້ນມີສວ່ນແຫ່ງໜຶ່ງ ໃນສ່ວນນັ້ນມີອຸກໂມງຝັງສົບໃໝ່ທີ່ຍັງບໍ່ໄດ້ຝັງຜູ້ໃດເລີຍ ເພາະວັນນັ້ນເປັນຕຽມຂອງພວກຢິວແລະເພາະອຸໂມງນັ້ນຢູ່ໃກ້ ເຂົາຈຶ່ງບັນຈຸພະສົບຂອງພະອົງໄວ້ທີ່ນັ້ນ" (ໂຢຮັນ 19:41-42)

ມັດທາຍ 12:40; ລູກາ 24:1-8; ໂຢຮັນ 20:21

**21. ເປັນພະເຢຊູຈຶ່ງເປັນຂື້ນມາຈາກຄວາມຕາຍໄດ້**

ເພາະວ່າພະອົງເປັນພະເຈົ້າ ແລະເປັນແຫຼ່ງຂອງຊີວິດ ພະອົງມີລິດອຳນາດເໜືອຄວາມຕາຍແລະຫລຸມຝັງສົບ

"ເຮົາສະຫຼະຊີວິດຂອງເຮົາເພື່ອຈະຮັບນັ້ນຄືນມາອີກ ບໍ່ມີຜູ້ໃດຊິງຊີວິດຈາກເຮົາໄດ້ ແຕ່ເຮົາສະຫຼະຊີວິດດ້ວຍໃຈສະໝັດຂອງເຮົາເອງ ເຮົາສິດທິທີ່ຈະສະຫຼະຊີວິດນັ້ນ ແລະມີສິດທິທີ່ຈະຮັບຄືນອີກຄຳກຳຊັບນີ້ເຮົາໄດ້ຮັບມາຈາກພະບິດາຂອງເຮົາ" (ໂຢຮັນ 10:17, 18)

“ແຕ່ຝ່າຍພະວິນຍານແຫ່ງຄວາມບໍລິສຸດນັ້ນ ຊົງບົ່ງໄວ້ດ້ວຍລິດທານຸພາບຄື ໂດຍການຂຶ້ນມາຈາກ ຄວາມຕາຍວ່າເປັນພະບຸດຂອງພະເຈົ້າ“ (ໂຣມ 1:4)

**22. ມີຫຍັງພິສູດໄດ້ວ່າພະເຍຊູໄດ້ເປັນຂຶ້ນມາຈາກຄວາມຕາຍຈິງໆ**

(1) ໂດຍພະຄຳຂອງພະອົງເອງ ພະອົງໄດ້ບອກແກ່ເຫຼົ່າສາວົກວ່າ ພະອົງຈະເປັນຂຶ້ນມາຈາກ ຕາຍໃນວັນທີ່ສາມ

“ຕັ້ງແຕ່ເວລານັ້ນເປັນຕົ້ນມາພະເຍຊູຊົງເລີ່ມເຜີຍແກ່ເຫຼົ່າສາວົກຂອງພະອົງວ່າ ພະອົງຈະຕ້ອງສະ ເດັດໄປກຸງເຢລູຊາເລມແລະຈະຕ້ອງທຸກທໍລະມານຫຼາຍປະການ ຈາກພວກຜູ້ໃຫຍ່ແລະພວກມະ ຫາປຸໂລຫິດ ແລະຈາກພວກນັກທັມເຂົາຈະໄດ້ຂ້າພະອົງເສຍ ແລະວັນຖ້ວນສາມພະອົງຈະຖືກຊົງ ບັນດານໃຫ້ເປັນຄືນມາ.“ (ມັດທາຍ 16:21, ລູກາ 24:44)

(2) ຫຼັງຈາກທີ່ພະອົງເປັນຂຶ້ນມາຈາກຄວາມຕາຍແລ້ວ ມີຫຼາຍຄົນເຫັນພະອົງໃນເວລາຕ່າງໆ ກັນ, ມາຣີຊາວມັກດາລາ (ມາລາໂກ 16:9), ຜູ້ຍິງຄົນອື່ນໆ (ມັດທາຍ 28:9), ສາວ 11 ຄົນ (ລູກາ 24:36), ເຫຼົ່າສາວົກທີ່ທະເລກາລິລີ (ໂຢຮັນ 21:1), ຄົນອື່ນໆຮ່ວມ 500 ກ່ວາຄົນ (1 ໂກລິນໂທ 15:6), ຢາກອບຊຶ່ງເປັນນ້ອງຊາຍຂອງພະເຍຊູ (1 ໂກລິນໂທ 15:7), ໂດຍເຫຼົ່າສາວົກຂະນະທີ່ພະອົງຈະສະເດັດຂຶ້ນສູ່ສະຫວັນ (ລູກາ 40:50-51), ເປົາໂລເມື່ອກັບໃຈ (ກິດຈະການ 9:5)

(3) ບາງຄົນບໍ່ເຊື່ອຈົນກ່ວາຈະໄດ້ເຫັນຮອຍຕະປູ ທີ່ຝາມື ແລະເທົ້າຂອງພະອົງ (ລູກາ 24: 39-41); ໂຢຮັນ 20:24-27)

(4) ເຫຼົ່າສາວົກໄດ້ຮັບການປ່ຽນແປງຈາກຄົນທີ່ເຄີຍອ່ອນແອທໍ້ແທ້ ກາຍເປັນພະຍານທີ່ ແຂັ້ມແຂງເຕັມໄປດ້ວຍຄວາມຫວັງ ແລະຄວາມກ້າຫານ ເພາະເຂົາໄດ້ເຫັນອົງພະຜູ້ ເປັນເຈົ້າໃນສະພາບເປັນຂຶ້ນມາຈາກຄວາມຕາຍ ແລະເຫຼົ່ານັ້ນໄດ້ປະຕິບັດງານດ້ວຍ ອຳນາດຂອງພະວິນຍານບໍລິສຸດເຊິ່ງອົງພະຜູ້ເປັນເຈົ້າໄດ້ປະທານລົງມາພະສັນຍານ ຫຼັງຈາກທີ່ສະເດັດສູ່ສະຫວັນ

ມາລາໂກ 14:50; ລູກາ 22:54; ໂຢຮັນ 20:19; ກິດຈະການ 2:14, 32, 36, 46; ກິດຈະການ 3:12, 14-15; ກິດຈະການ 4:12-13; ກິດຈະການ 4:19-20, 29, 31, ກິດຈະການ 5:29, 41, 42

**23. ການເປັນຂຶ້ນມາຈາກຄວາມຕາຍຂອງພະອົງມີຄວາມໝາຍແນວໃດກັບເຮົາ?**

ໝາຍຄວາມວ່າເຮົາມີພະຄຣິດຜູ້ຊົງພະຊົນຢູ່ ພະອົງເປັນຜູ້ຜ່ານປະສົບການຄວາມທຸກຍາກແລະ ການທົດລອງຕ່າງໆ ຂອງໂລກນີ້ ແຕ່ປານນັ້ນ ພະອົງກໍບໍ່ເຄີຍທຳບາບ ພະອົງເປັນຜູ້ມີໄຊຊະນະ ຄວາມຕາຍ ແລະຫລຸມຝັງສົບເຮົາຈຶ່ງມີຄວາມໝັ້ນໃຈໄດ້ວ່າເຮົາຈະຟື້ນຈາກຄວາມຕາຍໃນຮ່າງ ກາຍໃໝ່ແລະຈະຄົງມີຊີວິດຫຼັງຈາກຕາຍໄປແລ້ວ.

“ແລະຖ້າພະຄຣິດບໍ່ໄດ້ຊົງຖືກຊຸບໃຫ້ເປັນຂຶ້ນມາ ຄວາມຂອງທ່ານໄຮ້ປະໂຫຍດທ່ານຍັງຕົກຢູ່ໃນບາບ

ຂອງຕົນ“ (1 ໂກລິນໂທ 15:17)

ເຮັບເລີ 5:24-25; 1ໂຢຮັນ 2:1

**24. ຫຼັງຈາກທີ່ພະອົງເປັນຂຶ້ນມາຈາກຄວາມຕາຍ ພະອົງຍັງຄົງຢູ່ໃນໂລກນີ້ອີກຈັກວັນ**

40 ວັນ (ກິດຈະການ 1:3)

**25. ພະອົງສະເດັດໄປໃສ**

ພະອົງສະເດັດກັບໄປສະຫວັນ ມີຫຼາຍຄົນທີ່ຮັກພະອົງ ເຫັນພະອົງສະເດັດໄປຕໍ່ໜ້າຕໍ່ຕາແລະມີເມກມາຮັບພະອົງ ໃຫ້ຫາຍລັບໄປຈາກສາຍຕາຂອງເຂົາ (ກິດຈະການ 1:9-11)

**26. ກ່ອນພະອົງຈະເດັດສູ່ສະຫວັນ ພະອົງໄດ້ໃຫ້ພະບັນຊາພິເສດຫຍັງແດ່ແກ່ສາວົກຂອງພະອົງ**

ພະອົງໄດ້ສັ່ງເຂົາເຫຼົ່ານັ້ນໃຫ້ອອກໄປສັ່ງສອນຄົນທຸກຊາດ ໃຫ້ເປັນສາວົກຂອງພະອົງ ໃຫ້ຮັບບັດຕິສມາໃນພະນາມແຫ່ງພະບິດາ ພະບຸດ ແລະພະວິນຍານບໍລິສຸດ ສອນຄົນເຫຼົ່ານັ້ນໃຫ້ຖືຮັກສາສິ່ງສາລະພັດທີ່ພະອົງໄດ້ບັນຊາ (ມັດທາຍ 28:19-20; ກິດຈະການ 1:8)

27. **ມີພະສັນຍາຫຍັງແດ່ ທີ່ໃຫ້ໄວ້ກັບເຫຼົ່າສາວົກ ພາຍຫຼັງທີ່ພະອົງສະເດັດຂຶ້ນສູ່ສະຫວັນ**

ທູດສະຫວັນມາບອກແກ່ສາວົກເຫຼົ່ານີ້ວ່າ ພະເຢຊູອົງດຽວທີ່ເຂົາເຫັນຫາຍລັບໄປໃນສະຫວັນຈະສະເດັດກັບລົງມາອີກ ໃນສະພາບດຽວກັນກັບເຂົາເຫັນສະເດັດຂຶ້ນໄປ (ກິດຈະການ 1:10-11)

**28. ພະເຢຊູເຄີຍໃຫ້ພະສັນຍາເຊັ່ນນັ້ນບໍ ກ່ອນທີ່ພະອົງຈະລະຈາກໂລກນີ້ໄປ**

ຖືກແລ້ວ ພະອົງເຄີຍສັ່ງສອນເລື້ອຍໆ ກ່ຽວກັບການສະເດັດກັບມາອີກ ແລະສະພາບໃນໂລກນີ້ກ່ອນທີ່ພະອົງຈະສະເດັດກັບມາ

“ເຮົາໄປຈັດຕຽມທີ່ໄວ້ສຳລັບທ່ານທັງຫຼາຍ ເມື່ອເຮົາໄປຈັດຕຽມທີ່ໄວ້ສຳລັບທ່ານແລ້ວ ເຮົາຈະກັບມາອີກ ຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ໃສ ທ່ານທັງຫຼາຍຈະໄດ້ຢູ່ທີ່ນັ້ນດ້ວຍ“(ໂຢຮັນ 14:2, 3)

ມັດທາຍ 24; ມາລາໂກ 13:12-14, 22, 29 ແລະ ລູກາ 17:22-26 ຕ່າງກໍບອກເຖິງສະພາບກ່ອນທີ່ພະອົງຈະສະເດັດກັບມາ

**29. ພະອົງໄດ້ສະເດັດກັບມາແລ້ວຫຼືຍັງ**

ພະອົງຍັງມີໄດ້ສະກັບມາ ແຕ່ພະອົງອາດຈະມາໃນເວລາໃດເວລາໜຶ່ງ ບໍ່ມີໃຜຮູ້ເຖິງວັນເວລາທີ່ພະອົງຈະສະເດັດກັບມາ ເຮົາຄວນຈະຕຽມພ້ອມຢູ່ສະເໝີສຳລັບການສະເດັດກັບມາທຸກເວລາ

“ດ້ວຍວ່າອົງພະຜູ້ເປັນເຈົ້າຈະສະເດັດກັບມາຈາກສະຫວັນດ້ວຍພະດຳລັດສັ່ງ ດ້ວຍສຳນຽງຮຽກຂອງອັດເທວະດາ ແລະສຽງແກຂອງພະເຈົ້າ ແລ້ວອົງພະຜູ້ເປັນເຈົ້າຈະສະເດັດລົງມາຈາກສະຫວັນ ພວກຄົນທີ່ເຊື່ອໃນພະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ“ (1 ເທຊະໂລນີກ 4:16)

ມັດທາຍ 24:30; 1ເທຊະໂລນີກ 5:1-2

**30. ເມື່ອພະອົງສະເດັດກັບມາ ພະອົງຈະມາສະພາບກຸມມານນ້ອຍໆ ໃນຄອບຄົວຂອງຄົນຈົນເຊັ່ນນັ້ນຫຼື**

ເປົ່າເລີຍ ພະອົງຈະມາໃນຖານະກະສັດຜູ້ພິຊິດ ແລະຈະພິພາກສາຄົນທັງປວງ

"ເພາະຈຳເປັນທີ່ເຮົາທຸກຄົນຈະຕ້ອງປະກົດຕົວ ທີ່ໜ້າບັງລັງຂອງພະຄຣິດ ເພື່ອທຸກຄົນຈະໄດ້ຮັບສົມກັບການທີ່ໄດ້ປະພຶດໃນຮ່າງກາຍນີ້ ແລ້ວແຕ່ຈະດີຫຼືຊົ່ວ" (2ໂກລິນໂທ 5:10)

ມັດທາຍ 24:30ຂ, 31; ກິດຈະການ 17:31; ໂຢຮັນ 5:22; 2 ເປໂຕ 3:10-12

**31. ທຸກຄົນຈະມີຄວາມດີໃຈບໍ ເມື່ອເຫັນພະອົງສະເດັດກັບມາ?**

ແມ່ນບໍທຸກຄົນຈະມີຄວາມດີໃຈ ຄົນທີ່ຮັກພະອົງແລະໄວ້ວາງໃຈພະອົງ ເພື່ອຮັບເອົາຄວາມລອດເທົ່ານັ້ນຈະມີຄວາມສຸກທີ່ໄດ້ເຫັນພະອົງ ສ່ວນຄົນອື່ນໆຈະມີຄວາມເກງກົວທີ່ມາຢືນຈຳເພາະພະພັກຂອງພະອົງ

"ແລ້ວກະສັດທັງຫຼາຍໃນໂລກ ພວກໃຫຍ່ຄົນໂຕ ນາຍທະຫານໃຫຍ່ ເສດຖີຜູ້ມີອຳນາດ ແລະທຸກທັງທີ່ເປັນທາດ ແລະເປັນອິດສະຫຼະ ຊ່ອນຕົວຢູ່ຕົວໃນຖ້ຳແລະໂຂດຫີນຢູ່ຕາມພູເຂົາພວກເຂົາຮ້ອງບອກກັບພູເຂົາແລະໂຂດຫີນວ່າ ຈົ່ງລົ້ມທັບເຮົາເຖີດ ຈົ່ງຊ່ອນເຮົາໄວ້ໃຫ້ພົ້ນຈາກພະພັກຂອງພະອົງຜູ້ປະທັບຢູ່ເທິງພຣະທີ່ນັ່ງ ແລະໃຫ້ພົ້ນຈາກພຣະພິໂຣຂອງພະເມດໂປຣດໃຫ້" ( 6:15-16)

1 ເທຊະໂລນິກ 5:10-11; 1 ເທຊະໂລນິກ 4:16-18

**32. ດຽວນີ້ພະເຍຊູໃສ?**

(1) ພະເຍຊູຢູ່ເທິງສະຫວັນ ປະທັບຢູ່ເບື້ອງຂອງພະບິດາ ກຳລັງອະທິຖານເພື່ອນຄຣິດສຕຽນ

"ໃຜເລົ່າຈະເປັນຜູ້ປັບໂທດອີກ ພະເຍຊູນະຫຼືຜູ້ຊົງສິ້ນພະຊົນແລ້ວ ແລະຍິ່ງກ່ວານັ້ນອີກໄດ້ຊົງຖືກຊູບໃຫ້ເປັນຂຶ້ນມາຈາກຄວາມຕາຍ ຊົງຢູ່ເບື້ອງພະຫັດຂອງພະເຈົ້າ ແລະຊົງອະທິຖານຂໍເພື່ອເຮົາທັງຫຼາຍດ້ວຍ" (ໂຣມ 8:34)

ມາລາໂກ 14:62; 16:19; ກິດຈະການ 7:55; ໂຄໂລຊີ 3:1; ເຮັບເລີ 1:3; 8:1; 10:12; 12:2; 1 ເປໂຕ 3:22

(2) ພະເຍຊູຊົງຢູ່ກັບເຮົາຜູ້ຊຶ່ງໄວ້ວາງໃຈພະອົງ ເປັນພະຜູ້ຊ່ວຍໃຫ້ລອດພະອົງດຳເນີນໄປກັບເຮົາແລະສົນທະນາກັບເຮົາ ເຖິງແມ່ນວ່າເຮົາບໍ່ອາດເຫັນພະອົງດ້ວຍຕາຂອງເຮົາ

"ຖ້າຜູ້ໃດຮັກເຮົາ ຜູ້ນັ້ນຈະປະພຶດຕາມຄຳຂອງເຮົາ ແລະພະບິດາຈະຊົງຮັກເຂົາ ແລ້ວພະບິດາກັບເຮົາຈະມາຫາເຂົາແລະຢູ່ກັບເຂົາ" (ໂຢຮັນ 14:23)

**33. ຂ້າພະເຈົ້າຈະໄວ້ວາງໃຈພະອົງ ແລະຈະໃຫ້ພະອົງປະທັບຢູ່ໃນຈິດໃຈຂ້າພະເຈົ້າໄດ້ຢ່າງໃດ ?**

ທ່ານຈະຕ້ອງທູນຕໍ່ພະອົງຈາກຈິດໃຈຂອງທ່ານ ໃຫ້ພະອົງອະໄພຄວາມຜິດບາບແກ່ທ່ານ ແລະເປີດຈິດໃຈຂອງທ່ານ ແລ້ວເຊີນໃຫ້ພະເຍຊູມາປະທັບ ແລະເປັນຜູ້ດູແລຊີວິດຂອງທ່ານ ແລະທູນຂໍໃຫ້ພະອົງຊ່ວຍທ່ານຮູ້ວ່າຈະທຳຢ່າງໃດເຖິງຈະເຊື່ອຟັງພະອົງໄດ້ໃນທຸກສິ່ງ

"ນີ້ແນະເຮົາຢືນເຄາະຢູ່ທີ່ປະຕູຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະເປີດປະຕູເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮັບປະທານຮ່ວມກັບເຂົາ ແລະເຂົາຈະຮັບປະທານອາຫານຮ່ວມກັບເຮົາ" ( ພະນິມິດ 3:2)

"…ຈົ່ງເຊື່ອແລະວາງໃຈໃນພະເຍຊູເຈົ້າແລະທ່ານຈະລອດ…" (ກິດຈະການ 16:31)

ໂຢຮັນ 1:12; 3:16; 20:31; ໂຣມ 10:9, 10: 13

## ບົດທີ່ 4

## ພະວິນຍານບໍລິສຸດ

**1. ພະວິນຍານບໍລິສຸດຄືໃຜ?**

ພະວິນຍານບໍລິສຸດຄື ພະເຈົ້າຜູ້ເປັນພຣະເຈົ້າໃນສາມ

"ເພາະວ່າພະວິນບໍລິສຸດຈະຊົງໂປຣດສອນທ່ານເວລາໂມງນັ້ນເອງວ່າຄວນຈະເວົ້າອັນໃດ" (ລູກາ 12:12)

ມັດທາຍ 28:19-20

2. **ພະວິນຍານບໍລິສຸດຢູ່ໃສ?**

ພະອົງເປັນພະເຈົ້າ ແລະພະເຈົ້າຢູ່ທຸກຫົນທຸກແຫ່ງ ພະອົງຢູ່ເທິງສະຫວັນ ແລະຢູ່ເທິງໂລກ

ພະເຢຊູກ່າວວ່າ"ແຕ່ອົງຜູ້ຊ່ວຍຄືພະວິນຍານບໍລິສຸດ ຊຶ່ງພະບິດາຈະຊົງໃຊ້ມາ ໃນນາມຂອງເຮົານັ້ນຈະຊົງສອນທ່ານທັງຫຼາຍທຸກສິ່ງ" (ໂຢຮັນ 14:26)

"ແຕ່ທ່ານທັງຫຼາຍຈະໄດ້ຮັບພະລາຊະທາລິດເດດ ເມື່ອພະວິນຍານບໍລິສຸດຈະເດັດມາເໜືອທ່ານ" (ກິດຈະການ 1:8 )

ໂຢເອນ 2:28

**3. ງານຂອງພະວິນບໍລິສຸດຄືແນວໃດ ?**

(ກ) ງານຂອງພະວິນຍານບໍລິສຸດມີຫຼາຍກ່ອນການສະເດັດສູ່ສະຫວັນຂອງພະຄຣິດ

1. ເມື່ອພະເຈົ້າຊົງສ້າງໂລກ ມີພະວິນຍານບໍລິສຸດຢູ່ຮ່ວມດ້ວຍ

   "ແລະພະວິນຍານຂອງພະເຈົ້າປະກົດຢູ່ເໜືອນ້ຳນັ້ນ" (ປະຖົມມະການ 1:2)

2. ພະວິນຍານບໍລິສຸດທຳງານຄວາມຄິດ ແລະຈິດໃຈຂອງປະຊາກອນຂອງພະເຈົ້າໃນສະໄໝກ່ອນໆ ໃຫ້ຂຽນພະຄຳຂອງພະເຈົ້າ ນັ້ນຄື **ພະຄຳພີ**

   "ເພາະຄຳຂອງຜູ້ເຜີຍພະວັກຈະນະນັ້ນ ບໍ່ໄດ້ມາຈາກຄວາມຄິດ ໃນຈິດໃຈຂອງມະນຸດ ແຕ່ມະນຸດໄດ້ກ່າວຄຳຊຶ່ງມາຈາກພະເຈົ້າຕາມທີ່ພະວິນຍານບໍລິສຸດໄດ້ຊົງດົນໃຈເຂົາ" (2ເປໂຕ 1:21)

   2 ທີໂມທີ 3:16

3. ພະອົງສະເດັດລົງມາເທິງຜູ້ຮັບໃຊ້ຂອງພະເຈົ້າໃນສະໄໝກ່ອນໆແລະປະທານລິດອຳນາດພິເສດແກ່ເຂົາເຫຼົ່ານັ້ນໃນການແຜ່ພະວັດຈະນະ

   "ພະວິນຍານແຫ່ງພະເຈົ້າຊົງຢູ່ເໜືອຂ້າພະເຈົ້າ ເພາະພະເຈົ້າໄດ້ຊົງເຈີມຂ້າພະເຈົ້າໄວ້ເພື່ອນຳຂ່າວດີມາຍັງຜູ້ທີ່ທຸກໃຈ ພະອົງຊົງໃຫ້ຂ້າພະເຈົ້າມາໃຫ້ເລົ້າໂລມຄົນທີ່ຊອກຊ້ຳກຳໃຈແລະຮ້ອງປະກາດອິດສະລະພາບແກ່ບັນຊະເລີຍ ແລະບອກການເປີດເຮືອນຈຳອອກໃຫ້ແກ່ຜູ້ທີ່ຈອງຈຳ" (ອີຊາຢາ 61:1)

4. ພະອົງສະເດັດມາເໜືອຜູ້ຮັບໃຊ້ຂອງພະເຈົ້າ ເພື່ອອອກໄປຕໍ່ສູ້ເພື່ອປົດປ່ອຍປະຊາກອນຂອງພະເຈົ້າໃຫ້ພົ້ນຈາກການກົດຂີ່

“ພະວິນຍານຂອງພະເຈົ້າສະຖິດກັບໂອນີທເອລ ແລະທ່ານຈຶ່ງວິນິດໄສຄົນອິສລາເອນ ແລະອອກໄປທຳສົງຄາມ“ (ຜູ້ວິນິດໄສ 3:10)

ຜູ້ວິນິດໄສ 6:34

5. ພະອົງປະທານລິດອຳນາດແກ່ນາງ ມາຣີອາຜູ້ເປັນມານດາຂອງພະເຢຊູເພື່ອໃຫ້ເກີດການຕັ້ງຄັນແລະກຳເນີດບຸດຊາຍຄົນໜຶ່ງ ໂດຍບໍ່ໄດ້ມີບິດາທາງຝ່າຍໂລກ

“ທູດສະຫວັນຈຶ່ງຕອບນາງວ່າ ພະວິນຍານບໍລິສຸດສະເດັດລົງມາເທິງເຈົ້າແລະລິດເດດສູງສຸດຈະປົກເຈົ້າເພາະສະນັ້ນບຸດທີ່ຈະເກີດມານັ້ນຈະໄດ້ຮຽກວ່າ ວິສຸກ ແລະຮຽກວ່າ ພະບຸດຂອງພະເຈົ້າ“ (ລູກາ 1:35)

6. ພະອົງກໍ່ຊົງຢູ່ດ້ວຍໃນພິທີບາຕິສມາຂອງພະເຢຊູ ຂະນະພະເຢຊູຂຶ້ນມາຈາກນ້ຳ

“ແລະໂຢຮັນກ່າວເປັນພະຍານວ່າ ຂ້າພະເຈົ້າພະວິນຍານເໝືອນດັ່ງນົກພິຮາບລົງມາຈາກສະຫວັນແລະຊົງສະຖິດເທິງພະອົງ“(ໂຢຮັນ 1:32)

ມັດທາຍ 3:16

(ຂ) ງານພະວິນຍານບໍລິສຸດພາຍຫຼັງທີ່ພະເຢຊູສະເດັດສູ່ສະຫັວນ

1. ໃນວັນເພນເຕສະເຕພະວິນຍານບໍລິສຸດໄດ້ສະເດັດລົງມາດ້ວຍທານຸພາບເທິງສາວົກຂອງພະເຢຊູ ແລະປະທານລິດເດດແກ່ເຂົາເຫຼົ່ານັ້ນ ເພື່ອໃຫ້ໄປເທດສະໜາຂ່າວປະເສີດເລື່ອງພະຄຣິດສໃນພາສາຕ່າງໆກັນ

2. ພະວິນຍານບໍລິສຸດທຳໃຫ້ຜູ້ທີ່ບໍ່ເຊື່ອພະເຈົ້າສຳນຶກເຖິງຄວາມຜິດບາບ ໂດຍສະເພາະຢ່າງຍິ່ງບາບທີ່ບໍ່ຍອມເຊື່ອແລະໄວ້ວາງໃຈໃນພະເຢຊູວ່າເປັນພະຜູ້ເປັນເຈົ້າແລະພະຜູ້ຊ່ວຍໃຫ້ລອດ

“ເມື່ອພະອົງສະເດັດມາແລ້ວ ພະອົງຈະຊົງກະທຳໃຫ້ໂລກຮູ້ແຈ້ງໃນເລື່ອງຄວາມຜິດຄວາມຊອບທຳແລະການພິພາກສາໃນເລື່ອງຄວາມຜິດນັ້ນຄືເພາະເຂົາບໍ່ວາງໃຈໃນເຮົາ“ (ໂຢຮັນ 16:8-9)

3. ພະວິນຍານບໍລິສຸດທຳໃຫ້ບຸກຄົນເຂົ້າມາຢູ່ໃນຄອບຄົວຂອງພະເຈົ້າ ຊຶ່ງຮຽກວ່າບັງເກີດໃໝ່ຫຼືເກີດຂຶ້ນໃນອານາຈັກຂອງພະເຈົ້າ ດັ່ງບຸກຄົນທີ່ຕ້ອນຮັບພະເຢຊູເປັນພະຜູ້ຊ່ວຍໃຫ້ລອດໄດ້ກາຍເປັນບຸດຂອງພະເຈົ້າໂດຍລິດເດດຂອງພະວິນຍານບໍລິສຸດ

“ພະເຢຊູກ່າວວ່າ ເຮົາບອກຄວາມຈິງແກ່ທ່ານວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດໃໝ່ຈາກນ້ຳແລະພະວິນຍານຜູ້ນັ້ນຈະເຂົ້າໃນແຜ່ນດິນຂອງພະເຈົ້າບໍ່ໄດ້“ (ໂຢຮັນ 3:5)

ໂຢຮັນ 1:12-13; ໂຢຮັນ 3:3

4. ພະວິນຍານບໍລິສຸດປະທັບຢູ່ໃນຈິດໃຈຂອງຜູ້ເຊື່ອທີ່ແທ້ຈິງທຸກຄົນ ພະອົງຈະປະທັບຢູ່ທີ່ນັ້ນສະເໝີ

“ທ່ານບໍ່ຮູ້ຫຼືວ່າຮ່າງກາຍຂອງທ່ານ ເປັນວິຫານຂອງພະວິນຍານບໍລິສຸດ ຊຶ່ງສະຖິດຢູ່ໃນທ່ານຊຶ່ງທ່ານໄດ້ຮັບຈາກພະເຈົ້າ ທ່ານບໍ່ແມ່ນເຈົ້າຂອງຕົວທ່ານເອງ“ (1 ໂກລິນໂທ 6:19)

ໂຢຮັນ 14:17; ໂຣມ 8:9; 1 ໂກລິນໂທ 3:16; 2 ຕີໂມທີ 1:14

5. ພຣະວິນຍານບໍລິສຸດເປັນບຸກຄົນ ເຮົາອາດຈະທຳໃຫ້ພະອົງເສຍພະໄທ ເມື່ອເຮົາທຳ

ຫຼືບໍ່ຍອມໃຫ້ພະຄຣິດເປັນໜຶ່ງໃນຊີວິດຂອງເຮົາ

"ແລະຢ່າທຳໃຫ້ພະວິນຍານບໍລິສຸດຂອງພະເຈົ້າເສຍພະໄທເພາະໂດຍພະວິນຍານນັ້ນທ່ານໄດ້ຖືກປະທັບຕາໝາຍທ່ານໄວ້ເພື່ອວັນທີ່ຈະຊົງໄຖ່ໃຫ້ລອດ" (ເອເຟໂຊ 4:30)

6. ພະວິນຍານບໍລິສຸດທຳໃຫ້ຄຣິດສຕຽນສຳນຶກຢູ່ສະເໝີວ່າພະຄຣິດຊົງສະຖິດຢູ່ກັບເຂົາ

"ແຕ່ເມື່ອອົງພະຜູ້ຊ່ວຍທີ່ເຮົາຈະໃຊ້ມາຈາກພະບິດາຫາທ່ານທັງຫຼາຍຄືພະວິນຍານແຫ່ງຄວາມຈິງຜູ້ຊົງມາຈາກພະບິດານັ້ນ ໄດ້ສະເດັດມາແລ້ວ ພະອົງຈະຊົງເປັນພະຍານໃຫ້ແກ່ເຮົາ" (ໂຢຮັນ 15:26)

7. ພະວິນຍານບໍລິສຸດຈະນຳເຮົາໄປສູ່ຄວາມຈິງທັງໝົດ ຖ້າເຮົາຍອມກັບພະອົງ

"ເມື່ອພະວິນຍານແຫ່ງຄວາມຈິງສະເດັດມາແລ້ວ ພະອົງຈະທ່ານທັງຫຼາຍໄປສູ່ຄວາມຈິງທັງມວນ" (ໂຢຮັນ 16:13)

8. ພະວິນຍານບໍລິສຸດຈະທຳໃຫ້ຄຣິດສຕຽນຮູ້ເຖິງນ້ຳພະທັບຂອງພະອົງທີ່ເຂົາພົບຢູ່ລະຂັ້ນ

"ຖ້າຜູ້ໃດຕັ້ງໃຈປະພຶດຕາມພະປະສົງຂອງພະອົງ ຜູ້ນັ້ນຈະຮູ້ວ່າຄຳສອນນັ້ນມາຈາກພະເຈົ້າ ຫຼືເຮົາຕາມໃຈຊອບຂອງເຮົາເອງ" (ໂຢຮັນ 7:17)

9. ພະວິນຍານບໍລິສຸດຈະສອນເຮົາໃຫ້ເວົ້າແລະອະທິຖານ (ຖ້າເຮົາຍອມກັບພະອົງ) ຕາມນ້ຳພະໄທຂອງພະອົງ

"ເຮົາກ່າວເຖິງເລື່ອງສິ່ງເຫຼົ່ານີ້ດ້ວຍຖ້ອຍຄຳຊຶ່ງມິໃຊ່ປັນຍາຂອງມະນຸດສອນໄວ້ ແຕ່ດ້ວຍຖ້ອຍຄຳຊຶ່ງພະວິນຍານໄດ້ຊົງສັ່ງສອນ" (1 ໂກລິນໂທ 2:13)

ໂຣມ 8:26

10. ພະວິນຍານບໍລິສຸດນຳຄຳອະທິຖານຂອງຄຣິດສຕຽນແລ້ວນຳສະເໜີຕໍ່ພະບິດາຕາມນ້ຳພະໄທຂອງພະອົງ

"ພະວິນຍານຊົງອະທິຖານຂໍເພື່ອຜູ້ເຊື່ອຕາມທີ່ຊອບພະໄທພະເຈົ້າ" (ໂຣມ 8:27)

11. ພະວິນຍານບໍລິສຸດເປັນຜູ້ປອບປະໂລມໃຈຂອງເຮົາໃນຍາມທຸກຍາກພະອົງທຳໃຫ້ຄຣິດສຕຽນມີສັນຕິສຸກແລະຊື່ນຊົມຍິນດີໃນອົງພະຜູ້ເປັນເຈົ້າ ເຖິງວ່າຈະຢູ່ໃນທ່າມກາງຄວາມໂສກເສົ້າເສຍໃຈ ຄວາມທຸກທໍລະມານແລະການທົດລອງກໍຕາມ

"ເຮົາຈະທູນຂໍພະບິດາແລະພະອົງ ຈະປະທານຜູ້ຊ່ວຍອີກຜູ້ໜຶ່ງໃຫ້ແກ່ທ່ານ ເພື່ອຈະຢູ່ກັບທ່ານຕະຫຼອດໄປ" (ໂຢຮັນ 14:16)

ໂຢຮັນ 14:17, 26-27; 15:26; 16:13

12. ພະວິນຍານບໍລິສຸດບໍ່ເປັນພຽງແຕ່ຜູ້ປອບປະໂລມໃຈ ແລະແນະນຳທາງເທົ່ານັ້ນ ພະອົງຍັງປະທານໄຊຊະນະເໜືອຄວາມຜິດບາບຖ້າເຮົາຈະຍອມໃຫ້ພະອົງຄວບຄຸມຊີວິດຂອງເຮົາທັງໝົດ

"ເພື່ອສິ່ງທີ່ບັນຍັດສັ່ງໄວ້ຈະໄດ້ສຳເລັດໃນຕົວເຮົາທັງຫຼາຍຜູ້ບໍ່ດຳເນີນຕາມຝ່າຍເນື້ອໜັງ ແຕ່

ຕາມຝ່າຍພະວິນຍານ" (ໂຣມ 8:4)

ໂຣມ 8:2, 13; ກາລາເທຍ 5:22-23

13. ພະວິນຍານບໍລິສຸດຈະຜະລິດຜົນໃນຊີວິດຂອງເຮົາ ຖ້າເຮົາຍອມກັບພະອົງ

"ຝ່າຍຜົນຂອງພະວິນຍານນັ້ນຄື ຄວາມຮັກ ຄວາມປຣາບປຣື້ມໃຈ ຄວາມປານີຄວາມດີ ຄວາມສັດຊື່ ຄວາມສຸພາບອ່ອນນ້ອມ ການຮູ້ຈັກບັງຄັບຕົນເລື່ອງຢ່າງນີ້ບໍ່ມີທຳບັນຍັດຫ້າມເລີຍ"(ກາລາເທຍ 5:22-23)

## ບົດທີ່ 5

## ມະນຸດ

**1. ມະນຸດມາຈາກໃສ ໃຜເປັນຜູ້ສ້າງ?**

ພະເຈົ້າໄດ້ສ້າງມະນຸດມານານແລ້ວ

"ພະອົງຊົງສ້າງມະນຸດຂຶ້ນຕາມແບບຢ່າງຂອງພະອົງ ຕາມແບບຢ່າງຂອງພະເຈົ້ານັ້ນພະອົງຊົງສ້າງມະນຸດຂຶ້ນ ແລະຊົງສ້າງໃຫ້ເປັນຊາຍ ແລະຍິງ" (ປະຖົມມະການ 1:27)

ປະຖົມມະການ 2:7; 2:18; 2:21-23

**2. ພະເຈົ້າສ້າງມະນຸດແນວໃດ?**

ພະເຈົ້າຊົງປັ້ນມະນຸດຈາກຜົງດິນ ແລະພະອົງຊົງເປົ່າຊີວິດເຂົ້າໄປທາງດັງຂອງມະນຸດ ມະນຸດຈຶ່ງຜູ້ມີຊີວິດ

"ພະເຈົ້າຊົງປັ້ນມະນຸດດ້ວຍຜົງດິນ ລະບາຍລົມເຂົ້າທາງດັງ ມະນຸດຈຶ່ງເປັນມີຊີວິດ" (ປະຖົມມະການ 2:7)

ປະຖົມມະການ 2:21-23

**3. ພະເຈົ້າຊົງສ້າງມະນຸດຂຶ້ນຈັກຄົນ?**

ພະເຈົ້າຊົງສ້າງຜູ້ຊາຍຄົນໜຶ່ງ ແລະຮຽກຊື່ວ່າອາດາມ ແລະແລ້ວພະອົງຊົງສ້າງມະນຸດຜູ້ຍິງໂດຍໃຫ້ຊື່ວ່າ ເອວາ ເຂົາທັງສອງໄດ້ເປັນສາມີພັນລະຍາກັນ ແລະມີບຸດ ນັບຕັ້ງແຕ່ນັ້ນຕໍ່ມາມີມະນຸດມະນຸດບັງເກີດຂຶ້ນໃນໂລກນີ້ເລື້ອຍໆ

"….ພະອົງຊົງມະນຸດຂຶ້ນ ແລະໄດ້ຊົງສ້າງໃຫ້ເປັນຊາຍ ແລະຍິງ ພະເຈົ້າແກ່ມະນຸດ ແລະກ່າວແກ່ເຂົາວ່າຈົ່ງມີລູກທະວີຫຼາຍຂຶ້ນຈົນເຕັມແຜ່ນດິນ ຈົ່ງມີອຳນາດເໜືອແຜ່ນດິນ" (ປະຖົມມະການ 1:27, 28)

ປະຖົມມະການ 5:1-4

**4. ເປັນຫຍັງພະເຈົ້າສ້າງມະນຸດຂຶ້ນມາ?**

ພະເຈົ້າຕ້ອງການມະນຸດໄວ້ເພື່ອສາມັກຄີທຳ ພະອົງຕ້ອງການໃຫ້ມະນຸດຮັກພະອົງ ແລະພະອົງ

ຊົງຮັກມະນຸດ ພະອົງມີພຣະປະສົງໃຫ້ມະນຸດມີສ່ວນໃນຄວາມຊື່ນຊົມຍິນດີແລະສະຫງ່າລາສີຂອງພະອົງ

"ແລ້ວພະເຈົ້າກ່າວວ່າ ໃຫ້ເຮົາສ້າງມະນຸດຕາມ ຢ່າງເຮົາ" (ປະຖົມມະການ 1:26)

"ເວລາເຢັນວັນນັ້ນ ເຂົາທັງສອງໄດ້ສຽງພະເຈົ້າສະເດັດດຳເນີນຢູ່ໃນສວນ" (ປະຖົມມະດການ 3:8)

"ໃນການທີ່ພະເຈົ້າຊົງນຳບຸດມາກຫຼາຍ ໄປສູ່ສັກສີກໍເປັນການເໝາະສົມແລ້ວ ທີ່ພະເຈົ້າຜູ້ຊຶ່ງທຸກສິ່ງດຳລົງຢູ່ໂດຍພະອົງ ແລະພະອົງຈະຊົງໃຫ້ເບີກທາງຄວາມລອດໃຫ້ເຂົາເຫຼົ່ານັ້ນພ້ອມທີ່ຈະຊົງດຳງານນີ້ໂດຍຊົງໃຫ້ຮັບຄວາມທຸກທໍລະມານ" (ເຮັບເລີ 2:10)

**5. ພະເຈົ້າໄດ້ຊົງໃຫ້ອາດາມ ແລະເອວາ ຢູ່ໃສເມື່ອພະອົງໄດ້ຊົງສ້າງເຂົາທັງສອງ?**

ພະເຈົ້າໄດ້ໃຫ້ເຂົາທັງສອງອາໄສຢູ່ໃສສວນທີ່ງົດງາມແຫ່ງໜຶ່ງ ມີຊື່ວ່າ ເອເດນ ສວນນີ້ມີດອກໄມ້ທີ່ ງົດງາມ ແລະຕົ້ນທີ່ຜົນຕ່າງໆ ຊະນິດຢ່າງຫຼວງຫຼາຍ ພະເຈົ້າໄດ້ຊົງດຳເນີນ ແລະກ່າວກັບເຂົາ

"ພະເຈົ້າຈຶ່ງຊົງໃຫ້ມະນຸດນັ້ນຢູ່ໃນສວນເອເດນ ໃຫ້ທຳແລະຮັກສາສວນ" (ປະຖົມມະການ 2:15)

ປະຖົມມະການ 2:8-15

**6. ສວນເອເດນນີ້ຢູ່ໃສ?**

ມີຜູ້ຄິດວ່າສວນນີ້ຢູ່ໃນເມໂສໂປເຕເມຍ ເຊິ່ງມີແມ່ນ້ຳຊື່ ຢູເຟຣຕິສໄຫຼຜ່ານ

"ແລະມີແມ່ນ້ຳສາຍໜຶ່ງໄຫຼຈາກເອເດນລົດສວນນັ້ນ ຈາກນັ້ນກໍແຍກອອກເປັນສາຍ... ແລະແມ່ສາຍທີ່ສີ່ຊື່ ຢູເຟຣຕິສ" (ປະຖົມມະການ 2:10; 14)

**7. ເປັນຫຍັງ ອາດາມ ແລະ ເອວາ ຈຶ່ງບໍ່ໄດ້ອາໄສຢູ່ໃນສວນເອເດນຕະຫຼອດໄປ?**

ເພາະວ່າອາດາມ ແລະເອວາ ໄດ້ທຳບາບຈຶ່ງໄດ້ຖືກຕັດຂາດຈາກພະເຈົ້າ

"ແຕ່ຄວາມບາບຊົ່ວຂອງເຈົ້າທັງຫຼາຍໄດ້ດີກະທຳໃຫ້ເກີດການແຍກລະຫວ່າງເຈົ້າກັບພະເຈົ້າຂອງເຈົ້າ ແລະບາບຂອງເຈົ້າທັງຫຼາຍໄດ້ບັງພະພັກຂອງພະອົງເສຍຈາກເຈົ້າ ພະອົງຈຶ່ງມິໄດ້ຍິນ" (ອີຊາຢາ 59:2)

**8. ມະນຸດທຳບາບຄັ້ງທຳອິດເມື່ອໃດ?**

ອາດາມ ແລະເອວາໄດ້ຂັດຂືນຄຳສັ່ງພະເຈົ້າໃນສວນເອເດນ ພະເຈົ້າໄດ້ເຄີຍສັ່ງເຂົາທັງສອງບໍ່ໃຫ້ຮັບປະທານຜົນໄມ້ຂອງຕົ້ນໄມ້ແຫ່ງຄວາມຮູ້ດີ ແລະຊົ່ວເພາະວ່າຖ້າເຂົາທັງສອງຮັບປະທານມັນເມື່ອໃດເຂົາຈະຕາຍ

"ເມື່ອຍິງນັ້ນເຫັນວ່າຕົ້ນໄມ້ນັ້ນໜ້າຢາກກິນແລະໜ້າແຊບທັງເປັນຕົ້ນໄມ້ທີ່ມຸ່ງໝາຍຈະໃຫ້ເກີດປັນຈຶ່ງເກັບຜົນໄມ້ນັ້ນມາກິນແລ້ວສົ່ງສາມີກິນດ້ວຍ ເຂົາກໍກິນ" (ປະຖົມມະການ 3:6)

**9. ເປັນຫຍັງເຂົາທັງສອງຈຶ່ງບໍ່ເຊື່ອຟັງພະເຈົ້າ?**

ເພາະວ່າ ມານຢູ່ໃນຮ່າງຂອງງູໄດ້ມາຫາເຂົາ ແລະໄດ້ລໍ້ລວງເຂົາທັງສອງໃຫ້ກິນຜົນໄມ້ນັ້ນ ມານນັ້ນໄດ້ບອກກັບ ເອວາ ວ່າພະເຈົ້າບໍ່ຕ້ອງການໃຫ້ເຂົາທັງສອງສະຫຼາດ ແລະຮູ້ດີແລະຊົ່ວ (ພະເຈົ້າບໍ່ເຄີຍມີພະປະສົງໃຫ້ມະນຸດຮູ້ຈັກຄວາມຊົ່ວ) ເອວາ ໄດ້ຟັງສຽງມານແລະຮັບປະທານຜົນໄມ້

ສິ່ງຜົນໄມ້ຕໍ່ໃຫ້ ອາດາມ ອາດາມກໍກິນດ້ວຍ

"ແຕ່ວ່າທຸກຄົນຖືກລໍ້ໃຫ້ຫຼົງ ເມື່ອກິເລດຂອງຕົນເອງລໍ້ແລະຊັກນໍາກະທໍາຕາມຕັນຫາເກີດຂຶ້ນແລ້ວທໍາໃຫ້ເກີດບາບແລະເມື່ອຈະເລີນເຕັມທີ່ແລ້ວນໍາໄປສູ່ຄວາມຕາຍ" (ຢາກອບ 1:14, 15)

ປະຖົມມະການ 3:1-6

**10. ພະເຈົ້າໄດ້ດໍາເນີນການຢ່າງໃດ?**

ພະເຈົ້າໄດ້ສະເດັດເຂົ້າມາສວນທີ່ງົດງາມແຫ່ງນັ້ນ ແລະອາດາມ ອາດາມແລະເອວາໄດ້ລີ້ຢູ່ເພາະເຂົາທັງສອງຮູ້ວ່າໄດ້ກະທໍາບາບຈຶ່ງມີຄວາມຢ້ານຕໍ່ພະເຈົ້າ

"ເວລາກາງເວັນນັ້ນ ເຂົາທັງສອງໄດ້ຍິນສຽງພະເຈົ້າສະເດັດມາດໍາຢູ່ໃນສວນ ຊາຍນັ້ນກັບພັນລະຍາໄດ້ໄປຊ່ອນຕົວຢູ່ໃສພູ່ຕົ້ນໄມ້ໃນສວນນັ້ນໃຫ້ພົ້ນຈາກພະພັກພະເຈົ້າ ພະເຈົ້າຊົງຮຽກຊາຍນັ້ນແລະກ່າວຖາມເຂົາວ່າ ເຈົ້າຢູ່ໃສ" (ປະຖົມມະການ 3:8)

**11. ເຂົາທັງສອງໄດ້ຕາຍເໝືອນດັ່ງທີ່ພະເຈົ້າໄດ້ເຄີຍບອກເຂົາໄວ້ຫຼືບໍ?**

ຖືກແລ້ວ ວິນຍານຈິດຂອງເຂົາທັງສອງໄດ້ຕາຍທັນທີ ເຊິ່ງໝາຍເຖິງວ່າວິນຍານຈິດຂອງເຂົາໄດ້ຖືກຕັດຂາດຈາກພະເຈົ້າຜູ້ເປັນແຫຼ່ງແຫ່ງຊີວິດ ແຕ່ເຖິງຢ່າງໃດກໍຕາມ ຕົວວິນຍານຈິດຍັງຄົງຢູ່

ຮ່າງກາຍຂອງເຂົາທັງສອງຖືກພິພາກສາໃຫ້ຕາຍ ຄືເມື່ອເຖິງເວລາເຂົາກໍຈະຕາຍທາງຝ່າຍກາຍ

"ພະອົງຊົງກະທໍາໃຫ້ທ່ານທັງຫຼາຍມີຊີວິດຢູ່ ເຖິງທ່ານຕາຍແລ້ວໂດຍການລະເມີດ ແລະການບາບ" (ເອເຟໂຊ 2:1)

"ເຫດສັນນັ້ນ ເຊັ່ນດຽວກັບທີ່ບາບໄດ້ເຂົ້າມາໃນໂລກ ເພາະຄົນໆດຽວແລະຄວາມຕາຍມາເພາະບາບນັ້ນແລະຄວາມຕາຍກໍໄດ້ແຜ່ໄປເຖິງມວນມະນຸດທຸກຄົນ ເພາະມະນຸດທຸກຄົນທໍາບາບ" (ໂຣມ 5:12)

"ມີຂໍ້ກໍານົດສໍາລັບແລ້ວວ່າຈະຕາຍຄັ້ງດຽວ ແລະຫຼັງຈາກນັ້ນຈະມີການພິພາກສາສັນໃດ" (ເຮັບເລີ 9:27)

2 ໂກລິນໂທ 5:14; ເອເຟໂຊ 2:5

**12. ຄໍາວ່າຕາຍໝາຍຄວາມວ່າແນວໃດ?**

ຄວາມຕາຍຄືການຖືກແຍກຈາກຊີວິດ ມັນບໍ່ໄດ້ໝາຍເຖິງການທໍາລາຍໃຫ້ວາຍວອດ ພະເຈົ້າເປັນແຫຼ່ງຊີວິດແລະດັ່ງນັ້ນມະນຸດຈຶ່ງຖືກຕັດຂາດຈາກພະເຈົ້າໂດຍຄວາມບາບ ເມື່ອຮ່າງກາຍຂອງເຮົາຕາຍ ສ່ວນວິນຍານ ກໍຍັງຄົງຢູ່ ຮ່າງກາຍອາດຈະຄ່ອຍໆປ່ຽນເປັນຜົງຂີ້ດິນຫຼືເປັນເຖົ່າຖ່ານແຕ່ມັນກໍ

ມັດທາຍ 8:22; ໂຣມ 4:19; 2ໂກລິນໂທ 5:14; ເອເຟໂຊ 2:1, 5; ໂຄໂລຊີ 2:13; 1 ຕີໂມທີ 5:6

**13. ພະເຈົ້າລົງໂທດມະນຸດເພາະການກະທໍາບາບໄດ້ຢ່າງໃດ?**

ເນື່ອງມະນຸດບໍ່ເຊື່ອຟັງພະເຈົ້າ ເຂົາຈຶ່ງບໍ່ໄດ້ຮັບອະນຸຍາດໃຫ້ກິນຜົນຂອງຕົ້ນໄມ້ແຫ່ງຊີວິດຊຶ່ງຢູ່ໃນສວນນັ້ນ ມະນຸດຈຶ່ງຕົກຢູ່ໃນຄວາມບາບ ບໍ່ມີຄວາມຫວັງທີ່ຈະໄດ້ຮັບການໄຖ່ຈາກບາບ ດັ່ງນັ້ນ

(1) ພະເຈົ້າຈຶ່ງຂັບໄລ່ເຂົາໃຫ້ອອກໄປຈາກອັນງົດງາມນັ້ນ ແລະພະອົງໄດ້ສາບແຊ່ງພື້ນແຜ່ນດິນ ຊຶ່ງຈະທຳໃຫ້ເກີດຕົ້ນໄມ້ທີ່ມີໜາມຕ່າງໆຕັ້ງແຕ່ນັ້ນມາ

(2) ຕັ້ງແຕ່ນັ້ນເປັນຕົ້ນໄປ ອາດາມຕ້ອງທຳງານໜັກ ອາບເຫງື່ອຕ່າງນ້ຳເພື່ອດຳລົງຊີບ ງານທີ່ເຂົາຕ້ອງທຳນັ້ນເປັນ "ງານໜັກຫຼາຍ" ແມ່ນບໍເປັນທີ່ພໍໃຈເໝືອນກັບການດູແລສວນກ່ອນທີ່ເຂົາໄດ້ທຳບາບ

(3) ຜູ້ຈະຕ້ອງຄອດລູກດ້ວຍຄວາມເຈັບປວດ

(4) ຕັ້ງແຕ່ນັ້ນເປັນຕົ້ນມາງູແລະມະນຸດເລີ່ມເປັນສັດຕູກັນ

ການລົງໂທດທັງໝົດດັ່ງກ່າວນີ້ ຖືກກະທຳຂຶ້ນເພາະພະເຈົ້າຮັກມະນຸດແລະຕ້ອງການນຳມະນຸດກັບມາຄືນດີກັບພະເຈົ້າ

"ພະອົງຊົງໄລ່ຊາຍນັ້ນອອກໄປແລະຊົງຕັ້ງພວກເຄຣູບທາງທິດຕາເວັນອອກແຫ່ງສວນເອເດນແລະຕັ້ງ ອັນໜຶ່ງທີ່ໝູນໄດ້ຮອບທິດໄວ້ເຝົ້າທາງທີ່ຈະເຂົ້າສູ່ຕົ້ນໄມ້ແຫ່ງຊີວິດນັ້ນ" (ປະຖົມມະການ 3:24)

ປະຖົມມະການ 3:16-19, 23

**14. ມະນຸດຮຸ່ນຫຼັງຕໍ່ມາຍັງຄົງທຳບາບຢູ່ບໍ?**

ຖືກແລ້ວ ມະນຸດໄດ້ປ່ຽນຄວາມຈົງຮັກພັກດີທີ່ມີຕໍ່ພະເຈົ້າ ແລະໄປມີຄວາມຈົງຮັກພັກດີຕໍ່ມານຮ້າຍ ດັ່ງນັ້ນ, ເມື່ອມະນຸດເກີດມາກໍເທົ່າກັບວ່າໄດ້ເກີດມາໃນອານາຈັກຂອງມານຮ້າຍ ແລະທຳບາບເອງເປັນປົກກະຕິວິໄສ (ໂຣມ5:12 , 18, 19)

ເຮົາຈະໄດ້ວ່າໃນບັນດາລູກຂອງມະນຸດຄູ່ທຳອິດທີ່ມີການຂ້າກັນແລ້ວ ຄາອິນຂ້າອາເບນນ້ອງຊາຍຂອງລາວ ຕໍ່ມາຄວາມບາບໄດ້ແຜ່ກະຈາຍໄປທົ່ວໂລກ

"ພະເຈົ້າເຫັນວ່າຄວາມຊົ່ວຊ້າຂອງມະນຸດມີມາກເທິງແຜ່ນດິນ ແລະຊົງເຫັນວ່າເຄົ້າຄວາມຄິດໃນໃຈຂອງເຂົາລ້ວນເປັນຮ້າຍສະເໝີ" (ປະຖົມມະການ 6:5)

ປະຖົມມະການ 4:8; ເພງສັນລະເສີນ 51:5; ໂຣມ 5:12, 18, 19

**15. ເມື່ອບາບຄອບງຳໂລກ ໂລກໄດ້ຮັບການລົງໂທດຫຍັງແດ່ ຕັ້ງແຕ່ນັ້ນມາມະນຸດໄດ້ປະສົບຫຍັງແດ່ ແລະໃນຍຸກສຸດທ້າຍຈະເກີດຫຍັງຂຶ້ນກັບມະນຸດ?**

ບາບຍ່ອມນຳມາຊຶ່ງການລົງໂທດສະເໝີ

(1) ພະເຈົ້າໄດ້ໃຫ້ນ້ຳຖ້ວມເພື່ອທຳລາຍຊາວໂລກທັງໝົດຍົກເວັ້ນໂນອາ ແລະຄອບຄົວຂອງເຂົາຊຶ່ງເປັນຜູ້ທີ່ຮັກແລະຮັບໃຊ້ພະເຈົ້າ (ມີຢູ່ 8 ຄົນ)

"ພະເຈົ້າຈຶ່ງກ່າວວ່າ ເຮົາຈະກວາດລ້າງມະນຸດທີ່ເຮົາໄດ້ມານີ້ໄປເສຍຈາກແຜ່ນດິນທັງມະນຸດ

ສັດກັບບັນດາສັດລັ່ງງ ແລະນົກໃນອາກາດດ້ວຍ ເພາະເສຍໃຈທີ່ໄດ້ສ້າງມາແຕ່ໂນອາເປັນທີ່ໂປຣດປຣານໃນສາຍພະເນດພະເຈົ້າ" (ປະຖົມມະການ 6:7-8)

"ພະເຈົ້າທອດພະເນດແຜ່ນດິນຊຶ່ງເຫ

ເຫັງແຜ່ນດິນ" (ປະຖົມມະການ 6:12)

"ແລ້ວພະເຈົ້າກ່າວແກ່ໂນອາວ່າ ເຈົ້າຈົ່ງເຂົ້າໄປໃນນາວາທັງໝົດທັງຄົວເຮືອນຂອງເຈົ້າເພາະໃນຊົ່ວອາຍຸຄົນຮຸ່ນນີ້ ເຮົາເຫັນເຈົ້າເປັນຄົນຊອບທຳ" (ປະຖົມມະການ 7:1)

(2) ຊາວເມືອງໂສໂດມແລະເມືອງໂກໂມຣາຖືກທຳລາຍໂດຍໄຟຈາກສະຫວັນເພາະຄວາມຊົ່ວຂອງເຂົາ ໂລທຜູ້ຊອບທຳແລະລູກສາວຂອງເຂົາເທົ່ານັ້ນທີ່ລອດພົ້ນຈາກການຖືກທຳລາຍ

"ພະເຈົ້າໄດ້ກ່າວວ່າ ສຽງຮ້ອງກ່າວໂທດເມືອງໂສໂດມແລະເມືອງໂກໂມຣານັ້ນດັງເຫຼືອເກີນແລະບາບຂອງເຂົາກໍໜັກຫຼາຍ" (ປະຖົມມະການ 18:20)

"ແລ້ວພະເຈົ້າຊົງໃຫ້ກຳມະການແລະໄຟຈາກພະເຈົ້າຕົກຈາກຟ້າລົງມາເທິງເມືອງໂສໂດມແລະເມືອງໂກໂມຣາຫ" (ປະຖົມມະການ 19:24)

"ແລະໄດ້ຊົງຊ່ວຍໂລກຜູ້ຊອບທຳໃຫ້ລອດ ຜູ້ມີຄວາມທຸກໃຫຍ່ຫຼວງ ເພາະການປະພຶດລາມົກຂອງຄົນເຫຼົ່ານັ້ນ" (2 ເປໂຕ 2:7)

ປະຖົມມະການ 19:24-25

(3) ເມື່ອວາລະສຸດທ້າຍຂອງໂລກນີ້ມາເຖິງ ພະເຈົ້າຈະໃຊ້ໄຟທຳລາຍໂລກ ຜູ້ໄດ້ຕ້ອນຮັບພະເຢຊູຄຣິດເປັນພະຜູ້ຊ່ວຍໃຫ້ລອດເທົ່ານັ້ນທີ່ຈະບໍ່ຖືກທຳລາຍ

"ແຕ່ວັນຂອງພະຜູ້ເປັນເຈົ້ານັ້ນຈະມາເຖິງເໝືອນຢ່າງຂະໂມຍແອບຍ່ອງມາ ແລະໃນວັນນັ້ນທ້ອງຟ້າຈະລ່ວງເສຍໄປດ້ວຍສຽງທີ່ດັງກຶກກ້ອງ ແລະວັດຖຸຈະສະຫຼາຍຕົວໄປດ້ວຍໄຟ ແລະແຜ່ນດິນໂລກກັບສິ່ງສາລະພັດທີ່ຢູ່ໃນໂລກນັ້ນຈະຕ້ອງໄໝ້ເສຍສິ້ນ" (2 ເປໂຕ 3:10)

"ເຫດສະນັ້ນພວກທີ່ຮັກ ເມື່ອທ່ານທັງຫຼາຍຍັງຄອຍສິ່ງເຫຼົ່ານີ້ຢູ່ທ່ານຈົ່ງອຸດສາໃຫ້ພະອົງຊົງພົບທ່ານທັງຫຼາຍມີໃຈສະຫງົບປາສະຈາກມົນທິນແລະຂໍ້ຕຳນິ" (2 ເປໂຕ 3:14)

(4) ຄົນທັງປວງທີ່ບໍ່ຍອມຮັບພະເຢຊູຄຣິດ ເປັນພະຜູ້ຊ່ວຍໃຫ້ລອດ ໃນທີ່ສຸດກໍຕ້ອງຕົກຢູ່ໃນລົກຕະຫຼອດໄປ ຜູ້ທີ່ມີຊື່ຢູ່ໃນໜັງສືແຫ່ງຊີວິດຂອງພະເມດໂປດົກເທົ່ານັ້ນຈະລອດພົ້ນ

"ແລະຖ້າຜູ້ໃດທີ່ບໍ່ມີຊື່ຈົດໄວ້ໃນໜັງສືຊີວິດ ຜູ້ນັ້ນກໍຖືກຖິ້ມລົງໄປໃນບຶງໄຟ" (      20:15)

ໂຣມ 6:23

## 16. ຕັ້ງແຕ່ມະນຸດໄດ້ທຳບາບແລ້ວ ຍັງມີຫວັງໃດໆ ເຫຼືອສຳລັບເຂົາອີກບໍ?

ມີມະນຸດຍັງມີຫວັງ ໃນປະຖົມມະການ 3:15 ເຮົາໄດ້ຮັບພະສັນຍາອັນທຳອິດຈາກພະເຈົ້າ ກ່ຽວກັບພະຜູ້ຖ່າຍຊື່ງຈະຕີຫົວງູ (ມານຮ້າຍ) ຈົນແຫລກ ທຳໃຫ້ມະນຸດພົ້ນຈາກມານຮ້າຍ ມີພະສັນຍາອື່ນໆ ກ່ຽວກັບການໄຖ່ບາບທາງພະຄຣິດ ຊຶ່ງເປັນຜູ້ຊົດໃຊ້ໜີ້ບາບອັນເປັນໂທດເຖິງຕາຍ

"ໃນພະບຸດນັ້ນເຮົາຈຶ່ງໄດ້ຮັບການໄຖ່ ຊຶ່ງເປັນການໂປຣດຍົກບາບທັງຫຼາຍຂອງເຮົາ" (ໂຄໂລຊີ 1:14)

ປະຖົມມະການ 3:15

**17. ພະສັນຍາຂອງພະເຈົ້າທີ່ໃຫ້ກັບອາດາມແລະເອວາເປັນຜົນສຳເລັດເມື່ອໃດ?**

ພະສັນຍາເປັນຜົນເມື່ອພະຄຣິດຊົດໃຊ້ໜີ້ບາບ ຊຶ່ງມີໂທດເຖິງຕາຍເທິງໄມ້ກາງເຂນ

"ບຸດທັງຫຼາຍຮ່ວມສາຍໂລຫິດກັນສັນໃດ ພະອົງກໍຊົງເປັນເຊັ່ນນັ້ນດ້ວຍເພື່ອໂດຍທາງຄວາມຕາຍນັ້ນ ເອງພະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍຄືມານເສຍໄດ້" (ເຮັບເລີ 2:14)

1ໂຢຮັນ 3:8

**18. ພະເຈົ້າທຳໃຫ້ອາດາມແລະເອວາຮູ້ວ່າຄວນທຳຫຍັງ ເພື່ອຊ່ວຍເຂົາທັງສອງລອດພົ້ນຈາກບາບ ແລະຄວາມຕາຍ?**

ພະເຈົ້າຊົງຂ້າແກະຕົວໜຶ່ງ ເອົາໜັງມັນມາທຳເສື້ອຜ້າສຳລັບອາດາມກັບເອວາ ສິ່ງນີ້ສອນໃຫ້ຮູ້ ວ່າໂດຍຄວາມຕາຍເທົ່ານັ້ນ ກ່າວຄືໂດຍການຫຼັ່ງໂລຫິດ ຄວາມບາບຂອງເຮົາອາດຈະໄດ້ຮັບ ປົກປິດໄດ້ ການໃຫ້ລູກມາຕາຍແທນທີ່ມະນຸດເລັ່ງໃຫ້ເຫັນເຖິງວ່າພະເຈົ້າ ຈະສະເດັດເຂົ້າມາໃນ ໂລກໃນສະພາບຂອງມະນຸດ ແລະຕາຍເພື່ອຄວາມຜິດບາບຂອງຄົນທັງໝົດຜູ້ທີ່ສະເດັດລົງມາ ນັ້ນຄືພະຄຣິດຊຶ່ງປຽບເໝືອນລູກແກະ

"ພະເຈົ້າຊົງທຳເສື້ອດ້ວຍໜັງສັດໃຫ້ອາດາມກັບເອວາປົກປິດກາຍ" (ປະຖົມມະການ 3:21)

**19. ເປັນຫຍັງຄົນເຮົາຈຶ່ງຄວນສວມເສື້ອຜ້າ?**

ເພາະວ່າຕັ້ງແຕ່ບາບເຂົ້າໃນໂລກ ມັນເປັນທີ່ໜ້າລະອາຍທີ່ຈະເປືອຍກາຍ ຕະຫຼອດໃນພະຄຳພີ ຈະເຫັນວ່າມີຄວາມກ່ຽວຂ້ອງກັນລະຫວ່າງບາບແລະຄວາມເປືອຍເປົ່າ ຫຼັງຈາກທີ່ອາດາມແລະ ເອວາ ທຳພະເຈົ້າຊົງສວມເສື້ອຜ້າໃຫ້ ຕະຫຼອດໃນພະຄຳພີການສວມເສື້ອຜ້າແລະຄວາມຊອບ ທຳມີຄວາມກ່ຽວຂ້ອງກັນ

"ເຮົາເຕືອນສະຕິເຈົ້າໃຫ້ຊື້ທອງຄຳທີ່ຫຼອມບໍລິສຸດແລ້ວຈາກເຮົາ ເພື່ອເຈົ້າຈະໄດ້ເປັນຄົນຮັ່ງມີ ແລະ ໃຫ້ເຈົ້າຊື້ເສື້ອຜ້າສີຂາວ ເພື່ອນຸ່ງຫົ່ມໃຫ້ພົ້ນຈາກຄວາມອັບອາຍທີ່ເຈົ້າຕ້ອງເປືອຍກາຍຢູ່ແລະຢາທາ ຕາຂອງເຈົ້າເພື່ອຈະໄດ້ແລເຫັນ"

ປະຖົມມະການ 3:11, 21; ໂຢບ 29:14; ເພງສັນລະເສີນ 104:1; ເພງສັນລະເສີນ 132:9; ອີ ຊາຢາ 61:10;  2ໂກລິນໂທ 5:2-3;

**20. ເປັນຫຍັງຈຶ່ງຈຳເປັນຕ້ອງຂ້າລູກແກະ ເປັນຫຍັງບໍ່ໃຫ້ອາດາມແລະເອວາເອົາໃບໄມ້ມາປົກປິດ ຕົນເອງເໝືອນຕອນທີ່ເຂົາໄດ້ທຳຫຼັງຈາກທີ່ທຳບາບ?**

ເປັນໄປບໍ່ໄດ້ທີ່ມະນຸດຈະທຳອັນໃດ ເພື່ອປົກປິດຄວາມບາບຈາກສາຍພະເນດຂອງພະເຈົ້າ "ຄ່າ ຈ້າງຂອງຄວາມບາບຄືຄວາມຕາຍ" (ໂຣມ 6:23) ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງມີຜູ້ບໍລິສຸດສັກຄົນໜຶ່ ງມາຕາຍແທນເພື່ອຊົດໃຊ້ໜີ້ບາບ ມີສະນັ້ນແລ້ວຄົນບາບເອງຈະຕ້ອງໃຊ້ໜີ້ບາບຂອງຕົນຜູ້ບໍລິ ສຸດນີ້ຈະຕ້ອງບໍ່ມີບາບ ພະເຢຊູຄຣິດໄດ້ຫຼັ່ງໂລຫິດເທິງໄມ້ກາງເຂນແລະສະຫຼະຊີວິດຂອງພະອົງ ເອງ ດັ່ງນັ້ນ, ຖ້າເຮົາຍອມຮັບວ່າພະອົງເປັນຜູ້ຕາຍແທນເຮົາ ເຮົາກໍຈະໄດ້ຊີວິດນິລັນດອນແລະ ບໍ່ຕ້ອງຮັບໂທດແຫ່ງຄວາມຕາຍເນື່ອງຈາກຂອງເຮົາ ພະເຈົ້າເປັນຜູ້ປະທານຜູ້ທີ່ບໍ່ມີຄວາມບາບ

ມາຕາຍແທນເຮົາ ເຮົາພຽງຍອມຮັບເອົາເທົ່ານັ້ນເອງ ເພາະເຮົາບໍ່ອາດຈະປົກປິດຄວາມບາບຂອງເຮົາໄດ້.

"ທ່ານຮູ້ວ່າພະອົງໄດ້ຊົງໄຖ່ທ່ານທັງຫຼາຍອອກຈາກການປະພຶດອັນຫາສາລະມິໄດ້ເຊິ່ງທ່ານໄດ້ຮັບຕໍ່ຈາກບັນພະບຸລຸດຂອງທ່ານ ແມ່ນບໍໄຖ່ດ້ວຍສິ່ງເສື່ອມສະລາຍໄດ້ເຊັ່ນເງິນແລະທອງ ແຕ່ຊົງໄຖ່ດ້ວຍພະໂລຫິດປະເສີດຂອງພະຄຣິດ ດັ່ງເລືອດລູກແກະທີ່ປາສະຈາກຕຳໜິຫຼືຈຸດດ່າງ" (1ເປໂຕ 1:18-19)

17:11; ມັດທາຍ 26:28; ເຮັບເລີ 9:7, 22, 1ໂຢຮັນ 1:7; ໂຣມ4:6-7

**21. ກ່ອນທີ່ມະນຸດຈະທຳບາບ ສັນພັນທະພາບແລະຖານະຂອງເຂົາຕໍ່ພະເຈົ້າເປັນແນວໃດ?**

ມະນຸດເປັນຜູ້ທີ່ຖືກສ້າງ ພະເຈົ້າເປັນຜູ້ສ້າງ ພະອົງຊົງສ້າງມະນຸດໃນສະພາບທີ່ບໍ່ຮູ້ຈັກຄວາມບາບ ແຕ່ມີອຳນາດທີ່ຈະເລືອກທາງເດີນຂອງຕົນ

"ແລະບໍ່ເຕັມໃຈບົວລະບັດພະເຈົ້າ ທ່ານທັງຫຼາຍເສຍໃນວັນນີ້ວ່າຈະບົວລະບັດຜູ້ໃດ"(ໂຢຊູວາ 24:15)

**22. ເປັນຫຍັງຈຶ່ງໃຫ້ມະນຸດມີເສລີພາບທີ່ຈະເລືອກທາງເດີນຊີວິດ?**

ຖ້າມະນຸດລບໍ່ມີເສລີພາບຈະເລືອກທາງເດີນຊີວິດເຂົາເປັນພຽງເຄື່ອງຈັກອັນໜຶ່ງເທົ່ານັ້ນເຂົາສາມາດເປັນເພື່ອນກັບພະເຈົ້າຕາມທີ່ພະອົງປະສົງໃຫ້ເປັນ

"ເອໂນດດຳເນີນກັບພະເຈົ້າແລ້ວຫາຍໜ້າໄປເພາະພະເຈົ້າຊົງຮັບເຂົາໄປ" (ປະຖົມມະການ 5:24)

"ໂນອາເປັນຄົນຊອບທຳດີພ້ອມໃນສະໄໝຂອງເຂົາໂນອາດຳເນີນກັບພະເຈົ້າ" (ປະຖົມະການ 6:9)

ພະນິວິດ 3:4; ອພຍ 33:9; ພະນິມິດ 3:20

**23. ມະນຸດໄດ້ຮັບຖານະທີ່ສູນເສຍໄປອັນເນື່ອງມາຈາກຄວາມບາບໄດ້ຢ່າງໃດ?**

ມະນຸດບໍ່ອາດໄດ້ຮັບຖານະທີ່ສູນເສຍໄປກັບຄືນມາໄດ້ (ສະພາບທີ່ບໍ່ຮູ້ຈັກຄວາມບາບ) ແຕ່ເຂົາສາມາດໄດ້ຮັບຖານະທີ່ສູງສົ່ງກ່ວານັ້ນ ແລະມີສຳພັນກັບພະເຈົ້າຫຼາຍຍິ່ງຂຶ້ນໂດຍການຕ້ອນຮັບພະເຢຊູຄຣິດເປັນພະຜູ້ຊ່ວຍໃຫ້ລອດເຂົາຈຶ່ງກາຍບຸດຂອງພະເຈົ້າ ໂດຍການບັງເກີດໃໝ່

"ຈົ່ງເບິ່ງເຖີດພະບິດາຊົງໂປດປະທານຄວາມຮັກແກ່ເຮົາທັງຫຼາຍພຽງໃດ ທີ່ເຮົາຈະໄດ້ຊື່ວ່າເປັນບຸດຂອງພະເຈົ້າແລະເຮົາກໍໄດ້ເປັນເຊັ່ນນັ້ນ ເຫດທີ່ໂລກບໍ່ຮູ້ຈັກເຮົາທັງຫຼາຍເພາະເຂົາບໍ່ຮູ້ຈັກພະອົງ" (1ໂຢຮັນ 3:1)

ໂຢຮັນ 1:12; ໂຣມ 8:14, 16, 17, 21; ກາລາເທຍ 4:7; ຟີລິບປີ 2:15

**24. ພະເຈົ້າມີພະປະສົງຫຍັງສຳລັບມະນຸດ?**

ພະເຈົ້າເປັນຄວາມຮັກ ນອກເໜືອໄປຈາກພະເຢຊູຄຣິດ ຜູ້ເປັນພະບຸດອົງດຽວຂອງພະອົງແລ້ວພະເຈົ້າພະບິດາຜູ້ປຽບໄປດ້ວຍຄວາມຮັກ ປາຖະໜາທີ່ຈະໄດ້ມີບຸດຫຼາຍໆ ຄົນເຂົ້າສ່ວນຮ່ວມໃນພະນິເວດຂອງພະອົງ ໃນການນີ້ພະອົງໄດ້ກະທຳໃຫ້ເປັນໄປໄດ້ໂດຍການສີ້ນພະຊົນເພື່ອໄຖ່ເພື່ອຄວາມບາບຂອງພະຄຣິດແລະການກະທຳໃຫ້ບັງເກີດໃໝ່ຂອງພະວິນຍານບໍລິສຸດ

"ໃນການທີ່ພະເຈົ້າຊົງນຳບຸດມາກຫຼາຍໄປສູ່ສັກສິດກໍເປັນເໝາະສົມແລ້ວທີ່ພະເຈົ້າຜູ້ຊື່ງທຸກສິ່ງດຳ

ດຳລົງຢູ່ໂດຍພະອົງແລະເພື່ອພະອົງຈະຊົງໃຫ້ຜູ້ເບີກທາງຄວາມລອດ ໃຫ້ເຂົາເຫຼົ່ານັ້ນພ້ອມທີ່ດຳເນີນ
ງານນີ້ໂດຍໃຫ້ຮັບຄວາມທຸກທໍລະມາ

# ບົດທີ່ 6

## ຊາຕານ

**1. ຊາຕານຄືໃຜ?**

ມັນມີຊື່ຮຽກຕ່າງໆ ຢ່າງຫຼວງຫຼາຍໃນພະຄຳພີເຊັ່ນ: ຊາຕານ ຜີ ງູ ພະຍານາດ ແລະເຈົ້າໂລກ ຊຶ່ງ
ຊຶ່ງເປັນເຈົ້າແຫ່ງຄວາມຊົ່ວ ອື່ນໆ

"ແລະທ່ານໄດ້ຈັບພະຍານາດຊຶ່ງເປັນງູດຶກດຳບັນຜູ້ຊຶ່ງເປັນພະຍາມານແລະຊາຕານແລະມັດມັນໄວ້
ພັນປີ"( ພະນິມິດ 20:2)

ປະຖົມມະການ3:1, 13; ມັດທາຍ 13:19; ມັດທາຍ 4:1; ໂຢຮັນ 14:30; ຢາກອບ 4:7; ວິ
12:3

**2. ຊາຕານມາຈາກໃສ?**

ມັນຄືທູດສະຫວັນທີ່ພະເຈົ້າຊົງສ້າງ ມີຄວາມສວຍງາມແລະມີຕຳແໜ່ງສູງສົ່ງໃນບັນດາທູດສະ
ຫວັນທັງຫຼາຍ

"ເຈົ້າຢູ່ໃນເອເດນ ພຣະອຸທະຍານຂອງພະເຈົ້າ ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ....
ເຮົາຕັ້ງໃຈໃຫ້ຢູ່ກັບຜູ້ພິທັກທີ່ໄດ້ເຈີມຕັ້ງໄວ້.....
ເຈົ້າປາສະຈາກຕຳໜິໃນວິທີການທັງຫຼາຍຂອງເຈົ້າຕັ້ງແຕ່ວັນທີ່ເຈົ້າຖືກສ້າງຂຶ້ນມາຈົນພົບຄວາມບາບ
ຊົ່ວໃນຕົວເຈົ້າ" ( ເອເສກຽນ28:13-15)

ອີຊາຢາ 14:12-17; ລູກາ 10:18

**3. ເຮົາຮູ້ໄດ້ຢ່າງໃດວ່າມັນເປັນເຊັ່ນນີ້?**

ອີຊາຢາ 14:12-17 ແລະເອເສກຽນ 28:12-17 ບອກວ່າ ສະພາບທຳອິດຂອງມັນນັ້ນງົດງາມບໍ່
ມີທີ່ຕຳໜິ ແລະປະກອບດ້ວຍສະຕິປັນຍາ

"ພະອົງກ່າວກັບເຂົາທັງຫຼາຍວ່າ ເຮົາໄດ້ເຫັນຊາຕານຕົກຈາກຟ້າເໝືອນຟ້າແລບ" (ລູກາ 10:18)

**4. ເປັນຫຍັງຊາຕານຈຶ່ງຕົກຕ່ຳ?**

ເຫດທີ່ມັນຕົກຕ່ຳກໍເພາະບາບ ມັນຕ້ອງການເປັນເໝືອນພະເຈົ້າແລະນັ່ງຢູ່ເທິງພະທີ່ນັ່ງຂອງພະ
ເຈົ້າ

"ເຈົ້າລຳພຶງໃນໃຈຂອງເຈົ້າວ່າ ຂ້າຈະຂຶ້ນໄປຍັງຟ້າສະຫວັນເໜືອດວງດາວທັງຫຼາຍຂອງພະເຈົ້າ
ຂ້າຈະຕັ້ງພະທີ່ນັ່ງຂອງຂ້າ ທີ່ສູງນັ້ນ ຂ້າຈະນັ່ງເທິງ ຊຸມນຸມສະຖານທີ່ອຸດອນໄກ...ຂ້າຈະ
ກະທຳຕົວຂອງຂ້າເໝືອນອົງຜູ້ສູງສຸດ" (ອີຊາຢາ 14:13-14)

**5. ຊາຕານມີລັກສະນະຢ່າງໃດ?**

ມັນມີນິດໄສຊົ່ວຊ້າຫຼາຍ ມັກໂກດ ຫຼອກຫຼວງແລະເປັນຜູ້ກະບົດຕໍ່ພະເຈົ້າ

"ຜູ້ທີ່ກະທຳບາບມາຈາກມານ ເພາະມານໄດ້ກະທຳບາບຕັ້ງແຕ່ເດີມ"(1ໂຢຮັນ 3:8)

ເຄຄາລີຢາ3:1; ມັດທາຍ 13:38-39; ໂຢຮັນ 8:44; 2ໂກລິນໂທ 4:3-4;ເອເຟໂຊ 6:11-12
2 ເທສະໂລນິກ 2:9; 1 ເປໂຕ 5:8

**6. ລຳພັງມານເທົ່ານັ້ນຫຼືທີ່ປະກອບການຊົ່ວ?**

ບໍ່ແມ່ນເລີຍ ມີທູດສະຫວັນມາກມາຍໄດ້ທຳບາບແລະໄດ້ຕົກຕໍ່າລົງມາເປັນສະມຸນຂອງມັນ ວິນຍານຊົ່ວເຫຼົ່ານີ້ໄດ້ຊ່ວຍໃຫ້ມານທຳງານຊົ່ວໃນທ່າມກາງມະນຸດ

"ພະຍານາດເປັນງູດຶກດຳບັນທີ່ຮຽກກັນວ່າ ມານແລະຊາຕານຜູ້ຫຼອດລວງມະນຸດທັງໂລກ
ຖືກຜະລັກຖິ້ມລົງໄປໃນແຜ່ນໂລກ" ( 12:9)

ມັດທາຍ 12:45; ມາລາໂກ 1:26; 5:8-9; 7:25, 30; 9:17-27;ລູກາ 10:17, 18, 20; ກິດຈະການ 8:7; 19:13; 1ຕີໂມທີ 4:1; ຢາກອບ 2:19; ວິ 16:14

**7. ຊາຕານມີຄວາມກ່ຽວຂ້ອງກັບມະນຸດຢ່າງໃດ?**

ຊາຕານເປັນຕົວການທີ່ທຳໃຫ້ອາດາມແລະເອວາທຳບາບ ແລະບໍ່ເຊື່ອຟັງພະເຈົ້າໃນສວນເອເດນ ດ້ວຍເຫດນີ້ມະນຸດທັງຫຼາຍໃນຮຸ່ນຕໍ່ມາຈຶ່ງໄດ້ບັງເກີດໃນຄວາມບາບ ແລະມີຄວາມຊົ່ວຮ້າຍຕິດຕົວມາມະນຸດໃນຄັ້ງນັ້ນໄດ້ຫັນຄວາມຈົງຮັກພັກດີຕໍ່ພະເຈົ້າມາມີຕໍ່ຊາຕານ ແລະຢູ່ໃຕ້ອິດທິພົນຂອງມັນ ມະນຸດຈຶ່ງໄດ້ຊື່ວ່າ "ບຸດຂອງມັນ"

"ດັ່ງນີ້ແຫຼະ ຈຶ່ງເຫັນໄດ້ວ່າຜູ້ໃດເປັນບຸດຂອງພະເຈົ້າແລະຜູ້ໃດເປັນລູກຂອງມານຄືວ່າຜູ້ໃດທີ່ມິໄດ້ປະພຶດຊອບ ແລະບໍ່ຮັກພີ່ນ້ອງຂອງຕົນ ຜູ້ນັ້ນກໍມິໄດ້ມາຈາກພະເຈົ້າ" (1ໂຢຮັນ 3:10)

ປະຖົມະການ 3:6; ໂຢຮັນ 8:44; ເອເຟໂຊ 2:3

**8. ຊາຕານໄດ້ກໍ່ກວນມະນຸດຕັ້ງແຕ່ນັ້ນເປັນຕົ້ນມາແມ່ນບໍ?**

ຊາຕານຍັງຄົງທຳງານຂອງມັນຕໍ່ໄປເລື້ອຍໆ ໃນໂລກນີ້ ມັນມັກຈະພະຍາຍາມທຳໃຫ້ຄົນທຳບາບ ມັນມີອຳນາດຄວບຄຸມມະນຸດສ່ວນຫຼາຍ ດັ່ງນັ້ນ, ຄົນຈຶ່ງທຳບາບຢູ່ເລື້ອຍໆ ນອກຈາກນີ້ແລ້ວມະນຸດເຮົາຍັງມີທຳມະຊາດບາບ ຄົນຈຶ່ງຮັກການທຳບາບແລະຕົກເປັນທາດຂອງຊາຕານ

"ດ້ວຍວ່າສັດຕູຂອງທ່ານຄືມານວົນວຽນຢູ່ຮອບໆ ທ່ຽວໄປຊອກຫາຄົນທີ່ມັນຈະກັດ
ກິນໄດ້"(1 ເປໂຕ 5:8)

ໂຢຮັນ 14:30; ເອເຟໂຊ 2:2; ຢາກອບ 1:13-15; 1 ໂຢຮັນ 2:16

**9. ເຮົາສາມາດເຫັນຊາຕານໄດ້ຫຼືບໍ?**

ເຮົາບໍ່ອາດຈະເຫັນມັນໄດ້ ແຕ່ເຮົາສາມາດເຫັນກິດຈະການຂອງມັນໄດ້ ເຮົາວ່າມັນຄົງມີຢູ່ ເພາະຄຳພີກ່າວໄວ້ເຊັ່ນນັ້ນ ແລະໄດ້ເຫັນສິ່ງຕ່າງໆ ທີ່ບັງເກີດຂຶ້ນໃນໂລກກົງກັບທີ່ພະຄຳໄວ້ກ່ຽວກັບຊາຕານ

"ເພາະຄົນຢ່າງນັ້ນເປັນອັດຄະລາທູດທຽມໃນຄົນງານທີ່ຫຼອກລວງ ປອມຕົວເປັນອັດຄຣທູດຂອງພະຄຣິດ

ການກະທຳເຊັ່ນນັ້ນບໍ່ແປກປະຫຼາດເລີຍ ເຖິງຊາຕານເອງກໍຍັງປອມຕົວເປັນທູດແຫ່ງຄວາມສະຫວ່າງໄດ້ ເຫດສະນັ້ນຈຶ່ງບໍ່ເປັນການແປກຫຍັງທີ່ຄົນຮັບໃຊ້ຂອງຊາຕານຈະປອມຕົວເປັນຄົນຮັບໃຊ້ຂອງຄວາມຊອບທຳ" (2 ໂກລິນໂທ 11:13-15)

ເອເຟໂຊ 5:11; ທິຕັສ 1:16; 1ໂຢຮັນ 3:8

**10. ຊາຕານມີອຳນາດຫຼາຍພຽງໃດ?**

ມັນບໍ່ມີອຳນາດສູງສຸດເໜືອພະເຈົ້າແລະມິໄດ້ຮອບຮູ້ທຸກສິ່ງທຸກຢ່າງເໝືອນພະເຈົ້າ ແຕ່ມັນມີອຳນາດເໜືອມະນຸດ ແລະສາມາດກໍໃຫ້ເກີດຄວາມເຈັບປ່ວຍ ຄວາມທຸກຍາກນາໆຊະນິດ ແມ້ກະທັ້ງຄວາມຕາຍກໍທຳໃຫ້ເກີດໄດ້ ແຕ່ມັນທຳໄດ້ເທົ່າທີ່ພະເຈົ້າຊົງອະນຸຍາດເທົ່ານັ້ນ

ຊາຕານສາມາດບຳບັດຮັກສາໂລກ (ຊຶ່ງມັນເອງເປັນຕົວກໍໃຫ້ເກີດຂຶ້ນກັບມະນຸດ)

"ບຸດທັງຫຼາຍຮ່ວມສາຍໂລຫິດກັນສັນໃດພະອົງຊົງເປັນເຊັ່ນນັ້ນດ້ວຍເພື່ອຄວາມຕາຍນັ້ນເອງພະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍຄືມານເສຍໄດ້" (ເຮັບເລີ 2:14)

ໂຢບ 2:7; ເສຄາລິຢາ 3:1

**11. ເປັນຫຍັງພະເຈົ້າຈຶ່ງຍອມໃຫ້ຊາຕານນຳຄວາມເສົ້າໂສກເສຍໃຈແລະຄວາມທຸກທໍລະມານມາສູ່ມະນຸດໃນໂລກ?**

ພະເຈົ້າຊົງອະນຸຍາດໃຫ້ເກີດຂຶ້ນກໍເພື່ອປະໂຫຍດຂອງມະນຸດ ຄວາມທຸກຍາກແລະຄວາມໂສກເສົ້າເສຍໃຈມັກຈະນຳພະພອນມາໃຫ້ແກ່ທຸກຄົນຊຶ່ງຈະຮັບເອົາຈາກອົງພະຜູ້ເປັນເຈົ້າ ແລະຈາກປະສົບການນີ້ຍ່ອມຈະຮຽນຮູ້ເຖິງບົດຮຽນທີ່ອົງພະຜູ້ເປັນເຈົ້າສອນເຮົາ

(1) ໃນກໍລະນີຂອງຜູ້ທີ່ບໍ່ເປັນຄຣິສຕຽນ ເຂົາຈະບອກວ່າບາບນຳມາຊຶ່ງຄວາມທຸກທໍລະມານ ແລະຄວາມໂສກເສົ້າເສຍໃຈ ແລະທຳໃຫ້ເຂົາເຫັນເຖິງຄວາມຈຳເປັນຕ້ອງເພິ່ງພະຜູ້ຊ່ວຍໃຫ້ລອດພົ້ນຈາກບາບແລະຜູ້ປະເລົ້າປະໂລມໃຈໃນຍາມໂສກເສົ້າ

(2) ໃນກໍລະນີຂອງຜູ້ເປັນຄຣິສຕຽນ

ກ. ບາງຄັ້ງພະເຈົ້າໃຊ້ຄວາມທຸກຍາກແລະຄວາມໂສກເສົ້າເສຍໃຈເປັນເຄື່ອງມືສຳລັບແກ້ໄຂບຸດຂອງພະອົງມິໃຫ້ທຳບາບຄຣິສຕຽນຈະຖືກລົງໂທດເພາະບາບຂະນະທີ່ເຂົາຍັງຢູ່ໃນໂລກນີ້ເທົ່ານັ້ນ ການຂະຈັດບາບອອກໄປຈາກຄຣິສຕຽນປຽບເໝືອນການກະທຳຂອງແພດທີ່ຜ່າຕັດເອົາສ່ວນຮ່າງກາຍທີ່ຕິດເຊື້ອໂລກອອກໄປ

"ເມື່ອມີການຕີສອນນັ້ນເບິ່ງບໍ່ເປັນທີ່ຊື່ນໃຈເລີຍ ເປັນເຄື່ອງເສົ້າໃຈແຕ່ຕໍ່ມາພາຍຫຼັງກໍ່ໃຫ້ເກີດຄວາມສຸກສຳລານແກ່ບັນດາຄົນທີ່ຕ້ອງທົນຢູ່ນັ້ນຄືຄວາມຊອບທຳນັ້ນເອງ" (ເຮັບເລີ 12:11)

ຂ. ບາງຄັ້ງຄວາມທຸກຍາກແລະຄວາມໂສກເສົ້າເສຍໃຈທີ່ເກີດຂຶ້ນກັບຄຣິສຕຽນ ກໍເພື່ອ

ທີ່ເຂົາຈະໄດ້ສະແດງໃຫ້ໂລກເຫັນເຖິງອົດທົນ ການປະໂລມໃຈ ແລະກຳລັງທີ່ອົງພະຜູ້ເປັນເຈົ້າປະທານໃຫ້ໃນເວລານັ້ນ, ອົງພະຜູ້ເປັນເຈົ້າຜູ້ຊຶ່ງສາມາດປະທານພະພອນແມ້ກະທັ່ງໃນຍາມທຸກຍາກແລະເສົ້າເສຍໃຈ

"ແລະເພື່ອບໍ່ໃຫ້ຂ້າພະເຈົ້າ(ເປົາໂລ) ຍົກຕົວຈົນເກີນໄປເນື່ອງຈາກທີ່ໄດ້ມີການສຳແດງມາການມາຍນັ້ນ ກໍຊົງໃຫ້ມີໜາມໃຫຍ່ໃນເນື້ອຂອງຂ້າພະເຈົ້າ ໜາມນັ້ນເປັນທູດຂອງຊາຕານຄອຍທຸບຕີຂ້າພະເຈົ້າ ເພື່ອມິໃຫ້ຂ້າພະເຈົ້າຍົກຕົວເກີນໄປ…ແຕ່ພະອົງກ່າວກັບຂ້າພະເຈົ້າວ່າການທີ່ມີຄຸນຂອງເຮົາກໍພໍແກ່ເຈົ້າແລ້ວ" (2 ໂກລິນໂທ 12:7, 9)

ຄ. ການທົນທຸກຂອງຄຣິສຕຽນອາດຈະເປັນການເຂົ້າມີສ່ວນຮ່ວມໃນສະຫງ່າລາສີ

"ພະເຈົ້າໄດ້ຊົງໂຜດແກ່ທ່ານທັງຫຼາຍ ເພາະເຫັນແກ່ພະຄຣິດ ບໍ່ໃຊ່ໃຫ້ພວກເຈົ້າເຊື່ອແຕ່ໃນພະອົງເທົ່ານັ້ນ ແຕ່ໃຫ້ພວກເຈົ້າທົນຄວາມທຸກເພາະເຫັນແກ່ພະອົງດ້ວຍ" (ຟີລິບປອຍ 1:29)

1 ໂກລິນໂທ 5:5-6; ເຮັບເລີ 12:9-11; ໂຢຮັນ 9:2,3; ໂຣມ 5:3-5; ຟີລິບປອຍ 3:10
2 ທີໂມທີ 2:12

**12. ຊາຕານຊົ່ວຊ້າເຖິງຂະໜາດນັ້ນແລ້ວ ເປັນຫຍັງຄົນເຖິງເຊື່ອຟັງມັນ?**

ກ. ຊາຕານຫຼອກລວງມະນຸດ

1. ມັນໃຫ້ຄຳສັນຍາ (ປະຖົມມະການ 3:4-5)
2. ມັນຫຼອກລວງໂດຍບິດເບືອນພະຄຳພີ (ມັດທາຍ 4:6)
3. ໃຊ້ແຜນການທີ່ມີເລ່ອຸບາຍ (2 ໂກລິນໂທ 2:11)
4. ມັນຫຼອກລວງໂດຍປອມແປງເປັນທູດແຫ່ງຄວາມສະຫວ່າງ (2 ໂກລິນໂທ 11:14)

ຂ. ຊາຕານທຳໃຫ້ໃຈຂອງຜູ້ທີ່ບໍ່ເຊື່ອມືດມົວໄປ (2 ໂກລິນໂທ 4:3-4)

ຄ. ຊາຕານທົດລອງມະນຸດ (ມັດທາຍ 4:3; 1ເທສະໂລນິກ 3:5)

ງ. ຊາຕານສະແດງສິດທິອຳນາດ ໝາຍສຳຄັນຕ່າງໆ ແລະການອັດສະຈັນຕ່າງໆ(2 ເທສະໂລນິກ 2:9)

**13. ໃນທີ່ສຸດຈະເກີດຫຍັງຂຶ້ນແກ່ຊາຕານ ?**

ໃນວັນພິພາກສາ ມັນຈະຖືກຂັບລົງໃນບຶງໄຟນະລົກເພື່ອທົນທຸກທໍລະມານຈົນຊົ່ວນິລັນດອນ

"ສ່ວນພະຍາມານ ທີ່ລໍ່ລວງເຂົາເຫຼົ່ານັ້ນ ກໍຖືກໂຍນລົງໄປໃນບຶງໄຟປົນກັບມາດ ຄືບ່ອນທີ່ສັດຮ້າຍແລະຄົນທີ່ປອມຕົວເປັນຜູ້ປະກາດພະທຳຢູ່ໃນນັ້ນ ເຂົາຈະຕ້ອງທົນທຸກທໍລະມານທັງກາງເວັນແລະກາງຄືນຕະຫຼອດໄປເປັນນິດ." (ພະນິມິດ 20:10)

ພະນິມິດ 20:2, 7, 10

**14. ເຮົາຈະຫຼຸດພົ້ນຈາກການຄວບຄຸມຂອງຊາຕານໄດ້ຢ່າງໃດ ?**

ເຮົາທຳໄດ້ໂດຍວາງໃຈອົງພະເຢຊູຄຣິດເຈົ້າ ແລະຍອມໃຫ້ພະອົງຄວບຄຸມຊີວິດເຮົາ ພະເຢຊູ

ຄຣິດມີສິດທິອຳນາດເໜືອຊາຕານ

"ເພື່ອຈະໃຫ້ເຈົ້າເບີກຕາຂອງເຂົາ ເພື່ອເຮົາຈະກັບຈາກຄວາມມືດມາເຖິງຄວາມສະຫວ່າງ ແລະຈາກອຳນາດຂອງຊາຕານມາເຖິງພະເຈົ້າ ເພື່ອເຂົາຈະໄດ້ຮັບການຍົກໂທດຄວາມບາບຜິດຂອງເຂົາແລະໃຫ້ໄດ້ຮັບທີ່ຊຶ່ງຈະໄດ້ດ້ວຍກັນກັບຄົນທັງຫຼາຍຊຶ່ງຖືກຊຳລະໃຫ້ເປັນຜູ້ຊອບທຳແລ້ວໂດຍຄວາມເຊື່ອໃນເຮົາ" (ກິດຈະການ 26:18)

ພະເຈົ້າຊົງໄວ້ຊຶ່ງຄວາມບໍລິສຸດແລະຊອບທຳ ສ່ວນຊາຕານຊົ່ວຊ້າຫຼາຍ

ອີຊາຢາ 53:5; ໂຢຮັນ 5:24; ໂຢຮັນ 10:28, 29; ກິດຈະການ 4:12; 2ເທສະໂລນິກ 2:8; ເຮັບເລີ 2:14; ຢູດາ 24; 1ໂຢຮັນ 3:5

## ບົດທີ່ 7

## ບາບ

**1. ບາບຄືຫຍັງ?**

ບາບຄືການກະບົດຕໍ່ພະເຈົ້າຜູ້ຊົງໄວ້ຊຶ່ງຄວາມບໍລິສຸດຍຸດຕິທຳແລະຊອບທຳແລະພະອົງເອງເປັນຜູ້ທີ່ໄດ້ສ້າງເຮົາ

"ບາບສິ່ງທີ່ຜິດບັນຍັດ" (1ໂຢຮັນ 3:4)

**2. ໃຜເປັນຕົວການທີ່ກໍ່ໃຫ້ເກີດບາບໃນໂລກນີ້?**

ມານຮ້າຍເປັນຕົວການທຳໃຫ້ເກີດບາບ ມັນທຳໃຫ້ມະນຸດຄູ່ທຳອິດທຳບາບ ແລະດັ່ງນັ້ນບາບກໍຕົກທອດສືບຕໍ່ມາເຖິງມະນຸດທຸກຄົນ

"ທ່ານທັງຫຼາຍມາຈາກພໍ່ຂອງທ່ານຄືມານ ແລະທ່ານໃຝ່ຈະທຳຕາມຄວາມປາຖະໜາຂອງພໍ່ທ່ານ ມັນເປັນຂ້າຄົນຕັ້ງແຕ່ປະຖົມະການ ແລະບໍ່ໄດ້ຕັ້ງຢູ່ໃນຄວາມຈິງເພາະໃນຕົວມັນບໍ່ມີຄວາມຈິງ ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນດານຂອງມັນເອງ ເພາະເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ" (ໂຢຮັນ 8:44)

ປະຖົມະການ 3:6; ພສລສ 51:5; ມທ 15:19; ຢາກອບ 1:15; 4:1

**3. ໃຜເປັນຄົນທຳອິດທີ່ທຳບາບເທິງໂລກນີ້?**

ຊາຍ-ຍິງຄູ່ທຳອິດທີ່ພະເຈົ້າຊົງສ້າງຊື່ອາດາມແລະເອວາເປັນຜູ້ທຳບາບເປັນຄັ້ງທຳອິດ

"ເມື່ອຍິງນັ້ນ…ຈຶ່ງເກັບຜົນໄມ້ນັ້ນມາກິນ ແລ້ວສົ່ງໃຫ້ສາມີກິນດ້ວຍ ເຂົາກໍກິນ" (ປະຖົມະການ 3:6)

**4. ເຂົາທັງສອງທຳບາບຢ່າງໃດ?**

ເຂົາທຳບາບໂດຍການບໍ່ເຊື່ອຟັງພະເຈົ້າ ແຕ່ໄປເຊື່ອຟັງມານຊຶ່ງສັດຕູຂອງພະເຈົ້າ

"ພະເຈົ້າຈຶ່ງຊົງບັນຊາແກ່ມະນຸດວ່າ ບັນດາຜົນໄມ້ທຸກຢ່າງໃນສວນນີ້ເຈົ້າກິນໄດ້ທັງໝົດເວັ້ນແຕ່ຕົ້ນໄມ້ແຫ່ງຄວາມສຳນຶກໃນຄວາມດີແລະຄວາມຊົ່ວ ຜົນຂອງຕົ້ນໄມ້ນັ້ນຢ່າກິນ ເພາະໃນວັນໃດທີ່ເຈົ້າຊີມກິນແລ້ວເຈົ້າຕ້ອງຕາຍແນ່." (ປະຖົມມະການ 2:16-17)

"ງູຈຶ່ງເວົ້າກັບຍິງນັ້ນວ່າ ເຈົ້າຈະບໍ່ຕາຍຈິງດອກ ເພາະພະເຈົ້າຊົງຮູ້ຢູ່ວ່າ ເຈົ້າກິນຜົນໄມ້ນັ້ນວັນໃດຕາຂອງເຈົ້າຈະສະຫວ່າງຂຶ້ນໃນວັນນັ້ນ ແລ້ວຈະເປັນເໝືອນພະເຈົ້າຄືສຳນຶກໃນຄວາມດີແລະຄວາມຊົ່ວ" (ປະຖົມມະການ 3:4-5)

**5. ຄົນທຸກຄົນໃນໂລກນີ້ທຳບາບຫຼືບໍ?**

ຖືກແລ້ວ ບໍ່ມີໃຜສັກຄົນທີ່ເຄີຍມີຊີວິດຢູ່ເທິງໂລກນີ້ທີ່ບໍ່ເຄີຍທຳບາບ ຍົກເວັ້ນພະເຢຊູຄຣິດ ຜູ້ເປັນພະບຸດຂອງພະເຈົ້າ ພະອົງໄດ້ມາຮັບສະພາບເປັນມະນຸດ ແລະດຳລົງຊີວິດຢູ່ໂດຍປາສະຈາກບາບ

"ເພາະວ່າທຸກຄົນທຳບາບແລະເສື່ອມຈາກພະສີລິຂອງພະເຈົ້າ" (ໂຣມ 3:23)

ພສລສ 53:3; 53:1; 64:6; 1ໂຢຮັນ 1:8

**6. ຜົນຂອງຄວາມບາບຄືຫຍັງ?**

ຄວາມຕາຍຄືຜົນຂອງຄວາມບາບ "ຄ່າຂອງຄວາມບາບຄືຄວາມຕາຍ" (ໂຣມ 6:23)

"…ແລະເມື່ອບາບຈະເລີນເຕັມທີ່ແລ້ວ ກໍນຳໄປສູ່ຄວາມຕາຍ"(ຢາກອບ 1:15)

(1) ຄວາມຕາຍຝ່າຍກາຍຕົກເຖິງມວນມະນຸດທຸກຄົນ ເນື່ອງຈາກບາບເປັນເຫດ

"ພະອົງຈຶ່ງກ່າວແກ່ອາດາມວ່າ ເພາະເຫດເຈົ້າເຊື່ອຄຳເວົ້າຂອງພັນລະຍາ ແລະກິນຜົນໄມ້ທີ່ເຮົາຫ້າມ ແຜ່ນດິນຈຶ່ງຕ້ອງຖືກສາບເພາະຕົວເຈົ້າ ເຈົ້າຈະຕ້ອງຫາກິນເທິງແຜ່ນດິນດ້ວຍຄວາມທຸກລຳບາກຈົນຕະຫຼອດຊີວິດ.... ເຈົ້າຈະຕ້ອງຫາກິນດ້ວຍເຫື່ອອາບໜ້າຈົນກັບເປັນດິນໄປເພາະເຮົາສ້າງເຈົ້າມາຈາກດິນ ແລະເຈົ້າເປັນຜົງລີດິນ ແລະຈະຕ້ອງກັບເປັນຜົງ ດິນດັ່ງເດີມ" (ປະຖົມມະການ 3:17, 19)

(2) ບາບຍັງນຳມາຊຶ່ງຄວາມທຸກທໍລະມານ ແລະຄວາມໂສກເສົ້າ ໂລກໄພໄຂ້ເຈັບ ສົງຄາມ ຄວາມທຸກລະທົມນາໆຊະນິດ

ປະຖົມມະການ 3:16-19; ກາລາເທຍ 5:19-21

(3) ສິ່ງທີ່ສຳຄັນທີ່ສຸດຄື ບາບນຳຄວາມຕາຍຝ່າຍວິນຍານມາສູ່ຈິດວິນຍານຂອງມະນຸດ ໝາຍຄວາມວ່າມະນຸດຖືກຕັດຂາດຈາກພະເຈົ້າແລະຈາກສິ່ງທີ່ດີທັງປວງ

"ເຫດສະນັ້ນເຊັ່ນດຽວກັນທີ່ບາບໄດ້ເຂົ້າມາໃນໂລກເພາະຄົນໆດຽວແລະຄວາມຕາຍກໍເກີດມາເພາະບາບນັ້ນ ແລະຄວາມຕາຍກໍໄດ້ແຜ່ໄປເຖິງມວນມະນຸດທຸກຄົນ ເພາະມະນຸດທຸກຄົນທຳບາບ" (ໂຣມ 5:12)

ໂຢຮັນ 8:26

**7. ໂທດຂອງບາບຄືຫຍັງ ?**

ຄວາມຕາຍເປັນທັງຜົນ ແລະການລົງໂທດເນື່ອງຈາກບາບ ຊຶ່ງຕໍ່ມາຈະມີການລົງໂທດໃຫ້ຕົກລົງ

ໃນນະລົກຊົ່ວນິລັນດອນສຳລັບຜູ້ທີ່ບໍ່ຍອມຮັບຄວາມລອດທີ່ພະເຈົ້າຜູ້ຮັກເຮົາປະທານໃຫ້ທາງພະເຢຊູຄຣິດ

"ແຕ່ຄົນສະຫຼາດ ຄົນບໍ່ເຊື່ອ ຄົນທີ່ໜ້າຄຽດໜ້າຊັງ ຄົນທີ່ຂ້າມະນຸດ ຄົນລ່ວງປະເວນີ ຄົນໃຊ້ເວດມົນ ຄົນໄວ້ຮູບເຄົາລົບແລະຄົນທັງປວງທີ່ເວົ້າມຸສານັ້ນນໍລະດົກຂອງເຂົາຢູ່ທີ່ໃນບຶງໄຟແລະກຳມະຖັນທີ່ກຳລັງໄໝ້ຢູ່ນັ້ນ ນັ້ນຄືຄວາມຕາຍຄັ້ງທີ່ສອງ." (ພະນິມິດ 21:8)

ມລກ 9:47; ລູກາ 16:23;13:3; ພນມ 20:15

**8. ການຂ້າຄົນເປັນບາບທີ່ຮ້າຍແຮງທີ່ສຸດຫຼື?**

ການຂ້າຄົນແລະບາບອື່ນໆ ເປັນຜົນສືບເນື່ອງມາຈາກຄວາມບໍ່ເຊື່ອພະເຈົ້າ ແລະການປະຕິເສດຍອມຮັບພະເຢຊູຄຣິດເຈົ້າເປັນພະຜູ້ຊ່ວຍໃຫ້ລອດ ແລະເປັນອົງພະຜູ້ເປັນໃນຊີວິດຂອງເຮົາ

"ເພາະວ່າພາຍມະນຸດຄືຈາກມະນຸດ ມີຄວາມຄິດຊົ່ວຮ້າຍ ການລ່ວງປະເວນີ ການລັກຂະໂມຍ ການຂ້າຄົນ ການຜິດຜົວຜິດເມຍ" (ມລກ 7: 12)

1 ໂຢຮັນ 2:22

**9. ບາບທີ່ຮ້າຍທີ່ສຸດຄືຫຍັງ?**

ບາບທີ່ຮ້າຍທີ່ສຸດຄືການບໍ່ຍອມຮັບພະເຈົ້າ ຮັກແລະເຊື່ອຟັງພະອົງ ຜູ້ທີ່ໄດ້ສ້າງເຮົາແລະປະທານແຕ່ສິ່ງທີ່ດີໆ ແກ່ເຮົາ ແລະບໍ່ຍອມໄວ້ວາງໃຈພະເຢຊູຄຣິດຜູ້ເປັນພະບຸດຊຶ່ງໄດ້ວາຍພະຊົນ ເພື່ອບາບຂອງເຮົາ

"ຜູ້ທີ່ວາງໃຈໃນພະບຸດ ກໍບໍ່ຕ້ອງຖືກພິພາກສາລົງໂທດສ່ວນຜູ້ທີ່ມິໄດ້ວາງໃຈກໍຕ້ອງຖືກພິພາກສາລົງໂທດຢູ່ແລ້ວເພາະເຂົາມິໄດ້ວາງໃຈໃນພະນາມພະບຸດອົງດຽວຂອງພະເຈົ້າ ຫຼັກການພິພາກສາມີຢ່າງນີ້ ຄືຄວາມສະຫວ່າງໄດ້ເຂົ້າມາໃນໂລກແລ້ວ ແຕ່ມະນຸດໄດ້ຮັບຄວາມມືດຫຼາຍກວ່າ ຄວາມສະຫວ່າງເພາະກິດຈະການຂອງເຂົາຊົ່ວ."(ໂຢຮັນ 3:18-19)

ມັດທາຍ 22:37-39; ໂຢຮັນ 3:36; ໂຣມ 1:18-19

**10. ເປັນຫຍັງມະນຸດຈຶ່ງບໍ່ຍອມຮັບພະເຈົ້າ ຮັກແລະເຊື່ອຟັງພະອົງ?**

ເພາະວ່າເມື່ອມະນຸດໄດ້ທຳບາບ ເຂົາໄດ້ຫັນຄວາມຈົງຮັກພັກດີຊຶ່ງເຄີຍມີຕໍ່ພະເຈົ້າໄປມອບໄວ້ໃຫ້ກັບມານ ດັ່ງນັ້ນ, ມະນຸດຈຶ່ງຍ່າງເຂົ້າສູ່ອານາຈັກຂອງມານຮ້າຍ ແລະຕົກເປັນຂອງມານ ຊຶ່ງທຳໃຫ້ມະນຸດຕ້ອງຕົກເປັນທາດຮັບໃຊ້ມັນໃນການປະກອບທຳຊົ່ວ

"ແຕ່ຂ້າພະເຈົ້າເຫັນມີກົດອີກຢ່າງໜຶ່ງຢູ່ໃນກາຍຂອງຂ້າພະເຈົ້າຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈຂອງຂ້າພະເຈົ້າ ແລະຊັກນຳໃຫ້ຂ້າພະເຈົ້າຢູ່ໃຕ້ບັງຄັບກົດແຫ່ງບາບ ຊຶ່ງຢູ່ໃນກາຍຂອງຂ້າພະເຈົ້າ" (ໂຣມ 7:23)

2 ທີໂມທີ 2:26

**11. ມະນຸດບໍ່ສາມາດອອກຈາກອານາຈັກຂອງມານ ໄດ້ດ້ວຍຕົວເຂົາເອງຫຼື?**

ມະນຸດບໍ່ອາດຈະທຳເອງໄດ້ ເຂົາຈະຕ້ອງໄດ້ຮັບການປົດປ່ອຍ ບໍ່ມີມະນຸດຄົນໃດທີ່ເກັ່ງກ້າເທົ່າ

ມານຮ້າຍ ດັ່ງນັ້ນເຂົາຈຶ່ງບໍ່ອາດໜີຈາກມານຮ້າຍໄດ້ດ້ວຍຕົນເອງຈະຕ້ອງມີໃຜສັກຄົນທີ່ເກັ່ງກວ່າມານຮ້າຍມາຊ່ວຍປົດປ່ອຍເຂົາ

"ທ່ານທັງຫຼາຍຈົ່ງລະມັດລະວັງໃຫ້ດີ ດ້ວຍວ່າສັດຕູຂອງທ່ານຄືມານວິນຍານຍ່າງເວີນຢູ່ຮອບໆເຈົ້າ ເໝືອນໂຕສິງແຜ່ສຽງ ທ່ຽວໄປເສາະຫາຄົນທີ່ມັນຈະກັດກິນໄດ້" (1 ເປໂຕ5:8)

ເອເຟໂຊ 5:2; 2ເປໂຕ 1:3

**12. ມະນຸດຕ້ອງການປົດປ່ອຍເຊັ່ນນັ້ນຫຼື?**

ຄົນສ່ວນຫຼາຍແລ້ວບໍ່ຕ້ອງການໄດ້ຮັບການປົດປ່ອຍ ເຂົາຕ້ອງການຕົກເປັນຂອງມານແລະບໍ່ຕ້ອງການໃຫ້ໃຜມາຊ່ວຍ

"ຫຼັກການພິພາກສານີ້ຢ່າງນີ້ ຄືຄວາມສະຫວ່າງໄດ້ເຂົ້າໃນໂລກແລ້ວ ແຕ່ມະນຸດໄດ້ຮັກຄວາມມືດຫຼາຍກວ່າຮັກຄວາມສະຫວ່າງ ເພາະກິດຈະການຂອງເຂົາເລວທຣາມ"(ໂຢຮັນ 3:19)

"ແຕ່ທ່ານທັງຫຼາຍບໍ່ຍອມມາຫາເຮົາເພື່ອຈະໄດ້ຊີວິດ" (ໂຢຮັນ 5:40)

ເຢເລມີ 14:10; ໂຣມ 1:28, 32; 3:11; 2 ທີໂມທີ 2:11-12; 1ໂຢຮັນ 5:19

**13. ເປັນຫຍັງຄົນຈຶ່ງມັກເຮັດບາບ ແລະບໍ່ຕ້ອງການໄດ້ຮັບການປົດປ່ອຍໃຫ້ພົ້ນຄວາມທາດຂອງບາບ?**

ມານໄດ້ປິດບັງຕາຂອງເຂົາ ແລະໄດ້ຫຼອກເຂົາຈົນເຂົາບໍ່ເຫັນເຖິງຄວາມຮ້າຍແຮງຂອງບາບ ແລະບໍ່ເຊື່ອວ່າບາບຈະເປັນອັນຕະລາຍຕໍ່ເຂົາ

"ສ່ວນຄົນທີ່ບໍ່ເຊື່ອນັ້ນ ພຣະຂອງຍຸກຂອງໄດ້ກະທຳໃຈຂອງເຂົາໃຫ້ມືດໄປເພື່ອບໍ່ໃຫ້ເຂົາໄດ້ເຫັນເຖິງຄວາມສະຫວ່າງຂອງຂ່າວປະເສີດເລື່ອງພຣະສະຫງ່າລາສີຂອງພຣະຄຣິດຜູ້ມີລັກສະນະຢ່າງພຣະເຈົ້າ" (2 ໂກລິນໂທ 4:4)

ປັນຍາຈານ 8:11

**14. ທາລົກເຄີຍທຳບາບບໍ?**

ທາລົກເກີດມາມີທຳມະຊາດບາບຕິດຕົວມາແລ້ວ ແລະທຳບາບໂດຍທາງທຳມະຊາດ ແຕ່ເດັກບໍ່ຕ້ອງຮັບຜິດຊອບຕໍ່ພຣະເຈົ້າສຳລັບບາບຂອງເຂົາຈົນກວ່າຈະເຂົ້າໃຈວ່າບາບເປັນສິ່ງທີ່ຜິດ

"ເບິ່ງເຖີດຂ້າພຣະອົງຖືກກຳເນີດມາໃນຄວາມຜິດບາບແລະມານດາຕັ້ງຄັນຂ້າພະອົງໃນບາບ" (ເພງສັນລະເສີນ 51:5)

"ເຂົາທຳຜິດມາຕັ້ງແຕ່ເກີດ ຄືເວົ້າມຸສາ" (ເພງສັນລະເສີນ 58:3)

ໂຢບ 14: 4; ເອເຟໂຊ 2:3

**15. ທາລົກຈະຕ້ອງຕົກນະລົກບໍ ຖ້າເຂົາຕາຍຂະນະທີ່ຍັງເປັນທາລົກຢູ່?**

ເຂົາບໍ່ຕ້ອງລົງນະລົກ ພຣະເຢຊູຄຣິດໄດ້ຮັບໂທດທີ່ເຖິງຕາຍແທນມະນຸດເນື່ອງຈາກບາບທັງໝົດ ບໍ່ມີໃຜສັກຄົນບໍ່ວ່າຈະເປັນທາລົກ ຫຼືໃຜໆກໍຕາມຈະຕົກນະລົກເນື່ອງຈາກບາບທີ່ໄດ້ຮັບຕົກທອດມາຈາກບັນພະບູລຸດຄູ່ທຳອິດ ການທີ່ຄົນຕົກນະລົກເພາະເຂົາບໍ່ໄດ້ຕ້ອນຮັບພຣະເຢຊູ

(ຜູ້ໄດ້ຊົດໃຊ້ໜີ້ບາບຂອງເຮົາເທິງໄມ້ກາງເຂນ) ເປັນໂທດບາບແທນເຮົາ ແລະບໍ່ໄດ້ໄວ້ວາງໃຈພຣະເຢຊູໃຫ້ຊ່ວຍເຂົາລອດ ແຕ່ທາລົກຍ່ອມບໍ່ຮູ້ວ່າຈະຕ້ອນຮັບພຣະເຢຊູຢ່າງໃດ ດັ່ງນັ້ນເຂົາກໍບໍ່ຕ້ອງຮັບຜິດຊອບຕໍ່ພຣະເຈົ້າ

> "ສະນັ້ນການພິພາກສາລົງໂທດໄດ້ມາເຖິງຄົນທັງປວງເພາະການລະເມີດຄັ້ງດຽວສັນໃດ ການກະທຳອັນຊອບທຳຄັ້ງດຽວກໍນຳການປົດປ່ອຍແລະຊີວິດມາເຖິງທຸກຄົນສັນນັ້ນ"
> (ໂຣມ 5:18)

**16. ເດັກຈະມີອາຍຸສັກເທົ່າໃດຈຶ່ງຈະເລີ່ມມີຄວາມຮັບຜິດຊອບຕໍ່ພຣະເຈົ້າສຳລັບບາບຂອງເຂົາ?**

ມີຄວາມບໍ່ແນ່ນອນໃນເລື່ອງກ່ຽວກັບອາຍຸ ເດັກບາງຄົນເລີ່ມມີຄວາມເຂົ້າໃຈເມື່ອອາຍຸຍັງນ້ອຍກວ່າຄົນອື່ນ ມີນ້ອຍຄົນທີ່ຈະມີຄວາມເຂົ້າໃຈເມື່ອອາຍຸ 7 ຫຼື 8 ປີ ເດັກສ່ວນຫຼາຍຈະມີຄວາມໃນອາຍຸລະຫວ່າງ 9 ຫາ 12 ປີ ມີນ້ອຍຄົນນັກທີ່ນ້ອຍກວ່າ 2 ປີ ທີ່ເຂົ້າໃຈວ່າບາບຄືບາບ ເດັກທີ່ໄດ້ຮັບການສັ່ງສອນນ້ອຍໆວ່າອັນໃດຖືກອັນໃດຜິດຈະມີຄວາມເຂົ້າໃຈໄດ້ດີວ່າເດັກທີ່ບໍ່ໄດ້ຮັບການສັ່ງສອນ

**17. ມີຜູ້ປົດປ່ອຍໃຫ້ພົ້ນຈາກຄວາມບາບບໍ?**

ມີພຣະເຢຊູຄຣິດເປັນພະບຸດຂອງພະເຈົ້າ ແລະເປັນຜູ້ທີ່ຕາຍເທິງໄມ້ກາງເຂນ ເພື່ອໄຊ້ໜີ້ໂທດຂອງຄວາມບາບ ຈະປົດປ່ອຍຄົນທຸກຄົນຊຶ່ງຍອມໃຫ້ພະອົງຊ່ວຍເຫຼືອ

> "ພະອົງເອງໄດ້ຊົງຮັບແບກບາບຂອງເຮົາໄວ້ໃນພະກາຍຂອງພະອົງທີ່ຕົ້ນໄມ້ນັ້ນ ເພື່ອວ່າເຮົາທັງຫຼາຍຈະໄດ້ ແລະດຳເນີນຊີວິດຕາມ ດ້ວຍບາດແຜຂອງພະອົງທ່ານທັງຫຼາຍຈຶ່ງໄດ້ຮັບການຮັກສາໃຫ້ຫາຍ" (1 ເປໂຕ 2:24)

ໂຢຮັນ 3:14-16; ໂຣມ 8:1-2; 1 ເປໂຕ 3:18

**18. ການໄດ້ຮັບການປົດປ່ອຍຈາກບາບແລະຊາຕານ ໝາຍຄວາມວ່າແນວໃດ?**

ໂດຍການໄວ້ວາງໃຈໃນອົງພະເຢຊູຄຣິດເຈົ້າ ບຸກຄົນຜູ້ນັ້ນກໍກາຍເປັນສະມາຄົນໜຶ່ງຂອງຄອບຄົວຂອງພະເຈົ້າ ເຂົາໄດ້ເຂົ້າອານາຈັກຂອງພະເຈົ້າແລະຕັ້ງແຕ່ນັ້ນມາເຂົາຈະມີຄວາມຈົ່ງຮັກພັກດີຕໍ່ພະເຈົ້າ ແລະຈະບໍ່ຕົກເປັນຂອງມານແລະເປັນທາດແກ່ບາບອີກຕໍ່ໄປ

> "ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພະອົງ ຜູ້ທີ່ເຊື່ອໃນພະນາມຂອງພະອົງ ພະອົງກໍຊົງປະທານສິດທີໃຫ້ເປັນບຸດຂອງພະເຈົ້າ" (ໂຢຮັນ 1:12)

ໂຣມ 8:14, 37

**19. ບຸກຄົນຜູ້ນັ້ນຈະທຳບາບອີກຖືກຫຼືບໍ?**

ຖືກແລ້ວ ບາງຄັ້ງເຂົາອາດຈະທຳບາບອີກ ແຕ່ເຂົາຈະບໍ່ຮັກທີ່ຈະທຳບາບເຂົາມີທຳມະຊາດໃໝ່ຢູ່ພາຍໃນເຂົາ ທີ່ທຳໃຫ້ຮັກພະເຈົ້າແຫ່ງຄວາມບໍລິສຸດແລະຊັງບາບ

> "ຖ້າເຮົາທັງຫຼາຍຈະວ່າເຮົາບໍ່ມີບາບ ເຮົາກໍລວງຕົນເອງແລະ ບໍ່ໄດ້ຢູ່ໃນເຮົາເລີຍ" (1 ໂຢ ຮັນ 1:8)
> "ເຫດສະນັ້ນຖ້າຜູ້ໃດຢູ່ໃນພະຄຣິດ ຜູ້ນັ້ນກໍເປັນຄົນຖືກສ້າງໃໝ່ແລ້ວ ສິ່ງສາລະພັດທີ່ເກົ່າ

ກໍລ່ວງໄປນີ້ແນະກາຍສິ່ງໃໝ່ທັງນັ້ນ“ (2 ໂກລິນໂທ 5:17)

ກາລະເທຍ 6:15; 1ໂຢຮັນ 1:10; 2:1

**20.ເປັນຫຍັງມະນຸດທຳບາບ ຖ້າຫາກວ່າເຂົາໄດ້ຮັບການປົດປ່ອຍຈາກບາບແລ້ວ ?**

ເຂົາຍັງຄົງມີທຳມະຊາດເກົ່າຊຶ່ງຈະທຳໃຫ້ເຂົາບາບ ນອກຈາກນັ້ນຍັງມີການທົດລອງຕ່າງໆເພື່ອໃຫ້ເຂົາທຳບາບ ທຳມະຊາດບໍ່ໄດ້ຖືກກຳຈັດອອກໄປ ແຕ່ມັນຍັງຄົງຕໍ່ສູ້ກັບທຳມະຊາດໃໝ່ທີ່ມາຈາກພະວິນຍານບໍລິສຸດ

“ເພາະວ່າຄວາມຕ້ອງການຂອງເນື້ອໜັງຕໍ່ສູ້ພະວິນຍານແລະພະວິນຍານກໍຕໍ່ສູ້ເນື້ອໜັງ ເພາະທັງສອງຝ່າຍເປັນສັດຕູກັນ ດັ່ງນັ້ນສິ່ງທີ່ທ່ານທັງຫຼາຍປາຖະໜາທຳຈຶ່ງກະທຳບໍ່ໄດ້“ (ກາລາເທຍ 5:17)

ໂຣມ 7:17-19; ຢາກອບ 4:1, 4; 1 ເປໂຕ 5:8; 1ໂຢຮັນ 1:8

**21. ຖ້າເຊັ່ນນັ້ນຈະມີຄວາມແຕກຕ່າງແນວໃດກັນໃນການທຳບາບ ກ່ອນໄວ້ວາງໃຈພະຄຣິດ ແລະຫຼັງຈາກໄວ້ວາງໃຈພະອົງ ?**

ກ. ເມື່ອຄຣິສຕຽນທຳບາບ

(1) ເຂົາຈະບໍ່ສະບາຍໃຈ

(2) ເຂົາຍັງຄົງເປັນບຸດຂອງພະເຈົ້າແຕ່ເປັນບຸດທີ່ດື້ດ້ານແລະຈະຕ້ອງໄດ້ຮັບການແກ້ໄຂຈາກພະເຈົ້າເພື່ອເປັນຄົນດີ (ເຮັບເລີ 12:6, 7;ພນມ 3:19)

(3) ເຂົາຈະສູນເສຍຄວາມຊື່ນຊົມຍິນດີໃນສາມັກທຳກັບອົງພະຜູ້ເປັນເຈົ້າ (ເພງສັນລະເສີນ 51:3; 51:12)

(4) ຖ້າສາລະພາບບາບຂອງເຂົາຕໍ່ພະບິດາ ແລະພະເຈົ້າຈະອະໄພໃຫ້ແລ້ວຄືນຊື່ນຊົມຍິນດີໃນຄວາມລອດແກ່ເຂົາ

“ຖ້າເຮົາສາລະພາບບາບຂອງເຮົາ ພະອົງຊົງສັດຊື່ແລະທ່ຽງທຳຈະຊົງໂຜດຍົກບາບຂອງເຮົາແລະຈະຊົງຊຳລະເຮົາໃຫ້ພົ້ນຈາກການທັງສິ້ນ“ (1ໂຢຮັນ 1:9)

(5) ເຂົາຍ່ອມຕ້ອງຜົນຂອງບາບຂອງເຂົາ ຂະນະທີ່ຢູ່ເທິງໂລກນີ້

“ຜູ້ໃດຫວ່ານສິ່ງໃດລົງຈະໄດ້ເກັບກ່ຽວສິ່ງນັ້ນ“ (ກາລາເທຍ 6:7)

(6) ເຂົາສູນເສຍບຳເນັດໃນສະຫວັນ ແຕ່ຍັງເປັນຂອງເຂົາ (1 ໂກລິນໂທ 3:13-15; ພະນິມິດ 3:19)

ຂ. ເມື່ອຜູ້ທີ່ບໍ່ເປັນຄຣິສຕຽນທຳບາບ

(1) ເຂົາອາດຈະຮູ້ສຶກບໍ່ສະບາຍໃຈຖ້າເຂົາເຄີຍໄດ້ຮັບການອົບຮົມສັ່ງສອນທີ່ດີ ແຕ່ເຂົາມັກຈະຮູ້ສຶກປົກກະຕິສຸກດີ ແລະຈະບໍ່ຮູ້ວ່າເຂົາໄດ້ທຳບາບ (ໂຣມ 2:15)

(2) ເຂົາອາດຈະໄດ້ຮັບການລົງໂທດສຳລັບບາບຂອງເຂົາຂະນະທີ່ຢູ່ເທິງໂລກນີ້ ຫຼືອາດຈະບໍ່ໄດ້ຮັບເລີຍກໍໄດ້ ແຕ່ທີ່ແນ່ໆກໍຄື ເຂົາຈະຖືກລົງໂທດໃຫ້ຕົກນະລົກເປັນນິລັນດອນ

ຖ້າເຂົາບໍ່ເຂົ້າມາຫາພຣະຄຣິດສດ້ວຍໃຈທີ່ສຳນຶກໃນຄວາມບາບ ແລະຕ້ອງການກັບໃຈແລະຕ້ອນຮັບພະຄຣິດເປັນພະຜູ້ຊ່ວຍໃຫ້ລອດບຸກຄົນ

"ແຕ່ຖ້າທ່ານທັງຫຼາຍທັງຫຼາຍບໍ່ໄດ້ຖືກຕີສອນ ເຊັ່ນດຽວກັບຄົນອື່ນໆທ່ານກໍບໍ່ໄດ້ເປັນບຸດ ແຕ່ເປັນລູກທີ່ບໍ່ມີພໍ່" (ເຮັບເລີ 12:8)

"ແຕ່ຖ້າຜູ້ໃດທີ່ບໍ່ມີຊື່ຈົດໄວ້ໃນໜັງສືຊີວິດ ຜູ້ນັ້ນກໍຖືກຖິ້ມລົງໄປໃນບຶງໄຟ" (ພນມ 20:15)

ພະນິມິດ 21:8

**22. ມັນເປັນການສະຫຼາດຫຼືບໍທີ່ຈະ ຍອມສ່ຽງ ເອົາວ່າພະເຈົ້າຈະບໍ່ລົງໂທດຜູ້ທີ່ປະຕິເສດພະບຸດຂອງພະອົງ**

ມັນເປັນການບໍ່ສະຫຼາດເລີຍ ເນື່ອງຈາກໄດ້ປະທານຄວາມລອດແກ່ທຸກຄົນທີ່ເຕັມໃຈຕ້ອນຮັບພະອົງ ໂດຍຖວາຍຕົນເປັນເຄື່ອງບູຊາຂອງພະບຸດອົງດຽວຂອງພະອົງ ດ້ວຍຄວາມຍຸດຕິທຳ ແລະ ຄວາມຮັກ ພະເຈົ້າຕ້ອງລົງໂທດທຸກຄົນທີ່ປະຕິເສດພະບຸດຂອງພະອົງ

"ຜູ້ທີ່ວາງໃຈໃນພະອົງກໍບໍ່ຕ້ອງຖືກພິພາກສາລົງໂທດສ່ວນທີ່ມີໄດ້ວາງໃຈໃນພະນາມພະບຸດອົງດຽວຂອງພະເຈົ້າ" (ໂຢຮັນ 3:18)

"ພະພິໂລຂອງພະເຈົ້າຕົກຢູ່ກັບເຂົາ" (ໂຢຮັນ 3:36)

ໂຢຮັນ 3:18; 3:36;  6:40; 1 ທີໂມທີ 1:15; ເຮັບເລີ 10:28, 29, 31; ພນມ 20:15; 21:8

**23. ມີໃຜບໍໃນໂລກນີ້ທີ່ບໍ່ຈຳເປັນຕ້ອງຮັບຄວາມລອດ ຊຶ່ງພະເຢຊູຄຣິດປະທານໃຫ້ແກ່ທຸກຄົນ ທີ່ເຂົ້າມາຫາພະອົງໂດຍການກັບໃຈແລະດ້ວຍຄວາມເຊື່ອ?**

ບໍ່ມີແມ້ແຕ່ຄົນດຽວ "ເພາະວ່າທຸກຄົນທຳບາບ ແລະເສື່ອມພະລັດສະໝີຂອງພະເຈົ້າ" (ໂຣມ 3:23)

"ບໍ່ມີຜູ້ໃດເປັນຄົນຊອບທຳຈັກຄົນໜຶ່ງຄົນດຽວ ບໍ່ມີເລີຍ" (ໂຣມ 3:10)

ນອກຈາກພະເຢຊູຄຣິດແລ້ວບໍ່ມີຄວາມລອດທາງອື່ນອີກເລີຍ

"ໃນຜູ້ອື່ນຄວາມລອດບໍ່ມີເລີຍ ດ້ວຍນາມອື່ນຊຶ່ງໃຫ້ເຮົາທັງຫຼາຍລອດໄດ້ບໍ່ຊົງໂຜດໃຫ້ມີໃນທ່າມກາງມະນຸດທົ່ວໃຕ້ຟ້າ" (ກິດຈະການ 4:12)

ໂຣມ 3:12

**24. ມີໃຜບໍທີ່ບາບໃຫຍ່ຫຼວງ ຈົນພະເຈົ້າຈະບໍ່ຊ່ວຍໃຫ້ເຂົາໄດ້ຮັບຄວາມລອດເມື່ອເຂົາມາຫາພະອົງ**

ບໍ່ມີເລີຍ ພະເຢຊູຄຣິດຕາຍເພື່ອຄົນທັງໂລກ ດັ່ງນັ້ນຖ້າຜູ້ໃດເຂົ້າມາຫາພະອົງດ້ວຍການກັບໃຈແລະຄວາມເຊື່ອ ເຂົາຈະລອດ

ໂຢຮັນ 3:14 ກ່າວວ່າ"ທຸກຄົນທີ່ວາງໃນພະບຸດນັ້ນຈະບໍ່ພິນາດແຕ່ມີຊີວິດນິລັນດອນ"

"ແຕ່ຜູ້ທີ່ມາຫາເຮົາ ເຮົາກໍຈະບໍ່ຖິ້ມເຂົາເລີຍ" (ໂຢຮັນ 6:37)

"ພະວິນຍານແລະເຈົ້າສາວກ່າວວ່າ ເຊີນມາເຖີດແລະໃຫ້ຜູ້ທີ່ຍິນຄຳກ່າວວ່າເຊີນມາເຖີດແລະໃຫ້ຜູ້ທີ່ກະຫາຍເຂົ້າມາ ຜູ້ໃດມີໃຈປາຖະໜາກໍໃຫ້ຜູ້ນັ້ນມາຮັບນ້ຳແຫ່ງຊີວິດໂດຍບໍ່ຕ້ອງເສຍອັນໃດເລີຍ" (ພະນິມິດ 22:17)

## ບົດທີ່ 8

## ຄວາມລອດ

**1. ຄວາມລອດໝາຍວ່າແນວໃດ ?**

ຄວາມລອດ ໝາຍເຖິງ ການໄດ້ຮັບການປົດປ່ອຍ

**2. ເມື່ອຄຣິສຕຽນເວົ້າເຖິງຄວາມລອດນັ້ນໝາຍເຖິງຫຍັງ** ?

ໝາຍເຖິງ ການໄດ້ຮັບການປົດປ່ອຍໃຫ້ພົ້ນຈາກບາບ ໂທດຂອງບາບ(ຄວາມຕາຍແລະນະລົກ) ອຳນາດຂອງບາບ(ອຳນາດຂອງມານ)

"ເຮົາໃຫ້ຊີວິດນິລັນດອນແກ່ແກະນ້ອຍ ແກະນັ້ນຈະບໍ່ພິນາດເລີຍແລະຈະບໍ່ມີໃດຍາດຊີງແກະເຫຼົ່ານັ້ນໄປຈາກມືຂອງເຮົາໄດ້" (ໂຢຮັນ 10:28)

ໂຢຮັນ 5:24; 1 ໂຢຮັນ 5:4;ມັດທາຍ 1:21

3. **ໃຜເລົ່າທີ່ສາມາດປົດປ່ອຍເຮົາໃຫ້ພົ້ນຈາກບາບ ?**

ມີແຕ່ອົງພະເຢຊູຄຣິດເຈົ້າເທົ່ານັ້ນທີ່ຊ່ວຍເຮົາໄດ້

"ໃຜຈະຍົກຄວາມຜິດບາບໄດ້ເວັ້ນແຕ່ພະເຈົ້າເທົ່ານັ້ນ…ແຕ່ເພື່ອທ່ານທັງຫຼາຍຈະໄດ້ຮູ້ວ່າບຸດມະນຸດກໍມີສິດທິອຳນາດໃນໂລກທີ່ຈະໂຜດຄວາມຜິດບາບໄດ້(ພະອົງຈຶ່ງກ່າວສັ່ງຄົນງ່ອຍວ່າ) ເຮົາສັ່ງເຈົ້າວ່າຈົ່ງລຸກຂຶ້ນຍົກທີ່ນອນໄປບ້ານຂອງເຈົ້າເຖີດ"(ລູກາ 5:21, 24)

ເອເຟໂຊ 1:17; ກິດຈະການ 4:12

**4. ເຮົາໄດ້ຮັບຄວາມລອດນີ້ໄດ້ຢ່າງໃດ ?**

ໂດຍໄວ້ວາງໃຈການເພິ່ງຂອງພະເຢຊູຄຣິດເຈົ້າ ຊຶ່ງໄດ້ຫຼັ່ງໂລຫິດຂອງພະອົງເທິງໄມ້ກາງເຂນເພື່ອຊົດໃຊ້ໜີ້ບາບຂອງເຮົາ ຈະມອບຕົວຂອງເຂົາເອງໃຫ້ກັບພະຄຣິດ ໂດຍສິ້ນຊີງເພື່ອຄວາມລອດຂອງເຮົາ

"ຈົ່ງເຊື່ອແລະວາງໃຈໃນພະເຢຊູເຈົ້າແລະທ່ານຈະລອດ" (ກິດຈະການ 16:13)

"ພະໂລຫິດຂອງພະເຢຊູຄຣິດພະບຸດຂອງພະອົງກໍຊຳລະເຮົາທັງຫຼາຍໃຫ້ປາສະຈາກບາບທັງສິ້ນ" (1 ໂຢຮັນ 1:7)

ໂຢຮັນ 3:16; 3:36; 5:24; ເອເຟໂຊ 1:13

**5. ເປັນຫຍັງຄົນຈຳເປັນຕ້ອງໄດ້ຮັບຄວາມລອດ?**

ເພາະວ່າທຸກຄົນເປັນຄົນບາບໂດຍທຳມະຊາດ ແລະໄດ້ຕັດສິນໃຈທຳບາບແລະໄດ້ຖືກພິພາກສາລົງໂທດເຖິງຕາຍ

"ພະເຈົ້າຊົງເບິ່ງລົງມາຈາກຟ້າສະຫວັນ ເບິ່ງບຸດຊາຍທັງຫຼາຍຂອງມະນຸດ ວ່າມີຄົນໃດທີ່ສະຫຼາດ

ທີ່ເສາະຫາພະເຈົ້າເຂົາທັງຫຼາຍກໍຖົດຖອຍໄປໝົດເຂົາທັງຫຼາຍກໍເສື່ອມທຣາມເໝືອນກັນສິ້ນ
ບໍ່ມີສັກຄົນດຽວ ທີ່ກະທຳດີ ບໍ່ມີເລີຍ" (ພນມ 53:2-3)

"ຄ່າຈ້າງຂອງຄວາມຄືຄວາມຕາຍ" (ໂຣມ 6:23)

ພນມ 58:3ຂ; ໂຣມ 3:23; ໂຣມ 3:10-11

**6. ເຮົາສາມາດຊ່ວຍຕົວເຮົາເອງໃຫ້ລອດໄດ້ບໍ ?**

ເຮົາເຮັດບໍ່ໄດ້ ມານຊາຕານມີອຳນາດຫຼາຍກວ່າມະນຸດມັນຈະບໍ່ຍອມໃຫ້ມະນຸດຫຼຸດພົ້ນໄປໄດ້

"ທ່ານທັງຫຼາຍຈົ່ງສະຫງົບໃຈ ຈົ່ງລະມັດລະວັງໃຫ້ດີ ດ້ວຍສັດຕູຂອງທ່ານຄືມານວິນຍານຄືສິງທ່ຽວໄປ
ເສາະຫາຄົນທີ່ມັນຈະກັດກິນໄດ້" (1 ເປໂຕ 5:8)

ໂຣມ 5:6; ເອເຟໂຊ 2:1, 5

**7.ເປັນຫຍັງພະເຢຊູຄຣິດຈຶ່ງສາມາດປົດປ່ອຍເຮົາໄດ້ ?**

ພະເຢຊູເປັນພະເຈົ້າ ຊົງມີສິດທິອຳນາດເໜືອມານ ພະອົງຈະປົດປ່ອຍທຸກຄົນທີ່ໄວ້ວາງໃຈໃນພະ
ອົງໃຫ້ຫຼຸດພົ້ນ

"ພະອົງເອງໄດ້ຊົງຮັບແບກບາບຂອງເຮົາໄວ້ໃນພະກາຍຂອງພະອົງທີ່ຕົ້ນໄມ້ນັ້ນ ເພື່ອວ່າເຮົາທັງຫຼາຍ
ຈະໄດ້ຕາຍຈາກບາບໄດ້ ແລະດຳລົງຊີວິດຄວາມຊອບທຳ ດ້ວຍບາດແຜຂອງພະອົງ ທ່ານທັງຫຼາຍຈຶ່ງ
ໄດ້ຮັບການຮັກສາໃຫ້ຫາຍ" (1ເປໂຈ 2:24)

ກາລາເທຍ 1:4; ທິຕັສ 2:14

**8. ພະເຢຊູຊ່ວຍໃຫ້ເຮົາລອດໄດ້ຢ່າງໃດ ?**

ພະເຢຊູຊົງສິ້ນພະຊົນເທິງໄມ້ກາງເຂນເພື່ອຊົດໃຊ້ໜີ້ບາບຂອງມະນຸດຖ້າບຸກຄົນໃດຍອມຮັບວ່າ
ພະເຢຊູຄຣິດໄດ້ຊົງສິ້ນພະຊົນເພື່ອເຂົາ ບຸກຄົນຜູ້ນັ້ນກໍບໍ່ຕ້ອງຕົກຢູ່ໃຕ້ຄຳພິພາກສາໂທດໃຫ້ເຖິງ
ຕາຍ (ດ້ານຈິດວິນຍານ) ອີກຕໍ່ໄປ ດັ່ງນັ້ນເຂົາຜູ້ນັ້ນກໍບໍ່ຕົກຢູ່ໃຕ້ອຳນາດຂອງມານອີກຕໍ່ໄປ

"ເຮົາບອກຄວາມຈິງແກ່ທ່ານທັງຫຼາຍວ່າ ຖ້າຜູ້ໃດຟັງຄຳຂອງເຮົາແລະວາງໃຈໃນພະອົງຜູ້ຊົງໃຊ້ເຮົາ
ມາຜູ້ນັ້ນກໍມີຊີວິດນິລັນດອນແລະບໍ່ຖືກພິພາກສາ ແຕ່ໄດ້ຜ່ານພົ້ນຄວາມຕາຍໄປສູ່ຊີວິດແລ້ວ"
(ໂຢຮັນ 5:24)

ໂຢຮັນ 3:18; ໂຢຮັນ 3:16; ໂຣມ 6:18, 22

**9. ເປັນຫຍັງພະເຢຊູຈຶ່ງຈຳເປັນຕ້ອງມາຕາຍເພື່ອປົດປ່ອຍມະນຸດ ?**

ເພາະວ່າທຸກໆຄົນໃນໂລກນີ້ເປັນຄົນບາບ ທີ່ຕ້ອງຖືກການພິພາກສາແລະຈະຕ້ອງມີການຊົດໃຊ້
ໜີ້ບາບຊຶ່ງມີໂທດເຖິງຕາຍ

"ເພາະວ່າຄ່າຈ້າງຂອງບາບຄືຄວາມຕາຍ ແຕ່ຂອງປະທານຈາກພະເຈົ້າຄືຊີວິດນິລັນດອນໃນພະເຢຊູ
ຄຣິດອົງພະຜູ້ເປັນຂອງເຮົາ" (ໂຣມ 6:23)

ໂຣມ 3:10

**10. ການຕາຍເທິງໄມ້ກາງເຂນຂອງພະເຢຊູຄຣິດ ຊ່ວຍໃຫ້ຄົນລອດໄດ້ຢ່າງໃດ ?**

ມະນຸດຊຶ່ງເປັນຄົນບາບຈະຕ້ອງຮັບໂທດເຖິງຕາຍ ຫຼືຈະຕ້ອງມີບຸກຄົນຜູ້ນັ້ນ ທີ່ບໍ່ໄດ້ມີບາບເລີຍມາຕາຍເພື່ອຮັບໂທດແທນມະນຸດ ເນື່ອງຈາກທຸກຄົນໃນໂລກນີ້ລ້ວນຄົນບາບ ແລະຕ້ອງຄຳພິພາກສາສຳລັບບາບຂອງເຂົາຈຶ່ງມີທາງອື່ນເລີຍທີ່ຈະຊ່ວຍໃຫ້ມະນຸດລອດໄດ້ ເວັ້ນໄວ້ແຕ່ພະເຈົ້າເອງສະພາບມະນຸດແລະຮັບໂທດເຖິງຕາຍ ພະອົງຈະຕ້ອງເປັນພະເຈົ້າເພື່ອການຕາຍຂອງພະອົງຈະສາມາດຊົດໃຊ້ໜີ້ບາບຂອງມະນຸດບໍ່ແມ່ນພຽງແຕ່ຂອງຄົນໆດຽວ ແຕ່ຂອງຄົນທຸກຄົນພະອົງຕ້ອງເປັນພະເຈົ້າ ເພາະພະເຈົ້າເທົ່ານັ້ນທີ່ບໍ່ມີບາບ

ເພື່ອທີ່ຈະຊ່ວຍໃຫ້ເຂົ້າໃຈດີຂຶ້ນຈະຂໍຍົກຕົວຢ່າງໃຫ້ເບິ່ງສັກຕົວຢ່າງໜຶ່ງ ສົມມຸດວ່າ ມີອາດຊະຍາກຳຄົນໜຶ່ງຕ້ອງຖືກພິພາກສາໂທດໃຫ້ເຖິງຕາຍ ມີຄົນໆໜຶ່ງຊຶ່ງຮັກອາດຊະຍາກຳຄົນນີ້ຫຼາຍໄດ້ສະເໜີຕົວມາຕາຍແທນອາດຊະຍາກຳຜູ້ນີ້ມີສິ່ງຢູ່ 3 ສິ່ງທີ່ຈຳເປັນຕ້ອງກະທຳເພື່ອໃຫ້ອາດຊະຍາກຳຜູ້ນີ້ເປັນອິດສະຫຼະ

(1) ຜູ້ພິພາກສາທີ່ໄດ້ສັ່ງລົງໂທດເຂົາ ຈະຕ້ອງເຕັມໃຈທີ່ຍອມຮັບຜູ້ທີ່ຈະມາຮັບໂທດແທນ (ພະເຈົ້າເຕັມພະໄທ)

(2) ຜູ້ທີ່ຈະມາຮັບໂທດແທນຊຶ່ງບໍ່ເຄີຍປະກອບອາດຊະຍາກຳເລີຍ ຈະຕ້ອງເຕັມໃຈທີ່ຈະຕາຍແທນທີ່ເຂົາ (ພະເຢຊູຄຣິດຜູ້ທີ່ບໍ່ມີບາບເລີຍໄດ້ຕາຍແທນເຮົາ) ແລະ

(3) ອາດຊະຍາກຳຜູ້ຕ້ອງຄຳພິພາກສາຈະຕ້ອງມາຮັບຜູ້ທີ່ຮັບໂທດແທນເຂົາເພື່ອວ່າເຂົາຈະຕ້ອງໄດ້ຫຼຸດພົ້ນເປັນອິດສະຫຼະ ມິສະນັ້ນແລ້ວອາດຊາຍາກຳຜູ້ນັ້ນຈະຕ້ອງຕາຍ ສຳລັບອາດຊະຍາກຳທີ່ເຂົາກໍ່ຂຶ້ນ (ແລະດັ່ງນັ້ນທຸກໆຄົນໃນໂລກນີ້ຈະຕ້ອງເລືອກເອົາຢ່າງໃດຢ່າງໜຶ່ງ ຄືຍອມຮັບພະເຢຊູຊຶ່ງໄດ້ຕາຍເທິງໄມ້ກາງເຂນເປັນຜູ້ຮັບໂທດແທນເຂົາຫຼືຕົວເຂົາເອງຈະຕ້ອງຮັບໂທດເຖິງຕາຍ)

"ໃນປະຖົມມະການ ພຣະວາທະດຳລົງຢູ່ແລະພຣະທຳຊົງສະຖິດຢູ່ກັບພະເຈົ້າ ແລະພຣະວາທະຊົງເປັນພະເຈົ້າ…ພຣະວາທະໄດ້ຊົງບັງເກີດເປັນມະນຸດແລະຊົງຢູ່ທ່າມກາງເຮົາ" (ໂຢຮັນ 1:1, 14)

"ດ້ວຍເຫດວ່າມີພະເຈົ້າອົງດຽວແລະມີຄົນກາງແຕ່ຜູ້ດຽວລະຫວ່າງພະເຈົ້າກັບມະນຸດຄືພະເຢຊູຄຣິດຜູ້ຊົງສະພາບເປັນມະນຸດຜູ້ຊົງປະທານພະອົງເອງ ເປັນຄ່າໄຖ່ສຳລັບຄົນທັງປວງເຫດການນີ້ເປັນພະຍານໃນເວລາອັນເໝາະ" (1 ທີໂມທີ 2:5-6)

ເຮັບເລີ 2:16-18; 1 ເປໂຕ 1:18-19

**11. ເນື່ອງພະເຈົ້າເປັນຄວາມຮັກ ເຫດໃດພະເຈົ້າຈຶ່ງບໍ່ອາດຈະຍົກໂທດຄວາມຜິດບາບຂອງມະນຸດໂດຍບໍ່ຕ້ອງມີການຊົດໃຊ້ໜີ້ບາບອັນເປັນໂທດເຖິງຕາຍ ?**

ຈິງຢູ່ພະເຈົ້າເປັນຄວາມຮັກ ແຕ່ພະເຈົ້າກໍຊົງໄວ້ຊື່ຄວາມຍຸດຕິທຳແລະຊອບທຳ ດັ່ງນັ້ນຈະຕ້ອງລົງໂທດຄວາມຜິດບາບ ໂທດນັ້ນຄືຄວາມຕາຍ (ພະເຈົ້າໄດ້ເຄີຍເຕືອນມະນຸດມາກ່ອນແລ້ວກ່ອນທີ່ເຂົາຈະທຳບາບ) ເນື່ອງມະນຸດໄດ້ຈາກທຳບາບ ມະນຸດຈຶ່ງຕ້ອງຊົດໃຊ້ໜີ້ບາບນັ້ນ ດັ່ງນັ້ນພະເຢຊູຈຶ່ງຕ້ອງສະເດັດມາຮັບສະພາບມະນຸດໃນໂລກນີ້ ແລະດຳລົງຊີວິດທີ່ປາສະຈາກບາບ

ຖ້າບາບຂອງບຸກຄົນຜູ້ໜຶ່ງໄດ້ຮັບການຍົກໂທດ ໂດຍບໍ່ມີການລົງໂທດບາບອື່ນໆ ທັງໝົດ ດັ່ງຈຶ່ງຕ້ອງມີການລົງໂທດສຳລັບຄວາມບາບ

"ແລະຈະສຳແດງໃນປັດຈຸບັນນີ້ວ່າ ພະອົງຊົງເປັນຜູ້ຊອບທຳແລະຊົງໂຜດໃຫ້ຜູ້ທີ່ເຊື່ອໃນພະເຢຊູ ເປັນຜູ້ຊອບທຳດ້ວຍ" (ໂຣມ 3:26)

ໂຣມ 5:8; ໂຣມ 6:23; ເຮັບເລີ 2:16-18

**12. ເຫດໃດມະນຸດຈຶ່ງບໍ່ອາດຈະໄດ້ຮັບຄວາມລອດໂດຍທາງຄວາມດີນັ້ນຄືໂດຍການຮັກສາທຳບັນຍັດຂອງພະເຈົ້າ ?**

ບໍ່ມີໃຜຈັກຄົນເປັນຄົນດີ ບໍ່ມີໃຜຈັກຄົນທີ່ສາມາດຮັກສາທຳບັນຍັກໄດ້ໝົດ ແລະຖ້າເຂົາຜູ້ນັ້ນລະເມີດທຳບັນຍັດທາງບັນຍັດທັງໝົດ ເຂົາເປັນຄົນບາບເພາະໄດ້ລະເມີດທຳບັນຍັດ

"ເພາະວ່າຜູ້ໃດຮັກສາທຳບັນຍັດໄດ້ທັງໝົດ ແຕ່ຜິດຢູ່ຂໍ້ດຽວ ຜູ້ນັ້ນກໍເປັນຜູ້ຜິດທາງບັນຍັດທັງໝົດ" (ຢາກອບ 2:10)

ໂຣມ 3:20; ໂຣມ 3:10-12; ໂຣມ 3:23; ອີຊາຢາ 53:6

**13. ຖ້າບໍ່ມີໃຜເລີຍສາມາດຮັກສາທຳບັນຍັດ (ບົດບັນຍັດຂອງພະເຈົ້າ) ເປັນຫຍັງພະເຈົ້າຈຶ່ງປະທານທຳບັນຍັດ ?**

ທຳບັນຍັດທີ່ໃຫ້ມາກໍເພື່ອໃຫ້ມະນຸດເຂົ້າໃຈເຖິງບາບຂອງເຂົາ ຖ້າບໍ່ມີທຳບັນຍັດໃຫ້ມະນຸດປະພຶດຊອບ ມະນຸດກໍຈະບໍ່ຮູ້ວ່າເຂົາເປັນຄົນບາບໜາພຽງໃດ

ທຳບັນຍັດເປັນຄູທີ່ນຳເຮົາມາຫາພະຄຣິດ ຜູ້ຊຶ່ງສາມາດຊ່ວຍໃຫ້ເຮົາລອດໄດ້ ທຳບັນຍັດເປັນກະຈົກເງົາທີ່ສະແດງໃຫ້ເຫັນວ່າມະນຸດເປັນຄົນບາບໜາເຊັ່ນໃດ

"ເພາະໃນສາຍພະເນດຂອງພະເຈົ້າ ບໍ່ມີຄົນຜູ້ໃດຜູ້ໜຶ່ງເປັນຄົນຊອບທຳໂດຍການປະພຶດຕາມທຳບັນຍັດໄດ້ ເພາະທຳບັນຍັດນັ້ນທຳໃຫ້ຮູ້ຈັກບາບໄດ້" (ໂຣມ 3:20)

ກາລາເທຍ 2:16; ກາລາເທຍ 3:21; ກາລາເທຍ 3:24

**14. ຄົນທີ່ບໍ່ເຄີຍໄດ້ຍິນຂ່າວປະເສີດຈະລອດບ ?**

ຕາມຄຳສອນຂອງພະຄຳພີແລ້ວ ບໍ່ມີໃຜທີ່ຈະໄດ້ຮັບຄວາມລອດເນື່ອງຈາກບໍ່ໄດ້ໃສ່ໃຈຟັງຂ່າວປະເສີດ ຖ້າຄົນໆໜຶ່ງສາມາດໄດ້ຮັບຄວາມລອດ ໂດຍບໍ່ຕ້ອງເພິ່ງການຕາຍເທິງໄມ້ກາງເຂນຂອງພະຄຣິສຄົນທັງສາມາດໄດ້ຮັບຄວາມລອດ ໃນລັກສະນະດຽວກັນນີ້ ພຣະຄຣິດກໍບໍ່ຈຳເປັນຕ້ອງມາຕາຍເພື່ອຄົນທັງໂລກ

"ໃນຜູ້ອື່ນຄວາມລອດບໍ່ມີເລີຍ ດ້ວຍນາມອື່ນຊຶ່ງໃຫ້ເຮົາທັງຫຼາຍລອດໄດ້ບໍ່ຊົງໂຜດໃຫ້ມີໃນທ່າມກາງມະນຸດທົ່ວໃຕ້ຟ້າ" (ກິດຈະການ 4:12)

ເອເສເດຍ 3:18-19; 33:8-9

**15. ພະເຈົ້າຊົງບໍ່ຍຸດຕິທຳຫຼືທີ່ສົ່ງຄົນລົງນະລົກ ເພາະວ່າເຂົາບໍເຄີຍໄດ້ຍິນຂ່າວປະເສີດ?**

ພະເຈົ້າຊົງຍຸດຕິທຳ ຊອບທຳແລະປະກອບດ້ວຍພະເມດຕາ ຄວາມບາບຂອງມະນຸດຕ່າງຫາກທີ່

ສາບໃຫ້ເຂົາລົງນະລົກ ພະເຈົ້າໄດ້ເປີດໂອກາດໃຫ້ທຸກຄົນໄດ້ຮັບຄວາມລອດ ແຕ່ພະອົງຈະບໍ່ບັບບັງຄັບໃຫ້ມະນຸດຮັບຄວາມລອດນີ້ ພະອົງໄດ້ສ້າງມະນຸດຂຶ້ນມາເພື່ອທີ່ມະນຸດຈະໄດ້ມີຄວາມສຳພັນກັບພະອົງ ດັ່ງນັ້ນມະນຸດຈຶ່ງມີສິດທິອຳນາດທີ່ຈະເລືອກວ່າເຂົາຄວນຈະຮັບໃຊ້ຜູ້ໃດ

> “ຕັ້ງແຕ່ເລີ່ມສ້າງໂລກມາແລ້ວ ສະພາບທີ່ບໍ່ປະກົດຂອງພະເຈົ້ານັ້ນຄື ສະຖານະພາບອັນຖາວອນຂອງພະອົງກໍໄດ້ປະກົດຊັດໃນສັບພະສິ່ງທີ່ພະອົງໄດ້ຊົງສ້າງ ສະນັ້ນເຂົາທັງຫຼາຍຈຶ່ງບໍ່ມີຂໍ້ແກ້ຕົວເລີຍ“ (ໂຣມ 1:20)

ໂຣມ 1:21; 28; ໂຢຊູວາ 24:15; 1ທີໂມທີ 2:4; 2 ເປໂຕ 3:9

**16. ຄົນບາບທັງໝົດຈະໄດ້ຮັບໂທດເຊັ່ນດຽວກັນຫຼື ?**

ເປົ່າເລີຍ ພະຄຣິດໄດ້ກ່າວວ່າ “ຜູ້ທີ່ໄດ້ຮັບຫຼາຍຈະຕ້ອງເອົາຈາກຜູ້ນັ້ນຫຼາຍ“ ຜູ້ທີ່ໄດ້ຍິນຂ່າວປະເສີດນ້ອຍໆ ແລະມີໂອກາດຫຼາຍທີ່ຈະຕ້ອນຮັບພະເຢຊູຄຣິດເຈົ້າ ແຕ່ບໍ່ຍອມຮັບພະອົງໄວ້ຈະໄດ້ຮັບໜັກກ່ວາຜູ້ທີ່ມີໂອກາດນ້ອຍ

> “ແຕ່ຜູ້ທີ່ມິໄດ້ຮູ້ ແລ້ວໄດ້ກະທຳສິ່ງຊຶ່ງສົມຈະຖືກຂ້ຽນ ກໍຈະຖືກຂ້ຽນນ້ອຍ ຜູ້ໃດໄດ້ຮັບຫຼາຍຈະຕ້ອງຮຽກເອົາຈາກຜູ້ນັ້ນຫຼາຍ ແລະຜູ້ໄດ້ຮັບຝາກໄວ້ຫຼາຍກໍຈະຕ້ອງທວງເອົາຈາກຜູ້ນັ້ນຫຼາຍ“ (ລູກາ 12:48)

ເອເສເດຍ 3:18; ມັດທາຍ 11:21-24; ໂຣມ 2:12; ກາລາເທຍ 6:7

**17. ທຸກຄົນທີ່ເຊື່ອໃນພະເຈົ້າທີ່ແທ້ຈິງ ແລະຊົງພະຊົນຢູ່ຈະໄດ້ຮັບຄວາມລອດເຊັ່ນນັ້ນຫຼື ?**

ບໍ່ແມ່ນເລີຍ ຜູ້ທີ່ມາຫາພະເຈົ້າໂດຍທາງພະບຸດຂອງພະອົງ ຄືພະເຢຊູຄຣິດເທົ່ານັ້ນທີ່ຈະໄດ້ຮັບຄວາມລອດ

> “ພະເຢຊູກ່າວກັບເຂົາວ່າ ເຮົາເປັນທາງນັ້ນເປັນຄວາມຈິງແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພະບິດານອກຈາກຈະມາທາງເຮົາ“ (ໂຢຮັນ 14:6)

ໂຢຮັນ 1:12-13; ໂຢຮັນ 3:16; ໂຢຮັນ 3:36; 10:9

**18. ພວກອິສະລະເອນ ຍິວແລະຜູ້ໄດ້ຊື່ວ່າເປັນຄຣິສຕຽນ ຫຼາຍໆຄົນຕ່າງກໍເຊື່ອໃນພະເຈົ້າ ແຕ່ຕ່າງກໍອ້າງວ່າພະເຢຊູເປັນພຽງມະນຸດຄົນໜຶ່ງ ເປັນຜູ້ເຜີຍພະວັດຈະນະຫຼືເປັນຜູ້ມີສິນລະທຳດີທີ່ຍິ່ງໃຫຍ່ຄົນໜຶ່ງ ຊຶ່ງຄຳສັ່ງສອນລ້ວນເປັນສິ່ງທີ່ດີ ຄວາມເຊື່ອເຊັ່ນນັ້ນຈະຊ່ວຍໃຫ້ເຂົາເຫຼົ່ານັ້ນໄດ້ຮັບຄວາມລອດບໍ ?**

ຕາມຄຳສອນຂອງພະຄຳພີແລ້ວ ເຂົາຈະບໍ່ໄດ້ຮັບຄວາມລອດ ພະເຢຊູກ່າວວ່າ

> “ບໍ່ມີຜູ້ໃດມາເຖິງພະບິດາໄດ້ນອກຈາກທາງເຮົາ“ (ໂຢຮັນ 14:6)
>
> “ໃນຜູ້ອື່ນຄວາມລອດບໍ່ມີເລີຍ ດ້ວຍນາມອື່ນຊຶ່ງໃຫ້ເຮົາທັງຫຼາຍລອດໄດ້ບໍ່ຊົງໂຜດໃຫ້ມີໃນທ່າມກາງມະນຸດທົ່ວໃຕ້ຟ້າ“ (ກິດຈະການ 4:12)

2 ເປໂຕ 2:1; 2ໂຢຮັນ

**19. ຄົນທີ່ຮຽກຕົນເອງວ່າຄຣິສຕຽນທຸກຄົນຈະໄດ້ຮັບຄວາມລອດບໍ ?**

ບໍ່ທຸກຄົນ ຄົນທີ່ໄດ້ວາງໃຈອົງພະເຢຊູຄຣິດຢ່າງຈິງໆ ເພື່ອຮັບຄວາມລອດເທົ່ານັ້ນທີ່ຈະລອດ ພະເຢຊູເອງໄດ້ເຕືອນເຖິງຜູ້ທີ່ອ້າງຕົວວ່າເປັນຄຣິສຕຽນ ແມ້ກະທັ່ງຜູ້ທີ່ໄດ້ທຳການເທດສະໜາ ແລະໄດ້ທຳການອັດສະຈັນຕ່າງໆໃນນາມຂອງພະອົງ ພະອົງຍັງກ່າວວ່າບໍ່ໄດ້ເປັນຂອງພະອົງ

> "ເມື່ອເຖິງວັນນັ້ນຈະມີຄົນເປັນອັນຫຼາຍຮ້ອງແກ່ເຮົາວ່າ ພະອົງເຈົ້າຂ້າ ພະອົງເຈົ້າຂ້າ ຂ້າພະອົງກ່າວພະວັກຈະນະໃນພະນາມຂອງພະອົງແລະຂັບຜີອອກໃນພະນາມຂອງພະອົງໄດ້ທຳການມະຫັດສະຈັນເປັນອັນມາກໃນພະນາມຂອງພະອົງມິໃຊ່ຫຼື" (ມັດທາຍ 7:22-23)

1 ທີໂມທີ 4:1; 2 ທີໂມທີ 4:3; ທິຕັສ 1:11; 2 ເປໂຕ 2:1-2

**20. ເນື່ອງຈາກພະເຈົ້າຊົງມີສິດທິອຳນາດເໜືອສັບພະສິ່ງທັງໝົດ ເຫດໃດພະອົງຈຶ່ງຍອມໃຫ້ມະນຸດທຳບາບ?**

ພະເຈົ້າສ້າງມະນຸດຂຶ້ນມາເພື່ອທີ່ຈະໄດ້ມີສຳພັນທະພາບກັບພະອົງ ມະນຸດຈະຕ້ອງມີສິດທິອຳນາດໃນການເລືອກທາງຊີວິດຂອງຕົນ ມິສະນັ້ນແລ້ວມະນຸດກໍຈະເປັນພຽງເຄື່ອງກົນຈັກ ມະນຸດໄດ້ເລືອກທຳບາບແລະເປັນກົບຕໍ່ພະເຈົ້າ ມະນຸດໄດ້ຫັນໄປເຊື່ອຟັງສຽງຂອງມານຊຶ່ງເປັນສັດຕູຂອງພະເຈົ້າ

> "ງູຈຶ່ງເວົ້າກັບຍິງນັ້ນວ່າເຈົ້າຈະບໍ່ຕາຍຈິງດອກ…ເມື່ອຍິງນັ້ນເຫັນວ່າຕົ້ນໄມ້ນັ້ນໜ້າກິນ ແລະໜ້າເບິ່ງດ້ວຍທັງເປັນຕົ້ນໄມ້ທີ່ມຸ່ງໝາຍຈະໃຫ້ເກີດປັນຍາ ຈຶ່ງເກັບຜົນໄມ້ນັ້ນມາກິນແລ້ວສົ່ງໃຫ້ສາມີກິນດ້ວຍເຂົາກໍກິນ" (ປະຖົມມະການ 3:4, 6)

ເອເສເຄຍ 18:23, 32; ມັດທາຍ 18:14; 1 ທີໂມທີ 2:4

**21. ເນື່ອງຈາກມະນຸດຈົງໃຈທຳບາບ ແລະຫັນຄວາມຮັກພັກດີທີ່ເຄີຍມີຕໍ່ພະເຈົ້າໄປໃຫ້ກັບມານເຫດໃດ ພະເຈົ້າຕ້ອງການຊ່ວຍເຫຼືອມະນຸດໃຫ້ຫຼຸດພົ້ນຈາກຜົນແລະອຳນາດບາບ ?**

ເພາະວ່າພະເຈົ້າຮັກມະນຸດທີ່ພະອົງຊົງສ້າງ ແລະຕ້ອງການໃຫ້ມະນຸດມີສ່ວນຮ່ວມໃນຄວາມຊື່ນຊົມຍິນດີເທິງສະຫວັນ ພະອົງໄດ້ຈັດໃຫ້ມີຫົນທາງໆໜຶ່ງທີ່ມະນຸດບໍ່ຈຳເປັນຕ້ອງຮັບໂທດຂອງບາບ ຊຶ່ງກໍຄືຄວາມຕາຍແລະການຕົກນະລົກ ຊຶ່ງເປັນທີ່ມະນຸດຕ້ອງໄປ ຫາກເຂົາບໍ່ຍອມຮັບວິຖີທາງຂອງການປົດປ່ອຍຂອງພະເຈົ້າ

> "ເພາະວ່າພະເຈົ້າຊົງຮັກໂລກ ຈົນໄດ້ປະທານພະບຸດອົງດຽວຂອງພະອົງເພື່ອທຸກຄົນທີ່ວາງໃນພະບຸດນັ້ນຈະບໍ່ພິນາດແຕ່ມີຊີວິດນິລັນດອນ" (ໂຢຮັນ 3:16)

ເອເສເຄຍ 18:23, 32; ມັດທາຍ 18:14; 1 ທີໂມທີ 2:4

**22. ຖ້າມະນຸດບໍ່ອາດຈະຊ່ວຍເຫຼືອຕົນເອງໃຫ້ລອດໄດ້ ຖ້າເຊັ່ນນັ້ນຄວາມລອດມາຈາກໃຜ ?**

ຄວາມລອດເປັນຂອງປະທານຈາກພະເຈົ້າ

> "ດ້ວຍວ່າຊຶ່ງເຮົາທັງຫຼາຍລອດນັ້ນກໍລອດໂດຍພະຄຸນ ເພາະຄວາມເຊື່ອແລະມິໃຊ່ໂດຍຕົວເຮົາທັງຫຼາຍກະທຳເອງແຕ່ພະເຈົ້າຊົງປະທານໃຫ້ຄວາມລອດນັ້ນຈະເນື່ອງດ້ວຍການກະທຳກໍຫາມິໄດ້ ເພື່ອມິໃຫ້ຄົນໜຶ່ງຄົນໃດອວດໄດ້" (ເອເຟໂຊ 2:8-9)

ໂຣມ 6:23; ກາລາເທຍ 2:16

**23. ມະນຸດສາມາດທຳສິ່ງໃດໄດ້ບໍເພື່ອທີ່ຈະໄດ້ຮັບຄວາມລອດ ?**

ມະນຸດທຳອັນໃດບໍ່ໄດ້ເລີຍເພື່ອທີ່ຈະໄດ້ຄວາມລອດ ມະນຸດເປັນຄົນບາບທີ່ຊ່ວຍຕົນເອງບໍ່ໄດ້ ຕ້ອງຄຳພິພາກສາຈຳເພາະພະພັກພະເຈົ້າ ສິ່ງທີ່ມະນຸດສາມາດທຳໄດ້ຄື ຍອມຮັບເອົາຄວາມລອດອັນມະຫັດສະຈັນທີ່ພະເຈົ້າທຳໃຫ້

"ຂ້າພະອົງທຸກຄົນໄດ້ກາຍເປັນເໝືອນຄົນທີ່ບໍ່ສະອາດແລະການກະທຳອັນຊອບທຳຂອງຂ້າພະອົງທັງສິ້ນເໝືອນເສື້ອຜ້າທີ່ສົກກະປົກ…" (ອິຊາຢາ 46:6)

ໂຢຮັນ 6:44; ໂຣມ 6:23; ກາລາເທຍ 2:16; ເອເຟໂຊ 2:8-9

**24. ແມ້ກະທັ່ງ "ຄົນດີ" ຍັງຈຳເປັນຕ້ອງຮັບຄວາມລອດເຊັ່ນນັ້ນຫຼື ?**

ຖືກແລ້ວ ບໍ່ມີ "ຄົນດີ" ເລີຍ ເພາະວ່າທຸກຄົນເປັນຄົນບາບແລະຖືກພິພາກສາຈຳເພາະພະພັກພະເຈົ້າ

"ບໍ່ມີຜູ້ໃດເປັນຄົນຊອບທຳຈັກຄົນດຽວ ບໍ່ມີເລີຍ" (ໂຣມ 3:10)

ອິຊາຢາ 53:6; ໂຣມ 3:11-12,18; ໂຣມ 3:23; ເຮັບເລີ 10:29

**25. ຖ້າທຸກຄົນເປັນຄົນບາບ ແລະເປັນຂອງມານ ໂດຍທຳມະຊາດແລ້ວເປັນຄົນບາງຄົນຈຶ່ງຊົ່ວຊ້າກ່ວາຄົນອື່ນໆ ?**

(1) ມານຊາຕານສະຫຼາດຫຼາຍ ຖ້າຄົນເຮົາຄິດວ່າຕົນເອງດີ ແລະຊອບທຳເໝືອບຸກຄົນຂອງພະເຈົ້າຈິງໆ (ຜູ້ທີ່ໄດ້ບັງເກີດໃໝ່ຈິງໆ) ເຂົາເຫຼົ່ານັ້ນຈະບໍ່ຕະໜັກເຖິງຄວາມຈຳເປັນທີ່ຈະຕ້ອງໄດ້ຮັບການປົດປ່ອຍຈາກບາບແລະມານຮ້າຍ ແລະມານນັ້ນສາມາດເຫຼົ່ານັ້ນດີຂຶ້ນ ມານນັ້ນສາມາດກັນບໍ່ໃຫ້ເຂົາເຫຼົ່ານັ້ນຮັບເອົາຄວາມລອດຂອງພະເຈົ້າ ໂດຍບອກແກ່ເຂົາເຫຼົ່ານັ້ນວ່າ ເຂົາເປັນບຸດຂອງພະເຈົ້າແລ້ວ ເພາະວ່າພະເຈົ້າຊົງສ້າງເຂົາ ແລະພະເຈົ້າຈະບໍ່ລົງໂທດເຂົາໃຫ້ຕົກນະລົກ ໂດຍການທຳເຊັ່ນນີ້ ມານກໍສາມາດຫຼອກລວງໄດ້ຫຼາຍຄົນ ແລະການໃຫ້ຄົນເຫຼົ່ານັ້ນໄດ້ຮັບຄວາມລອດ

"ສ່ວນຄົນທີ່ເຊື່ອນັ້ນ ພະອົງຍຸກນີ້ໄດ້ກະທຳໃຈຂອງເຂົາໃຫ້ມືດໄປ ເພື່ອບໍ່ໃຫ້ໄດ້ເຫັນຄວາມສະຫວ່າງຂອງຂ່າວປະເສີດ ເລື່ອງພຣະສີຣິຂອງພຣະຄຣິສຜູ້ເປັນພຣະຊາຍຂອງພະເຈົ້າ" (2ໂກລິນໂທ 4:4)

2ໂກລິນໂທ 3:14

(2) ບາງຄົນມີຄວາມຈິງໃຈທີ່ຈະທຳຊົ່ວທຸກຊະນິດຫຼາຍກວ່າຄົນອື່ນໆ

"ແລະເພາະເຂົາບໍ່ເຫັນສົມຄວນທີ່ຈະຮູ້ຈັກພະເຈົ້າພະອົງຈຶ່ງປ່ອຍໃຫ້ເຂົາມີໃຈຊົ່ວ" (ໂຣມ 1:28)

(3) ມີບາງຄົນໄດ້ຮັບການອົບຮົມໃນທາງຂອງຄຣິສຕຽນ ເຖິງແມ່ນວ່າເຂົາເຫຼົ່ານັ້ນຈະຍັງບໍ່ໄດ້ຮັບເອົາພະເຢຊູເຈົ້າເປັນພະຜູ້ຊ່ວຍໃຫ້ລອດສ່ວນຕົວ ຄົນເຫຼົ່ານີ້ອາດຈະບໍ່ປະພຶດຊົ່ວເໝືອນຄົນເໝືອນດັ່ງລອດຈາກໄຟ" (1 ໂກລິນໂທ 3:11, 15)

“ຂ້າພະເຈົ້າແນ່ໃຈວ່າພະອົງຜູ້ຊົງສ້າງຕັ້ງຕົ້ນການດີໃນພວກທ່ານແລ້ວຈະຊົງກະທຳໃຫ້ສຳເລັດຈົນ
ເຖິງວັນແຫ່ງພະເຢຊູຄຣິດ“ (ຟີລິບ 1:6)

ໂຢຮັນ 10:28-29; 1ເປໂຕ 1:5; ຢູດາ 24

**29. ຜູ້ໄດ້ຮັບຄວາມລອດໃນພະຄຣິດຈະໄດ້ຮັບພະພອນຫຍັງ ?**

(1) ເຂົາເຫຼົ່ານັ້ນໄດ້ກາຍບຸດຂອງພະເຈົ້າ ສາມາດຮຽກພະອົງວ່າ“ພະບິດາ“

“ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພະອົງ ຜູ້ທີ່ເຊື່ອໃນພະນາມຂອງພະອົງ ພະອົງກໍ່ຊົງປະທານສິດທິ
ໃຫ້ເປັນບຸດຂອງພະເຈົ້າ“ (ໂຢຮັນ 1:12)

ໂຢຮັນ 1:13; ໂຣມ 8:14-16

(2) ເຂົາມີທຳມະຊາດໃໝ່ອັນໜຶ່ງທີ່ຄຽດບາບ ແລະຮັກສາຄວາມຊອບທັມ

“ເຫດສະນັ້ນ ຖ້າຜູ້ໃດຢູ່ໃນພະຄຣິດຜູ້ນັ້ນກໍ່ເປັນຄົນທີ່ຖືກສ້າງໃໝ່ແລ້ວ ສິ່ງສາລະ
ພັດທີ່ເກົ່າໆກໍ່ລ່ວງໄປ ນີ້ແນະກາຍເປັນສິ່ງໃໝ່ທັງນັ້ນ“ (2 ໂກລິນໂທ 5:17)

ໂຣມ 7:22

(3) ເຂົາມີຄວາມຊື່ນຊົມຍິນດີແລະສັນຕິສຸກຂອງພະອົງໃນຈິດໃຈບໍ່ວ່າສະຖານະການພາຍນອກ
ຈະເປັນເຊັ່ນໃດກໍ່ຕາມ

“ເຮົາມອບສັນຕິສຸກໃຫ້ແກ່ທ່ານທັງຫຼາຍ ສັນຕິສຸກຂອງເຮົາທີ່ໃຫ້ແກ່ທ່ານນັ້ນ ເຮົາໃຫ້ທ່ານບໍ່
ເໝືອນໂລກໃຫ້ ຢ່າໃຫ້ໃຈຂອງທ່ານວິຕົກແລະຢ່າຢ້ານເລີຍ“ (ໂຢຮັນ 14:27)

ໂຢຮັນ 16:33

(4) ເຂົາມີພະວິນຍານບໍລິສຸດໃນຈິດໃຈຂອງເຂົາ ພະວິນຍານນີ້ຈະຮັກສາເຂົາໄວ້ບໍ່ໃຫ້ພິນາດ
ແຕ່ມີຊີວິດນິລັນດອນ

ໂຢຮັນ 14:17; ໂຣມ 8:9; 1 ໂກລິນໂທ 3:16; ໂຢຮັນ 3:16; ໂຢຮັນ 5:24 ; ໂຢຮັນ
10:28-29

(5) ເຂົາໄດ້ຮັບການປອບປະໂລມຈິດໃຈແລະການຊົງນຳຈາກພະວິນຍານບໍລິສຸດຂະນະຢູ່ໃນ
ໂລກນີ້ແລະມີບ້ານເມືອງທີ່ແນ່ນອນໃນສະຫວັນເມື່ອເຂົາຕາຍ

“ແຕ່ອົງພະຜູ້ຊ່ວຍຄືພະວິນຍານບໍລິສຸດ ຊຶ່ງພະບິດາຈະຊົງໃຫ້ມາໃນນາມຂອງເຮົານັ້ນຈະຊົງ
ສອນທ່ານທັງຫຼາຍທຸກສິ່ງ“ (ໂຢຮັນ 14:26)

“ເມື່ອເຮົາໄດ້ຈັດຕຽມທີ່ໄວ້ສຳລັບທ່ານແລ້ວ ເຮົາຈະກັບມາອີກ ຮັບທ່ານໄປຢູ່ກັບເຮົາ
ເພື່ອວ່າເຮົາຢູ່ທີ່ໃດທ່ານທັງຫຼາຍຈະໄດ້ຢູ່ທີ່ນັ້ນດ້ວຍ“(ໂຢຮັນ 14:3)

ໂຢຮັນ 14:1-3; ໂຢຮັນ 16:13

## ບົດທີ່ 9
## ບຸດຂອງພະເຈົ້າ

**1. ພະເຈົ້າເປັນພະບິດາຂອງຄົນທຸກຄົນຫຼື ?**

ພະເຈົ້າເປັນຜູ້ສ້າງມະນຸດທຸກຄົນ ແລະຕາມຄວາມເວົ້ານັ້ນອາດຈະຖືວ່າພະອົງເປັນພະບິດາຂອງມວນມະນຸດ, ການສ້າງຂອງພະເຈົ້າຍ່ອມໝາຍເຖິງການເປັນເຈົ້າຂອງດ້ວຍ ແຕ່ບໍ່ຈຳເປັນຕ້ອງໝາຍເຖິງການເປັນພະບິດາຂອງສ່ວນບຸກຄົນ

**2. ພະເຈົ້າຍັງຊົງຄອງຄວາມເປັນເຈົ້າຂອງຂອງທຸກຄົນຫຼື?**

ໂດຍສິດທິແລະຄວາມຊອບທັມແລ້ວ ພະເຈົ້າຊົງຄອງຄວາມເປັນເຈົ້າຂອງ ແຕ່ເມື່ອມະນຸດຄູ່ທຳອິດຄື ອາດາມແລະເອວາ ຊຶ່ງເປັນຕົ້ນຕະກຸນຂອງມວນມະນຸດໄດ້ເປັນກົບຕໍ່ພະເຈົ້າໂດຍບໍ່ເຊື່ອຟັງພະອົງໂດຍຫັນຄວາມຈົ່ງຮັກພັກດີໄປໃຫ້ກັບມານຊາຕານ ດັ່ງນັ້ນ, ເຫຼົ່າມວນມະນຸດຕັ້ງແຕ່ນັ້ນມາກໍຕົກເປັນຂອງຊາຕານໂດຍການຮັບເປັນມໍລະດົກຕົກທອດມາແລະໂດຍການສົມໃຈເລືອກເອງ

> "ເມື່ອກ່ອນເຮົາທັງປວງເຄີຍດຳເນີນຊີວິດຕາມຕັນຫາຂອງຝ່າຍມະນຸດທັມມະດາເໝືອນຄົນເຫຼົ່ານັ້ນຄືດຳເນີນໄປຕາມຄວາມປາຖະໜາຂອງຮ່າງກາຍແລະຂອງຈິດໃຈ ຕາມສັນດານພວກເຮົາເປັນຄົນຄວນຖືກພຣະພິໂຣດເໝືອນດັ່ງຄົນອື່ນ" (ເອເຟໂຊ 2:3)
>
> "ຄົນທີ່ເປັນບຸກຂອງພະເຈົ້ານັ້ນມິໃຊ່ບຸດທາງເນື້ອໜັງ" (ໂຣມ 9:8)

**3. ຖ້າເຊັ່ນນັ້ນ ແມ່ນໃຜແດ່ທີ່ເປັນບຸດຂອງພະເຈົ້າ ?**

ຄົນທີ່ຕ້ອນຮັບພະເຢຊູຄຣິດເປັນພະຜູ້ຊ່ວຍໃຫ້ລອດ ຈຶ່ງຈະເປັນບຸດຂອງພະເຈົ້າ ພະເຢຊູກ່າວແກ່ພວກຟາລີຊາຍ ຊຶ່ງເປັນຜູ້ນຳທາງສາສະໜາໃນສະໄໝຂອງພະອົງວ່າ "ທ່ານທັງຫຼາຍມາຈາກພໍ່ຂອງທ່ານຄືມານ" (ໂຢຮັນ 8:44)

ເຖິງແມ່ນວ່າໂດຍສິດທິແລະຄວາມຊອບທັມແລ້ວ ມະນຸດເປັນຂອງພະເຈົ້າ ເພາະພະອົງເປັນຜູ້ສ້າງມະນຸດ ແຕ່ມະນຸດຈິງໃຈຈະເປັນພົນໄພ່ຂອງອານາຈັກຂອງຊາຕານ ຕົວຢ່າງທີ່ສະແດງໃຫ້ເຂົ້າໃຈຄືມີບຸກຄົນໆໜຶ່ງໆເປັນພົນລະເມືອງປະເທດໆໜຶ່ງຊຶ່ງມີກະສັດທີ່ດີແລະຍິ່ງໃຫຍ່ປົກຄອງບຸກຄົນຜູ້ນັ້ນບໍ່ຍອມເຊື່ອຟັງກະສັດຂອງເຂົາ ແລະຈົາໃຈທີ່ຈະໄປຢູ່ອີກປະເທດໜຶ່ງຊຶ່ງກຳລັງທຳສົງຄາມກັບປະເທດຂອງເຂົາ ເມື່ອເຂົາໄດ້ເຂົ້າໄປອາໄສຢູ່ໃນປະເທດນັ້ນ ພາຍໃຕ້ການປົກຄອງຂອງຜູ້ປົກຄອງທີ່ຊົ່ວຮ້າຍ ບຸດຂອງເຂົາ ຫຼານຂອງເຂົາ ເຫຼນຂອງເຂົາ ແລະຜູ້ສືບຕະກຸນຕໍ່ໆມາ ຈະເກີດມາພາຍໃຕ້ການປົກຄອງຂອງຜູ້ປົກຄອງທີ່ຊົ່ວຮ້າຍຄົນນັ້ນ ຊຶ່ງເປັນສັດຕູກັບກະສັດທີ່ດີຂອງປະເທດດັ້ງເດີມຂອງເຂົາ.

ຄົນທຸກຄົນໃນໂລກຢູ່ໃນອານາຈັກຂອງມານຕັ້ງແຕ່ເກີດ ເພາະວ່າອາດາມແລະເອວາ ບໍ່ເຊື່ອຟັງພະເຈົ້າ ແລະໄດ້ຫັນຄວາມຈົ່ງຮັກພັກດີທີ່ເຄີຍມີຕໍ່ພະເຈົ້າໄປໃຫ້ກັບມານຊຶ່ງເປັນສັດຕູຂອງພະເຈົ້າ, ຄົນເຫຼົ່ານັ້ນອາດຈະບໍ່ຮູ້ວ່າເຂົາສາມາດໄດ້ຮັບການປົດປ່ອຍໃຫ້ຫຼຸດພົ້ນຈາກອານາຈັກຂອງ

ມານໄດ້ ຫຼືບໍ່ເຊັ່ນນັ້ນເຂົາເຫຼົ່ານັ້ນອາດຈະບໍ່ຍອມຮັບການປົດປ່ອຍ ແລະດັ່ງນັ້ນຈຶ່ງຍັງຄົງເຊື່ອຟັງມານຕໍ່ໄປ ບຸກຄົນເຊັ່ນນັ້ນໄດ້ຮັບການຂະໜານນາມວ່າ ເປັນບຸດຂອງຊາຕານ ເພາະວ່າເຂົາກໍາເນີດຢູ່ໃຕ້ການປົກຄອງຂອງມານແລະຍັງຄົງເຊື່ອຟັງມັນຕໍ່ໄປເລື້ອຍໆ

"ຜູ້ໃດບໍ່ມີພະວິນຍານຂອງພະຄຣິດ(ຢູ່ພາຍໃນຕົວເຂົາ)ຜູ້ນັ້ນກໍບໍ່ເປັນຂອງພະອົງ" (ໂຣມ 8:9)

**4. ຖ້າເຊັ່ນນັ້ນ ເຫດໃດຄົນຫຼາຍຄົນຈຶ່ງມັກເອີ່ຍເຖິງສະພາບຄວາມເປັນພຣະຂອງພຣະເຈົ້າ ສະພາບຄວາມເປັນພີ່ນ້ອງຂອງມະນຸດ ໂດຍເຂົາໝາຍເຖິງວ່າຄົນທຸກຄົນໃນໂລກຕ່າງໆກໍເປັນບຸດຂອງພະເຈົ້າແລະທຸກຄົນຕ່າງກໍເປັນພີ່ນ້ອງກັນແລະກັນ ?**

ເພາະວ່າເຂົາບໍ່ເຂົ້າໃຈເຖິງຖານະປະຈຸບັນຂອງມະນຸດ ແລະສະພາບຂອງມະນຸດຕໍ່ພະເຈົ້າວ່າ ມະນຸດເປັນຄົນບາບໂດຍການກົດຕໍ່ພະເຈົ້າແລະຢູ່ໃຕ້ການພິພາກສາລົງໂທດໃຫ້ເຖິງຕາຍ ເຂົາບໍ່ໄດ້ເຂົ້າໃຈວ່າມະນຸດເປັນບຸດຂອງພະເຈົ້າໄດ້ໂດຍການບັງເກີດໃໝ່ ຊຶ່ງເປັນງານທີ່ພະວິນຍານບໍລິສຸດທໍາໃນຈິດໃຈຂອງຜູ້ທີ່ຕ້ອນຮັບພະເຢຊູຄຣິດເປັນພະຜູ້ຊ່ວຍໃຫ້ລອດສ່ວນຕົວ ຄົນທີ່ບັງເກີດໃໝ່ຈາກພະວິນຍານບໍລິສຸດຈຶ່ງຈະມີສິດທິຮຽກພະເຈົ້າວ່າພະບິດາ ແລະຄົນທີ່ບັງເກີດໃໝ່ແລ້ວເທົ່ານັ້ນທີ່ເປັນບຸກຂອງພະເຈົ້າແລະເປັນພີ່ນ້ອງໃນພະຄຣິດທີ່ແທ້ຈິງ

"ແຕ່ບັນດາຜູ້ທີ່ຕ້ອນຮັບພະອົງຜູ້ທີ່ເຊື່ອໃນພະນາມຂອງພະອົງກໍຊົງປະທານສິດທິໃຫ້ເປັນບຸດຂອງພະເຈົ້າ" (ໂຢຮັນ 1:12)

ໂຢຮັນ 1:12-13;ໂຢຮັນ 3:3; 5-6

**5. ເປັນຫຍັງພະເຢຊູຈຶ່ງກ່າວວ່າ "ທ່ານທັງຫຼາຍຕ້ອງບັງເກີດໃໝ່" ?**

ເພາະວ່າທາງດຽວເທົ່ານັ້ນທີ່ບຸກຄົນສາມາດເປັນບຸດຂອງພະເຈົ້າໄດ້ ກໍໂດຍການ"ບັງເກີດ" ການເກີດຝ່າຍຮ່າງກາຍທໍາໃຫ້ເຮົາເປັນຂອງພໍ່ແມ່ທາງຝ່າຍໂລກຂອງເຮົາ ແລະການບັງເກີດທາງຝ່າຍວິນຍານເທົ່ານັ້ນທໍາໃຫ້ເຮົາເປັນບຸກຂອງພະເຈົ້າ ການທີ່ຈະເປັນບຸດທີ່ແທ້ຈິງຈະຕ້ອງມີການບັງເກີດເຂົ້າສູ່ໃນຄອບຄົວ

"ພະເຢຊູກ່າວຕອບເຂົາວ່າ ເຮົາບອກຄວາມຈິງແກ່ທ່ານວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດໃໝ່ ຜູ້ນັ້ນຈະເຫັນແຜ່ນດິນຂອງພະເຈົ້າບໍ່ໄດ້"(ໂຢຮັນ3:3)

ໂຢຮັນ 1:12-13; ໂຢຮັນ 3:3, 5-6

**6. ບຸກຄົນຜູ້ນັ້ນຈະບັງເກີດໃໝ່ໄດ້ຢ່າງໃດ ?**

ການບັງເກີດໃໝ່ນີ້ເປັນງານຂອງພະວິນຍານບໍລິສຸດ ມະນຸດບໍ່ອາດຈະທໍາເອງໄດ້ໂດຍຄວາມພະຍາຍາມຂອງຕົນເອງ ພະວິນຍານບໍລິສຸດຈະຕ້ອງໃຫ້ຜູ້ນັ້ນເກີດຄວາມສໍານຶກວ່າໄດ້ທໍາຜິດບາບຂຶ້ນໃນຈິດໃຈ ແລະພະອົງກໍຈະນໍາບຸກຄົນຜູ້ນັ້ນໃຫ້ໄວ້ວາງໃຈໃນອົງພະເຢຊູຄຣິດເພື່ອຈະໄດ້ຮັບຄວາມລອດ ພະວິນຍານບໍລິສຸດເປັນຜູ້ທໍາງານໃນຈິດໃຈຂອງບຸກຄົນນັ້ນແລະກໍໃຫ້ທໍາມະຊາດແກ່ໃໝ່ແກ່ເຂົາ ເຮົາບໍ່ອາດເຂົ້າໃຈໄດ້ວ່າມັນເກີດຂຶ້ນໄດ້ຢ່າງໃດ
ເຮົາພຽງແຕ່ຕ້ອງຮັບຄວາມຈິງນີ້ໄວ້ ທໍາມະຊາດ

ອັນໃໝ່ນີ້ໄດ້ປ່ຽນຊີວິດຂອງບຸກຄົນຜູ້ນັ້ນທຳໃຫ້ເຂົາກຽດບາບແລະຮັກພະເຈົ້າ ພະວິນຍານບໍລິສຸດໄດ້ສະເດັດເຂົ້າມາປະທັບໃນຈິດໃຈຂອງບຸກຄົນນັ້ນ ແລະເປັນພະຍານກັບວິນຍານຈິດຂອງບຸດຄົນຜູ້ນັ້ນວ່າ ບັດນີ້ເຂົາໄດ້ເປັນບຸດຂອງພະເຈົ້າແລະຮຽກວ່າ "ອັບບາ" ຊຶ່ງແປວ່າ ພະບິດາ ດັ່ງນັ້ນເຂົາກໍໄດ້ບັງເກີດໃໝ່ແລະໄດ້ກາຍເປັນບຸດຂອງພະເຈົ້າ

> "ພະວິນຍານນັ້ນເປັນພະຍານຮ່ວມກັບວິນຍານຈິດຂອງເຮົາທັງຫຼາຍວ່າ ເຮົາທັງຫຼາຍເປັນບຸດຂອງພະເຈົ້າ" (ໂຣມ 8:16)

ໂຢຮັນ 1:12-13; ໂຢຮັນ 3:3, 5; ໂຣມ 8:14, 15-16;ກາລາເທຍ 4:6; 1ໂຢຮັນ 5:10

**7. ຖ້າບຸກຄົນຜູ້ໜຶ່ງບັງເກີດໃໝ່ ແລະໄດ້ເປັນບຸດຂອງພະເຈົ້າ ເຂົາຈະຍັງທຳບາບອີກບໍ ?**

ເຂົາຍັງທຳບາບຢູ່ ເຂົາຈະທຳບາບນ້ອຍເຖິງແມ່ນວ່າເຂົາໄດ້ເປັນບຸດຂອງພະເຈົ້າແລ້ວ ແຕ່ເຂົາກຽດຊັງບາບ ເຂົາຍັງຄົງຢູ່ໃນໂລກທີ່ເຕັມໄປດ້ວຍຄວາມຜິດບາບແລະການທົດລອງ ທຳມະຊາດເກົ່າຂອງເຂົາຈະນຳໃຫ້ເຂົາທຳບາບ

ໝູຍ່ອມມັກເກືອກກົ້ວຕົວເອງຢູ່ໃນຂີ້ຕົມ ແຕ່ແກະບໍ່ມັກເຮັດເຊັ່ນນັ້ນ ບຸກຄົນຜູ້ອາດຈະຕົກລົງໄປໃນຄວາມຜິດບາບໄດ້ເໝືອນກັບແກະ ທີ່ອາດຈະຕົກລົງໄປໃນຂີ້ຕົມໄດ້ ແຕ່ເຂົາຜູ້ນັ້ນຍ່ອມຈະຮູ້ສຶກບໍ່ສະບາຍໃຈ ຈົນກວ່າເຂົາຈະຫັນມາຫາພຣະຄຣິດ ເພື່ອຮັບການຊຳລະໃຫ້ບໍລິສຸດ

> "ຖ້າເຮົາທັງຫຼາຍຈະວ່າເຮົາບໍ່ມີບາບ ເຮົາກໍລວງຕົນເອງແລະສັດຈະບໍ່ໄດ້ຢູ່ໃນເຮົາເລີຍ" (ໂຢຮັນ 1:8)

ໂຣມ 8:12; 1 ໂຢຮັນ 1:10; 1 ໂຢຮັນ 1:9; 1ໂຢຮັນ 2:1

**8. ເມື່ອບຸກຄົນຜູ້ໜຶ່ງຕ້ອນຮັບພະຄຣິດເປັນພະຜູ້ຊ່ວຍໃຫ້ລອດແລ້ວທຳມະຊາດເກົ່າທີ່ເປັນບາບຈະຖືກ "ຖອນຮາກ" ອອກໄປໝົດເຊັ່ນນັ້ນຫຼື**

ເປົ່າເລີຍຫາມິໄດ້ ພະວິນຍານບໍລິສຸດໄດ້ໃຫ້ທຳມະຊາດໃໝ່ແກ່ເຂົາຜູ້ນັ້ນກໍຈິງຢູ່ ແຕ່ເຂົາກໍຍັງມີທຳມະຊາດບາບເກົ່າໆ ທີ່ໄດ້ຮັບຕົກທອດມາຈາກບັນພະບຸລຸດ ທຳມະຊາດເກົ່າອັນນີ້ຈະຕໍ່ສູ້ກັບທຳມະຊາດໃໝ່ສະເໝີ ແຕ່ພະວິນຍານບໍລິສຸດພາຍໃນບຸດຂອງພະເຈົ້າຈະຊ່ວຍໃຫ້ເຂົາມີອຳນາດທີ່ຈະຊະນະທຳມະຊາດເກົ່າ ຖ້າເຂົາຜູ້ນັ້ນພຽງແຕ່ຈະຍອມໃຫ້ພະວິນຍານບໍລິສຸດຄວບຄຸມຊີວິດຂອງເຂົາ

> "ໂອ, ເຮົານີ້ຊ່າງເປັນຄົນທຸກຍາກເຂັນໃຈແທ້ໜໍ ໃຜແດ່ຈະຊ່ວຍເຮົາໃຫ້ພົ້ນຈາກຮ່າງກາຍທີ່ຕ້ອງຕາຍນີ້. ເຮົາຂອບພະຄຸນພະເຈົ້າໂດຍທາງພະເຢຊູຄຣິດເຈົ້າຂອງເຮົາທັງຫຼາຍ ເຫດດັ່ງນີ້ທາງດ້ານຈິດໃຈເຮົາກໍຍອມຮັບໃຊ້ຕາມຂໍ້ບັນຍັດຂອງພະເຈົ້າ ແຕ່ດ້ານຮ່າງກາຍຂອງເຮົາກໍເປັນຂ້ອຍຂ້າຢູ່ໃຕ້ກົດແຫ່ງຄວາມຜິດບາບ" (ໂຣມ 7:24-25)

ໂຣມ7:18, 22-23; 1ໂຢຮັນ 1:8; 1ໂຢຮັນ 2:1

**9. ຖ້າບຸດຂອງພະເຈົ້າທຳບາບ ເຂົາຈະໝົດສະພາບເປັນບຸດຂອງພະເຈົ້າເຊັ່ນນັ້ນບໍ ?**

ບໍ່ເລີຍ ເຂົາເປັນແຕ່ບຸດທີ່ບໍ່ເຊື່ອຟັງຂອງພະເຈົ້າບໍ່ມີໃຜສາມາດທຳໃຫ້ເຂົາກັບໄປຢູ່ສະພາບກ່ອນບັງເກີດໃໝ່ອີກໄດ້ຄວາມສຳພັນສັນບິດາແລະບຸດທາງຝ່າຍໂລກມີອາດຈະຂາດໄດ້ສັນໃດຄວາມສຳພັນລະຫວ່າງພະເຈົ້າພະບິດາກັບບຸດຂອງພະອົງ ກໍມີອາດຈະຂາດໄດ້ສັນນັ້ນ

"ເພາະອົງພະຜູ້ເປັນເຈົ້າຊົງຕີສອນຜູ້ທີ່ພະອົງຊົງຮັກແລະເມື່ອພະອົງຊົງຮັບໃຊ້ຜູ້ໃດເປັນບຸດ ພະອົງກໍຊົງຕີສອນຜູ້ນັ້ນ" (ເຮັບເລີ 12:6)

ເຮັບເລີ 12: 6-8

**10. ຖ້າເຊັ່ນນັ້ນບຸດຂອງພະເຈົ້າສາມາດທຳບາບໄດ້ຕາມໃຈຊອບ ແລະຍັງຄົງເປັນບຸດຂອງພະເຈົ້າເຊັ່ນນັ້ນຫຼື ?**

ຖ້າເຂົາໄດ້ບັງເກີດໃໝ່ເຂົ້າສູ່ຄອບຄົວຂອງພະເຈົ້າ ພະວິນຍານບໍລິສຸດຈະປະທານທຳມະຊາດໃໝ່ທີ່ທຳໃຫ້ເຂົາກຽດບາບ ແລະຮັກພະເຈົ້າແລະຄວາມຊອບທັມແກ່ເຂົາ ຖ້າເຂົາຊອບທຳບາບມັນກໍເປັນເຄື່ອງພິສູດໄດ້ຢ່າງດີທີ່ດຽວວ່າ ເຂົາບໍ່ໃຊ່ບຸດຂອງພະເຈົ້າ

"ທ່ານຈົ່ງພິຈາລະນາເບິ່ງຕົວຂອງທ່ານວ່າ ທ່ານຕັ້ງຢູ່ໃນຄວາມເຊື່ອຫຼືບໍ ຈົ່ງຊັນສູດຕົວຂອງທ່ານເຖີດ" (2ໂກລິນໂທ 13:5)

ໂຣມ 7:22; 2 ໂກລິນໂທ 5:17

**11. ພະເຈົ້າທຳໂທດບຸດຂອງພະອົງ ເມື່ອເຂົາທຳບາບຫຼືບໍ ?**

ຖືກແລ້ວພະອົງທຳໂທດ ຄວາມຜິດບາບຍ່ອມນຳມາຊຶ່ງການທຳໂທດສະເໝີ ບຸດຂອງພະເຈົ້າໄດ້ຮັບການທຳໂທດສຳລັບບາບຂອງເຂົາໃນໂລກນີ້

" ຢ່າຫລົງເລີຍ ທ່ານຈະຫລອກລວງພະເຈົ້າບໍ່ໄດ້ ເພາະວ່າຜູ້ໃດຫວ່ານສິ່ງໃດ ກໍຈະກ່ຽວເກັບສິ່ງນັ້ນ (ຄາລາເຕຍ6:7)

ນອກຈາກນັ້ນຖ້າບຸດຂອງພະເຈົ້າເຮັດບາບ ເຂົາຈະສູນເສຍຄວາມຊື່ນຊົມຍິນດີໃນຄວາມລອດຕົວຢ່າງກະສັດດາວິດເຮັດຜິດບາບ ເຂົາໄດ້ອະທິຖານຂໍພະເຈົ້າຄືນຄວາມຊື່ນຊົມຍິນດີແຫ່ງຄວາມລອດໃຫ້ແກ່ເຂົາ (ເພງສັນລະເສີນ 51:12 )